# ການພັດທະນານະວັດຕະກຳສົ່ງເສີມທັກສະການເວົ້າ
# ພາສາອັງກິດ ໂດຍໃຊ້ເຕັກນິກການສອນ
# ບົດສົນທະນາສຳລັບນັກສຶກສາ
# ວິທະຍາໄລຄູສາລະວັນ

# Innovative development to promote English speaking skills by using conversational teaching techiques for student salavan Teacher Training Colleage

**ປທ ນາງ ພິດສາຄອນ ຕານສະຫວັດ**

**ວິທະຍາໄລຄູສາລະວັນ**

**ສົກປີ 2023**

# ການພັດທະນານະວັດຕະກຳສົ່ງເສີມທັກສະການເວົ້າ
# ພາສາອັງກິດ ໂດຍໃຊ້ເຕັກນິກການສອນ
# ບົດສົນທະນາສຳລັບນັກສຶກສາ
# ວິທະຍາໄລຄູສາລະວັນ
# Innovative development to promote English speaking skills by using conversational teaching techiques for student salavan Teacher Training Colleage

**ປທ ນາງ ພິດສາຄອນ ຕານສະຫວັດ**

**ວິທະຍາໄລຄູສາລະວັນ**

**ສົກປີ 2023**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໝໝໝໝໝໝໝໝ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ...110...ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າວິໄຈ ເລື່ອງການພັດທະນານະວັດຕະກໍາສິ່ງເສີມທັກສະການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນ ບົດສົນທະນາສໍາລັບນັກສຶກສາ ວິທະຍາໄລຄູສາລະວັນ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ-ກວດກາທາງດ້ານເນື້ອໃນ ແລະ ຫຼັກການ, ອະນຸກໍາມະການສະພາເຫັນວ່າ ບົດຄົ້ນຄວ້າວິໄຈນີ້ມີຄວາມຖືກຕ້ອງຕາມລະບຽບຫຼັກການວິໄຈ. ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງຂອງຜົນງານທາງວິທະຍາສາດ ແລະ ເປັນລິຂະສິດຂອງວິທະຍາໄລຄູສາລະວັນ.

| **ຄະນະກໍາມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ອຈ ປທ ຄໍາຊິງ ຈັນທະວົງສັກ | ........................................ |
| ທ່ານ ຊອ ປທ ມອນໄຊ ຂັນທະຈັກ | ........................................ |
| ທ່ານ ຊອ ປອ ໄພທອງ ພົງສົງຄາມ | ........................................ |

**ທີ່ສາລະວັນ, ວັນທີ** ...06 JUL 2023...

**ປະທານສະພາວິທະຍາສາດ**

ອຈ. ບ ລົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໙໙໙໙໑໑໑໑

ວິທະຍາໄລຄູສາລະວັນ

ຫ້ອງວິທະຍາສາດສັງຄົມ

ເລກທີ..030.......ຫກ.ສຄ

# ໃບຮັບຮອງການກວດແກ້ການຄົ້ນຄວ້າວິໄຈ

## ຫົວຂໍ້:ການພັດທະນານະວັດຕະກຳສົ່ງເສີມທັກສະການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນ ບົດສົນທະນາສຳລັບນັກສຶກສາ ວິທະຍາໄລຄູສາລະວັນ

**ຫ້ອງການ:** ວິທະຍາສາດສັງຄົມ

**ຜູ້ຄົ້ນຄວ້າວິໄຈ:**

ທ່ານ ປທ ນ ພິດສາຄອນ ຕານສະຫວັດ

| **ຄະນະກຳມະການກວດແກ້ບົດ** | ລາຍເຊັນ |
| --- | --- |
| **ທ່ານ ອຈ ນ ສົມປອງ ແສນທະວິສຸກ** | ........................................ |
| **ທ່ານ ປທ ນ ຄອນສະຫວັນ ກົມສະຫວັດດີ** | ........................................ |
| **ທ່ານ ຊອ ນ ສົນນະຄອນ ສຸວັນນະໄລ** | ........................................ |

**ທີ່ສາລະວັນ, ວັນທີ** 04 JUL 2023

**ຫ້ອງການວິທະຍາສາດສັງຄົມ**

ນ. ຄຳຂຽງ ຈັນທະວົງສິງ

# ໃບກຽດຕິຄຸນ

ບົດວິໄຈສະບັບນີ້ສຳເລັດສົມບູນໄດ້ໂດຍໄດ້ຮັບຄວາມກະລຸນາຊວ່ຍເຫຼືອ ແລະ ຄຳແນະນຳເປັນຢ່າງດີຈາກ ຄະນະທີ່ປຶກສາ ທ່ານ ປທ ນ ຄອນສະຫວັນ ກິມສະຫວັດດີ, ທ່ານ ຊອ ປທ ຂັນໄຊ ໝື່ນໂສພາ ແລະ ທ່ານ ອຊ ນ ສິນນະຄອນ ສຸວັນນະໄລ ທີ່ໃຫ້ຄຳແນະນຳຢ່າງໃກ້ຊິດ ແລະ ຊ່ວຍເຫຼືອປັບປຸງເຮັດໃຫ້ບົດວິໄຈສະບັບ ນີ້ສົມບູນຍິ່ງຂຶ້ນ ເຊິ່ງຜູ້ວິໄຈຂໍສະແດງຄວາມຂອບໃຈມາຍັງບັນດາທ່ານເປັນຢ່າງສູງ.

ນອກຈາກນີ້ແລ້ວຍັງໄດ້ຮັບຄວາມກະລຸນາຈາກທ່ານ ຜູ້ອຳນວຍການ ແລະ ຄະນະອຳນວຍການ ທີ່ໄດ້ໃຫ້ ຄວາມສະດວກໃນການເຮັດວິໄຈໃນຄັ້ງນີ້ໃຫ້ບັນລຸຜົນໄດ້ຢ່າງດີ.

ຂໍສະແດງຄວາມຮູ້ບຸນຄຸນອັນໃຫຍ່ຫຼວງມາຍັງຄະນະອຳນວນການວິທະຍາໄລຄູສາລະວັນທີ່ໄດ້ໃຫ້ການ ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກເປັນຢ່າງສູງໃນການວິໄຈໃນຄັ້ງນີ້. ຂໍສະແດງຄວາມຂອບໃຈມາຍັງເພື່ອນ ຮ່ວມງານຄູ-ອາຈານ ພາຍໃນວິທະຍາໄລຄູສາລະວັນ ທີ່ໄດ້ໃຫ້ການຊ່ວຍເຫຼືອດ້ວຍດີສະເໝີມາ.

# ບົດຄັດຫຍໍ້

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອການພັດທະນານະວັດຕະກຳສົ່ງເສີມທັກສະການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນ ບົດສົນທະນາສຳລັບນັກສຶກສາ ວິທະຍາໄລຄູສາລະວັນ ທີ່ໄດ້ຮັບການສອນໂດຍໃຊ້ເຕັກນິກການສອນບົດສົນທະນາກ່ອນ ແລະ ຫຼັງຮຽນ ແລະ ສຶກສາທັດສະນະຄະຕິຕໍ່ການສອນພາສາອັງກິດໂດຍໃຊ້ການສອນບົດສົນທະນາ. ກຸ່ມຕົວຢ່າງໃນການວິໄຈຄັ້ງນີ້ເປັນນັກສຶກສາສາຍພາສາລາວ ທີ່ວິທະຍາໄລຄູສາລະວັນ ໃນສົກຮຽນ 2022 – 2023 ຈຳນວນ 33 ຄົນ ເຄື່ອງມືທີ່ໃຊ້ໃນການວິໄຈປະກອບດ້ວຍ ແຜນການຈັດການຮຽນ-ການສອນ, ແບບທົດສອບວັດທັກສະໃນການເວົ້າພາສາອັງກິດ ແລະ ແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ, ວິເຄາະຂໍ້ມູນໂດຍການຫາຄ່າສະເລ່ຍ, ຄ່າສ່ວນຮ້ອຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ຜົນການວິໄຈສະຫຼຸບໄດ້ດັ່ງນີ້:**

1) ນັກຮຽນມີຄະແນນທັກສະໃນການເວົ້າພາສາອັງກິດສະເລ່ຍ 51.94 ແລະ ຫຼັງຮຽນ ສະເລ່ຍ 81.11 ເມື່ອທົດສອບຄວາມແຕກຕ່າງຂອງຄ່າສະເລ່ຍພົບວ່າ ທັກສະໃນການເວົ້າພາສາອັງກິດຂອງນັກຮຽນທີ່ໄດ້ຮັບການສອນໂດຍໃຊ້ເຕັກນິກການສອນບົດສົນທະນາຫຼັງການຮຽນສູງກວ່າກ່ອນຮຽນ.
2) ນັກຮຽນມີທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາຢູ່ໃນລະດັບດີ.

# ສາລະບານ

ໃບກຽດຕິຄຸນ……………………………………………………………..……………………………….a
ບົດຄັດຫຍໍ້………………………………………………………..………..……………………………b
ສາລະບານ………………………………………………………………………..……………………… c
ສາລະບານຕາຕະລາງ ………………………………………………………………..……………………e
ບົດທີ 1 ບົດນໍາ ……………………………………………………………………..…..………………… 1
1. ຄວາມເປັນມາ ແລະ ຄວາມສໍາຄັນຂອງບັນຫາ ………………………………………..………..………1
2. ຄໍາຖາມການວິໄຈ ……………………………………………………………………………………..3
3. ຈຸດປະສົງຂອງການວິໄຈ ……………………………………………………………..………..………3
4. ສົມມຸດຕິຖານຂອງການວິໄຈ ……………………………………………………………..……………3
5. ຂອບເຂດຂອງການວິໄຈ …………………………………………………..……………..……...3
5.1 ຂອບເຂດປະຊາກອນ ແລະ ກຸ່ມຕົວຢ່າງ ……………………………..…………..…………...4
5.2 ຂອບເຂດດ້ານເນື້ອໃນ …………………………...…………………………..………….4
5.3 ຂອບເຂດດ້ານຕົວປ່ຽນ ……………………………………………………....…………4
5.4 ຂອບເຂດດ້ານເວລາ ……………………………………………..…………...…..………4
6. ຂອບເຂດຂອງການວິໄຈ……………………………..……………………………...…..……… 5
7. ນິຍາມສັບສະເພາະ …………………………………………………………………...……...…… 5
8. ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບຈາການວິໄຈ………………………………………...………..… 5
ບົດທີ 2 ທິດສະດີ ເອກະສານ ແລະ ບົດວິໄຈທີ່ກ່ຽວຂ້ອງ …………………………………..……..……….…7
1. ແນວຄິດພື້ນຖານກ່ຽວກັບການສອນພາສາອັງກິດເພື່ອການສື່ສານ …………………………..………...…7
2. ການສອນການເວົ້າພາສາອັງກິດ…………………………………..……………………..…...…….…... 8
2.1 ຄວາມໝາຍຂອງການເວົ້າ ……………………………………..…………………..…..……...…8
2.2 ຈຸດມຸ່ງໝາຍຂອງການເວົ້າ ……………………………………..…………………....……….....…9
2.3 ອົງປະກອບຂອງການເວົ້າ …………………………………..………………….....………......10
2.4 ແນວຄິດກ່ຽວກັບການສອນການເວົ້າ …………………………………..…………..………..12
2.5 ການປະເມີນຄວາມສາມາດໃນການເວົ້າພາສາອັງກິດ ………………………..……………...…..14
3. ການສອນບົດສົນທະນາພາສາອັງກິດ …………………………………..………..………………...18
3.1 ຄວາມໝາຍຂອງການສົນທະນາ…………………………………..……………..…………..…… 18
3.2 ໂຄງສ້າງຂອງການສົນທະນາ……………………………………..…………...……..………. 18
3.3 ການສອນທັກສະການສົນທະນາ…………………………………..…………...…………..….. 21
3.4 ກິດຈະກໍາໃນການສອນບົດສົນທະນາ…………………………………..……………..………. 23
3.5 ແນວຄິດກ່ຽວກັບອົງປະກອບການສອນສົນທະນາ …………………………….....…….………24
4. ທັດສະນະຄະຕິ …………………………………..…………………………..…………………....…26
4.1 ຄວາມໝາຍຂອງທັດສະນະຄະຕິ ……………………………………..……………….....…..…...26
4.2 ທັດສະນະຄະຕິຕໍ່ການຮຽນພາສາຕ່າງປະເທດ …………………………………………………27

4.3 ວິທີການວັດທັດສະນະຄະຕິ…………………………………………………………..…..………. 27
5. ບົດວິໄຈທີ່ກ່ຽວຂ້ອງ…………………………………………………………………………...… 29
5.1 ບົດວິໄຈພາຍໃນປະເທດ ……………………………………………………………..………...…29
5.2 ບົດວິໄຈຕ່າງປະເທດ ……………………………………………………………………...……...…29
ບົດທີ 3 ວິທີການດໍາເນີນການວິໄຈ …………………………………..…………………....………...…33
1. ປະຊາກອນ ແລະ ກຸ່ມຕົວຢ່າງ ………………………...……...……………..…..…………...33
1.1 ປະຊາກອນ ………………………………………..…..……...…………………..…..…………...33
1.2 ກຸ່ມຕົວຢ່າງ…………………………………..……...……...………………...…..…………... 33
2. ເຄື່ອງມືໃນການເກັບກໍາຂໍ້ມູນ………………..……………...…………………...…..……….... 33
2.1 ສັນຍາລກເຄື່ອງມືທີ່ໃຊ້ໃນການວິໄຈ ……………………………...……..…..……………….33
2.2 ສ້າງເຄື່ອງມືໃນການວິໄຈ …………………………...……...…………...………...………...34
3. ວິທີຮອບຮວມຂໍ້ມູນ ……………………………...…………...……………………..………..…...39
4. ວິທີການວິເຄາະຂໍ້ມູນ ………………………………...…...…...……………………...………..…...40
4.1 ສະຖິຕິການວິເຄາະຂໍ້ມູນພື້ນຖານ ……………..……………...…..……………………..…...40
4.2 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ……………….…………...…….……………………..…...40
4.3 ເກນການແປຜົນຄະແນນວັດທັດສະນະຄະຕິ……………………………...……...……..…… 40
5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ……………………..………...……...………………..…..……41
ບົດທີ 4 ການວິເຄາະຂໍ້ມູນ ………………………………..……………………..……………...…………...43
1. ຜົນການວິເຄາະຫາປະສິດທິພາບຂອງບົດສອນ…………………………...…………..………... 43
1.1 ຜົນການວິເຄາະຫາປະສິດທິພາບຂອງ $E_1$………………………………...……....…………… 43
1.2 ຜົນການຫາປະສິດທິພາບຂອງຜົນການຮຽນ $E_2$ ………………………………...………..…....44
1.3 ຜົນການຫາປະສິດທິພາບຂອງບົດສອນ $E_1/E_2$ ………………………………......……..…...45
2. ຜົນການວິເຄາະຄ່າດັດສະນີປະສິດທິຜົນ (E.I) ……………………………...……..………....…...46
3. ຜົນການວິເຄາະທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນ ………………………………..……...47
ບົດທີ 5 ສະຫຼຸບ, ອະພິປາຍຜົນ ແລະ ຂໍ້ສະເໜີແນະ ……………………………………...………...……...48
1. ຈຸດປະສົງຂອງການວິໄຈ ………………………………...……...……………………...…...……...48
2. ສະຫຼຸບຜົນ ……………………………..………………………………………...…..………...48
3. ອະພິປາຍຜົນ…………………………..…………………...……………………………….... 49
4. ຂໍ້ສະເໜີແນະ …………………………………......………..……………………..…….……...50
4.1 ຂໍ້ສະເໜີແນະໃນການນໍາການວິໄຈໄປໃຊ້……………………………………...……………… 50
4.2 ຂໍ້ສະເໜີແນະສໍາລັບການເຮັດວິໄຈໃນຄັ້ງຕໍ່ໄປ…………………………...………..……..….. 51
ເອກະສານອ້າງອີງ ……………………………………………………………………………………...52
ເອກະສານຊ້ອນທ້າຍເຄື່ອງມືໃນການວິໄຈ ……………………...………...…..……………………57
ປະຫວັດຜູ້ວິໄຈ ……………………………………...……...…….………………...…………...109

# ສາລະບານຕາຕະລາງ


ຕາຕະລາງທີ 1 ຜົນການວິເຄາະຫາປະສິດທິພາບຂອງ $E_1$ ................................................ 45

ຕາຕະລາງທີ 2 ຜົນການຫາປະສິດທິພາບຂອງຜົນການຮຽນ $E_2$ ..........................................46

ຕາຕະລາງທີ 3 ຜົນການຫາປະສິດທິພາບຂອງບົດສອນ $E_1/E_2$ ..........................................47

ຕາຕະລາງທີ 4 ຜົນການວິເຄາະຄ່າດັດສະນີປະສິດທິຜົນ (E.I) ..........................................48

ຕາຕະລາງທີ 5 ຜົນການວິເຄາະທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນ ................................49

# ບົດທີ 1

# ບົດນຳ

## 1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

ພາສາອັງກິດເປັນພາສາສາກົນທີ່ໃຊ້ຕິດຕໍ່ສື່ສານກັນລະຫວ່າງປະເທດ ແລະ ທົ່ວໂລກ ຄວາມສຳຄັນທີ່ນຳມາໃຊ້ໃນດ້ານເສດຖະສາດ, ສັງຄົມ, ການເມືອງ ແລະ ຍັງເປັນພາສາທີ່ສຳຄັນໃນການສຶກສາຕໍ່ໃນລະດັບທີ່ສູງຂຶ້ນທັງໃນ ແລະ ຕ່າງປະເທດເພາະຕຳລາທາງວິຊາການສ່ວນໃຫ່ຍຈັດພິມເປັນພາສາອັງກິດ, ຜູ້ທີ່ຮູ້ພາສາອັງກິດຈຶ່ງສາມາເຂົ້າໃຈຄວາມຄິດເຫັນທັດສະນະຄະຕິວັດທະນະທຳຂອງຊາດຕະຫຼອດເຖິງຄວາມກ້າວຫນ້າທາງວິທະຍາການໃຫມ່ໆ ແລະ ຄວາມເຄື່ອນໄຫວຂອງໂລກທັງດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ອື່ນໆໄດ້ເປັນຢ່າງດີ, ພັກ ແລະ ລັດເຮົາໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຂອງການສຶກສາທີ່ມີຕໍ່ການພັດທະນາປະເທດດັ່ງປະກົດຢູ່ໃນແຜນຍຸດທະສາດການພັດທະນາການສຶກ 20 ປີ ນັບແຕ່ປີ 2001-2020 ທີ່ລະບຸໄວ້ວ່າສັດຕະວັດທີ XXI ເປັນຍຸກໂລກາພິວັດ ແລະ ເປັນຍຸກແຫ່ງຂໍ້ມູນຂ່າວສານການປະຕິບັດທາງວິທະຍາສາດ ແລະ ເທັກໂນໂລຢີເຮັດໃຫ້ປະເທດມີລັກສະນະການພັດທະນາ ແບບກ້າວກະໂດດເກືອບທຸກດ້ານ (ກະຊວງສຶກສາທິການ ແລະ ກິລາ, 2008: 5)

ການພັດທະນາຕົນເອງ ແລະ ປະເທດຊາດຕໍ່ໄປໃນຊ່ວງ 20 ປີແຫ່ງການປ່ຽນແປງນີ້ລະບົບການສຶກສາແຫ່ງຊາດໄດ້ຮັບການພັດທະນາທາງດ້ານປະລິມານ ແລະ ຄຸນນະພາບດີຂຶ້ນເປັນລຳດັບມີລັກສະນະການ ປະສົມປະສານລະຫວ່າງຮູບແບບການສຶກສາຂອງຊາດກັບການສຶກສາຮູບແບບໃໝ່ທີ່ໄດ້ຮັບບົດຮຽນການ ພັດທະນາການສຶກສາຈາກປະເທດຕ່າງໆ ຫຼື ທົ່ວໂລກກະຊວງສຶກສາໄດ້ກຳນົດເປົ້າໝາຍຍຸດທະສາດ ແລະ ວິທີດຳເນີນການຢ່າງລະອຽດຊັດເຈນເນັ້ນປັບປຸງລະບົບການສຶກສາໃຫ້ເຂັ້ມແຂງມີການຂະຫຍາຍ ຮອບດ້ານໃຫ້ມີຄຸນນະພາບດີຂຶ້ນໃຫ້ໃກ້ຄຽງກັບມາດຕະຖານສາກົນພ້ອມທັງມີເປົ້າຫມາຍໃນແຜນພັດທະນາເສດຖະກິດສັງຄົມນັບຕັ້ງແຕ່ປີ 2010, 2015 ແລະ ປີ 2020 (ກະຊວງສຶກສາທິການ ແລະ ກິລາ 2008)

ນອກຈາກນີ້ນະໂຍບາຍຂອງລັດຖະບານໄດ້ດຳເນີນການປະຕິຮູບການສຶກສາທັງ 6 ດ້ານເຊິ່ງມີຈຸດປະສົງເພື່ອ :

- ພັດທະນາຊັບພະຍາກອນມະນຸດໃຫ້ສອດຄ່ອງກັບຍຸດທະສາດແຫ່ງການພັດ ແລະ ໂຄງຮ່າງເສດຖະກິດຂອງປະເທດ.
- ປະຕິຮູບທັດສະນະຄະຕິ ແລະ ການປ່ຽນແປງລະບົບໂຄງສ້າງຂອງການສຶກສາ
- ດຳເນີນການບົນພື້ນຖານການມີສ່ວນຮ່ວມຂອງປວງຊົນ ແລະ ຂະບວນການສຶກສາດຳເນີນໄປຢ່າງຕໍ່ເນື່ອງ.
- ຂະຫຍາຍພູມປັນຍາຄວາມເປັນເອກກະລັກທາງດ້ານວັດທະນະທຳ ແລະ ຄວາມເປັນປຶກແຜ່ນຄວາມເຂັ້ມແຂງຂອງປະຊາຊົນລາວທັງຊາດ.
- ຂະຫຍາຍໂອກາດທາງການສຶກສາສົ່ງເສີມຄວາມສາມາດ ແລະ ຊ່ວຍປັບປຸງຊີວິດການເປັນຢູ່ຂອງຂອງປະຊາຊົນໃຫ້ດີຂຶ້ນ ພ້ອມທັງຍົກລະດັບຄວາມສາມາດ ໃນການແຂ່ງຂັນ ແລະ ການເຊື່ອມໂຍງປະເທດໃຫ້ເຂົ້າກັບສາກົນ.
- ຍົກຖານະ ແລະ ເຊີດຊູບົດບາດຂອງຄູໃຫ້ສູງຂຶ້ນ.

ການເວົ້າເປັນສ່ວນຫນຶ່ງຂອງການສື່ສານທີ່ເຂົ້າໃຈງ່າຍທີ່ສຸດຂອງມະນຸດເປັນຂະບວນການສື່ສານການສ້າງຄວາມໝາຍກ່ຽວພັນກັບການຮັບ ແລະ ການສົ່ງຂໍ້ມູນ (Brown,J., 1994) ແລະ (Burns, A & Invee,

H.. 1997) ການເວົ້າເປັນທັກສະທາງພາສາເຊິ່ງມີຄວາມສຳຄັນໃນຊີວິດປະຈຳວັນໃນທຸກໆມື້ນີ້ມີການຕິດຕໍ່ສື່ສານເຊິ່ງທັກສະພາສາທີ່ຖືກໃຊ້ຫຼາຍທີ່ສຸດຄື:

- ການຟັງ 45 ການເວົ້າ 30 ການອ່ານ 16 ແລະ ການຂຽນ 9 (Feyton, C. M., 1991:173-180) ໂດຍປົກກະຕິນັກຮຽນຕ້ອງໃຫ້ຄວາມສຳຄັນກັບທຸກໆທັກສະສຳຫຼັບທັກສະການຟັງນັກຮຽນມີຊ່ອງທາງຊອກຮູ້ຮໍ່າຮຽນໄດ້ຫລາຍຊ່ອງທາງເຊັ່ນ: ຈາກໂທລະພາບ, ເກມໂຊ, ກາຕູນ, ເພງ, ສະຖານີວິດທະຍຸຕ່າງໆທີ່ຈັດລາຍການເປັນພາສາອັງກິດ ທັກສະການອ່ານນັກຮຽນມີໂອກາດທີ່ຝຶກກັບຕໍາລາ, ປື້ມຮຽນຕ່າງໆ, ວາລະສານ, ໜັງສືພິມແລະອື່ນໆ. ສໍາລັບທັກສະການຂຽນນັກຮຽນສາມາດຝຶກໃນເວັບໄຊຕ່າງໆເຊັ່ນ: (Facebook), (Wifi), (E-mail) ແລະ ເວັບໃຊ ໃນການສົນທະນາເປັນການເປັນການເປີດໂອກາດຫຼາກຫຼາຍໃຫ້ກັບ ທຸກໆຄົນແຕ່ນັກຮຽນລາວເຮົາມີໂອກາດໜ້ອຍທີ່ສຸດທີ່ຈະໄດ້ໃຊ້ທັກສະການເວົ້ານອກຫ້ອງຮຽນຫຼືຈະໄດ້ ສົນທະນາກັບເຈົ້າຂອງພາສາ. ດັ່ງນັ້ນ,ທຸກສະຖາບັນການສຶກສາຈຶ່ງໄດ້ບັນຈຸຫຼັກສູດການສອນພາສາອັງກິດ ເພື່ອການສື່ສານ, ການເວົ້າພາສາອັງກິດ, ການສົນທະນາພາສາອັງກິດເພື່ອເປັນແນວທາງໃຫ້ຜູ້ຮຽນໄດ້ຝຶກເວົ້າ ສົນທະນາເປັນພາສາອັງກິດເພີ່ມຫຼາຍຂຶ້ນຕາມທີ່ກະຊວງສຶກສາທິການ ແລະ ກິລາໄດ້ໃຫ້ນັກຮຽນໄດ້ຮຽນ ພາສາອັງກິດເປັນພາສາສາກົນ.

ໃນການເວົ້າພາສາອັງກິດ, ການສົນທະນາ (Conversation) ເປັນສ່ວນຫນຶ່ງທີ່ມີຄວາມສໍາຄັນເຊິ່ງການ ສົນທະນາໝາຍເຖິງການລົມກັນຂອງບຸກຄົນຕັ້ງແຕ່ 2 ຄົນຂຶ້ນໄປການເຮັດໃຫ້ຜູ້ຟັງ ແລະ ຜູ້ເວົ້າເກີດຄວາມ ຄຸ້ນເຄີຍກັນ (Brown, G. & Yule, G., 1983: 6) ນອກຈາກນີ້ການສົນທະນາເປັນການສື່ສານໃນ ສະຖານະການຈິງເຊິ່ງເປັນການແລກປ່ຽນຄວາມຄິດ ແລະ ຄວາມສາມາດທາງພາສາມັກຈະຮູ້ຕົວເອງຈາກຂໍ້ມູນທີ່ຖືກປ້ອນເຂົ້າທັງໝົດທັງຄວາມສາມາດທາງພາສາ ແລະ ພາສາທີ່ສື່ສານອອກມາຈາກຄວາມຮູ້ສຶກ ການ ສົນທະນາເລີ່ມຕົ້ນດ້ວຍການທັກທາຍ ແລະ ດໍາເນີນໄປຕາມເປົ້າຫມາຍຂອງຄູ່ສົນທະນາບົດບາດຂອງຜູ້ເວົ້າ ແລະ ຜູ້ຟັງມີຄວາມຊັດເຈນຫົວຂໍ້ສົນທະນາມີຄວາມຕໍ່ເນື່ອງມີການສ້າງຫົວຂໍ້ສົນທະນາໃໝ່ໆໃນຊ່ວງເວລາ ທີ່ເໝາະສົມການສົນທະນາເປັນອັນສິ້ນສຸດເມື່ອຄູ່ສົນທະນາຢຸດຕິການສົນທະນາ. ໃນຊ່ວງເວລາຂອງການສົນທະນາຜູ້ເວົ້າ ແລະ ຜູ້ຟັງຕ້ອງເລີ່ມຕົ້ນຖາມຄໍາຖາມລົງຄໍາເຫັນທີ່ຊັດເຈນໃນການສົນທະນາລວມເຖິງການ ຮ້ອງຂໍການອອກຄໍາສັ່ງໃນລັກສະນະພາສາທີ່ສະແດງອອກເຊິ່ງບຸກຄົນສາມາດຮຽນຮູ້ໄດ້ການສົນທະນາເປັນ ສ່ວນຫນຶ່ງຂອງຮູບແບບການສື່ສານທີ່ເປັນພື້ນຖານໃນການມີສ່ວນຮ່ວມຂອງບຸກຄົນ ແລະ ເປັນຈິດຈະກໍາທີ່ ຕອບສະໜອງຄວາມຕ້ອງການທາງສັງຄົມຂອງບຸກຄົນ, ນອກຈາກນີ້ການສົນທະນາຍັງມີຜົນຕໍ່ເປົ້າໝາຍໃນການໃຊ້ພາສາຂອງມະນຸດຄືການສື່ຄວາມໝາຍຂອງສາລະຈາກຜູ້ເວົ້າແຕ່ລະຝ່າຍລວມທັງການສ້າງສະຖານະ ການພາບ ແລະ ສະແດງຕົນຕໍ່ສັງຄົມຂອງຜູ້ສົນທະນາອີກດ້ວຍ (Dornyei, z. & Thurrell, S., 1992:3-5) ໄດ້ກ່າວເຖິງເຕັກນິກການສົນທະນາປະກອບດ້ວຍ 7 ຂັ້ນຕອນຄື: ການເປີດບົດສົນທະນາ (Openings), ການປ່ຽນກັນເວົ້າ (Turn taking), ການຂັດຈັງຫວະການເວົ້າ (Interrupting), ການເວົ້າໂຕ້ຕອບຂອງຄູ່ສົນທະນາ (Adjacency –pairs), ຮູບແບບການສົນທະນາໃນຊີວິດປະຈໍາວັນ (Conversation routines), ການປ່ຽນຫົວຂໍ້ສົນທະນາ (Topic shift) ແລະ ການປິດການສົນທະນາ (Closings).

ຜ່ານການສັງເກດ, ການຝຶກຕົວຈິງ, ວິທີການສອນ ແລະ ອີງຕາມບົດສະຫຼຸບປະຈໍາປີຂອງສູນການສຶກສາ ນອກໂຮງຮຽນແຂວງບໍລິຄໍາໄຊ ເຫັນວ່ານັກຮຽນປະມານ 70 ບໍ່ສາມາດຖາມ, ຕອບພາສາອັງກິດ

ກັບຄູໄດ້. ນອກຈາກນີ້ຄະແນນພາສາອັງກິດກໍ່ຕໍ່າກ່ວາເກນ, ສາເຫດຍ້ອນການຈັດການຮຽນ-ການສອນຄູແມ່ນໃຊ້ການ ສອນແບບເອົາຄູເປັນໃຈກາງ ໂດຍສະເພາະວິຊາພາສາອັງກິດ, ນັກຮຽນຄອງຖ້າເອົາຄວາມຮູ້ຈາກຄູ, ນັກຮຽນ ບໍ່ກ້າເວົ້າພາສາອັງກິດ ແລະ ຄູກໍ່ບໍ່ເຄີຍໃຊ້ການສອນແບບສົນທະນາ.

ດັ່ງນັ້ນ ຜູ້ວິໄຈມີຄວາມສົນໃຈຢາກສຶກສາການນໍາໃຊ້ເຕັກນິກການສອນບົດສົນທະນາເຂົ້າໃນການ ສອນເວົ້າພາສາອັງກິດສໍາລັບນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ.

## 2. ຄໍາຖາມຂອງການວິໄຈ

ໃນການວິໄຈຄັ້ງນີ້, ຜູ້ວິໄຈໄດ້ກໍານົດຄໍາຖາມວິໄຈອອກມາ ໄດ້ດັ່ງລຸ່ມນີ້:

1. ການນໍາໃຊ້ເຕັກນິກການສອນບົດສົນທະນາເຂົ້າໃນການສອນເວົ້າພາສາອັງກິດ ສໍາລັບນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ມີປະສິດທິພາບໃນລະດັບໃດ?
2. ການນໍາໃຊ້ເຕັກນິກການສອນບົດສົນທະນາເຂົ້າໃນການສອນເວົ້າພາສາອັງກິດ ສໍາລັບນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ມີປະສິດທິຜົນໃນລະດັບໃດ?
3. ທັດສະນຄະຕິມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ສໍາລັບນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ເປັນຄືແນວໃດ ?

## 3. ຈຸດປະສົງຂອງການວິໄຈ

1) ເພື່ອສຶກສາປະສິດທິພາບຂອງບົດສອນ ໂດຍໃຊ້ເຕັກນິກການສອນບົດສົນທະນາ ເຂົ້າໃນການສອນ ເວົ້າພາສາອັງກິດສໍາລັບນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ຕາມເກນ 80/80.
2) ເພື່ອສຶກສາປະສິດທິຜົນຂອງການຮຽນຂອງນັກຮຽນ ໂດຍໃຊ້ເຕັກນິກການສອນບົດສົນທະນາ ເຂົ້າໃນການສອນເວົ້າພາສາອັງກິດສໍາລັບນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ.
3) ເພື່ອສຶກສາທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການ ສອນບົດສົນທະນາສໍາຫຼັບນັກຮຽນຊັ້ນ ສໍາລັບນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ.

## 4. ສົມມຸດຕິຖານຂອງການວິໄຈ

1) ປະສິດທິພາບຂອງບົດສອນ ໂດຍໃຊ້ເຕັກນິກການສອນບົດສົນທະນາສູງກວ່າເກນທີ່ກໍານົດ 80/80.
2) ຜົນສໍາເລັດທາງການຮຽນຂອງນັກຮຽນ ໂດຍການນໍາໃຊ້ເຕັກນິກການສອນບົດສົນທະນາ ເຂົ້າໃນການ ສອນເວົ້າພາສາອັງກິດ ມີປະສິດທິຜົນໃນລະດັບດີ.
3) ທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດ ສົນທະນາໃນລະດັບດີ.

## 5. ຂອບເຂດຂອງການວິໄຈ

### 5.1. ຂອບເຂດປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ເປັນກຸ່ມຕົວຢ່າງແມ່ນສໍາລັບນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ຈໍານວນ 33 ຄົນ, ຍິງ 17 ຄົນ

## 5.2. ຂອບເຂດດ້ານເນື້ອໃນ

ຜູ້ວິໄຈໄດ້ຄັດເລືອກເນື້ອໃນມາຈາກປຶ້ມແບບຮຽນ ແລະ ສິ່ງຕ່າງໆທີ່ສອດຄ່ອງກັບຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້ ແລ້ວນຳມາຈັດເປັນແຜນຈັດການຮຽນຈຳນວນ 4 ແຜນໆລະ 2 ຊົ່ວໂມງຊຶ່ງມີຫົວຂໍ້ດັ່ງນີ້:

1). Greeting ການທັກທາຍ

2). About the Family ກ່ຽວກັບຄອບຄົວ

3). My community ຊຸມຊົນຂອງຂ້ອຍ

4). Shopping ການຊອກຊື້ເຄື່ອງ

## 5.3. ຂອບເຂດດ້ານຕົວປ່ຽນ

1. ຕົວປ່ຽນຕົ້ນແມ່ນການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກ ການສອນບົດສົນທະນາ (Dornyei, Z & Thurrell, S., 1992: 3-5) ປະກອບມີ 7 ຂັ້ນຕອນຄື:

1) ການເປີດບົດສົນທະນາ (Openings)

2) ການປ່ຽນກັນເວົ້າ (Turn-taking)

3) ການຂັດຈັງຫວະການເວົ້າ (Interrupting)

4) ການເວົ້າໂຕ້ຕອບຂອງຄູ່ສົນທະນາ ( Adjacency pairs)

5) ຮູບແບບການສົນທະນາໃນຊີວິດປະຈຳວັນ (Conversational routines)

6) ການປ່ຽນຫົວຂໍ້ສົນທະນາ (Topic shift)

7) ການປິດບົດສົນທະນາ ແລະ ການປະເມີນຜົນ (Closing and evaluation)

**2. ຕົວປ່ຽນຕາມປະກອບມີ:**

1) ປະສິດທິພາບຂອງບົດສອນ ໂດຍໃຊ້ເຕັກນິກການສອນບົດສົນທະນາ

2) ປະສິດທິຜົນຂອງການຮຽນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ

3) ທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ

**5.4. ຂອບເຂດດ້ານເວລາ**

ໃນພາກຮຽນທີ 2

**6. ຂອບແນວຄິດຂອງການວິໄຈ**

| ຕົວປ່ຽນຕົ້ນ | ຕົວປ່ຽນຕາມ |
|---|---|
| ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ<br>1) ການເປີດບົດສົນທະນາ<br>2) ການປ່ຽນກັນເວົ້າ<br>3) ການຂັດຈັງຫວະການເວົ້າ<br>4) ການເວົ້າໂຕ້ຕອບຂອງຄູ່ສົນທະນາ<br>5) ຮູບແບບການສົນທະນາໃນຊີວິດປະຈຳວັນ<br>6) ການປ່ຽນຫົວຂໍ້ສົນທະນາ<br>7) ການປິດບົດສົນທະນາ ແລະ ການປະເມີນຜົນ | - ປະສິດທິພາບບົດສອນໂດຍໃຊ້ເຕັກນິກການສອນບົດສົນທະນາ<br>- ປະສິດທິຜົນຂອງການຮຽນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ<br>- ທັດສະນະຄະຕິຂອງນັກສຶກສາທີ່ມີຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ |

**ພາບປະກອບທີ** 1: ຂອບເຂດແນວຄິດຂອງການວິໄຈ

## 7. ນິຍາມສັບສະເພາະ

ໃນການວິໄຈຄັ້ງນີ້ຜູ້ວິໄຈໄດ້ໃຫ້ຄວາມໝາຍຂອງຄຳສັບສະເພາະຕາມຕົວປ່ຽນທີ່ສຶກສາມາວິໄຈຕາມລາຍລະອຽດດັ່ງລຸ່ມນີ້:

**ເຕັກນິກການສອນບົດສົນທະນາ** ໝາຍເຖິງການຈັດກິດຈະກຳການຮຽນ - ການສອນພາສາອັງກິດ ເພື່ອຝຶກທັກສະໃນການເວົ້າພາສາອັງກິດ ໂດຍໃຊ້ການສອນບົດສົນທະນາ.

**ທັກສະການເວົ້າພາສາອັງກິດ** ໝາຍເຖິງພຶດຕິກຳຂອງນັກຮຽນໃນການເວົ້າພາສາອັງກິດໂດຍສາມາດອອກສຽງໄດ້ຢ່າງຖືກຕ້ອງ ເວົ້າຖືກຕ້ອງຕາມຫຼັກໄວຍະກອນ ສາມາດໃຊ້ຄຳສັບໄດ້ຢ່າງເໝາະສົມ ເວົ້າໄດ້ວ່າຫຼ່ຽນໄຫຼ ແລະ ສາມາດສະແດງທ່າທາງປະກອບການເວົ້າໄດ້ ໂດຍວັດຈາກແບບທົດສອບວັດຄວາມສາມາດໃນການເວົ້າພາສາອັງກິດທີ່ຜູ້ວິໄຈສ້າງຂຶ້ນ.

**ທັດສະນະຄະຕິ** ໝາຍເຖິງຄວາມຮູ້ສຶກ ແລະ ຄວາມຄິດເຫັນຂອງນັກຮຽນ ການກະທຳ ຫຼື ພຶດຕິກຳທີ່ນິຍົມຊົມຊອບທັງໃນດ້ານດີ ຫຼື ທາງບວກ ແລະ ດ້ານບໍ່ດີ ຫຼື ທາງລົບ ກ່ຽວກັບການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ.

## 8. ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບຈາກການວິໄຈ

ຜົນທີ່ໄດ້ຮັບຈາກການວິໄຈໃນຄັ້ງນີ້ຈະເປັນປະໂຫຍດຕໍ່ຜູ້ວິໄຈ ແລະ ເປັນແນວທາງໃນການຈັດກິດຈະກຳການຮຽນຮູ້ໃນຫ້ອງຮຽນ ດັ່ງຕໍ່ໄປນີ້:

1) ເຮັດໃຫ້ຮູ້ທັກສະໃນການເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາຂອງ ນັກສຶກສາ ສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ໂດຍໃຊ້ເຕັກນິກການສອນບົດສົນທະນາຕາມແນວຄິດຂອງ (Dornyei, Z & Thurrell, S).
2) ໄດ້ແຜນການຈັດການຮຽນຮູ້ ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ.

3) ເຮັດໃຫ້ຮູ້ທັດສະນະຄະຕິຂອງນັກສຶກສາ ສາຍພາສາລາວ ປີທີ 3 ວິທີ່ມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ.

4) ເພື່ອເປັນແນວທາງໃນການຈັດກິດຈະກຳການຮຽນ - ການສອນ ເວົ້າພາສາອັງກິດໃຫ້ເຂົ້າໃຈໃນລະດັບຫ້ອງອື່ນຕໍ່ໆໄປ.

# ບົດທີ 2

## ທິດສະດີ ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ການສຶກສາຄົ້ນຄວ້າວິໄຈຄັ້ງນີ້, ຜູ້ວິໄຈໄດ້ເນັ້ນໃສ່ການພັດທະນາທັກສະໃນການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາສຳຫຼັບນັກສຶກສາຍພາສາລາວ ປີທີ 3 ວິທະຍາໄລຄສາລະວັນ ຜູ້ຄົ້ນຄວ້າໄດ້ສຶກສາຄົ້ນຄວ້າເອກະສານ ແລະ ບົດວິໄຈທີ່ກ່ຽວຂ້ອງຄື:

1. ແນວຄິດພື້ນຖານກ່ຽວກັບການສອນພາສາອັງກິດເພື່ອການສື່ສານ
2. ການສອນເວົ້າພາສາອັງກິດ
3. ການສອນບົດສົນທະນາພາສາອັງກິດ
4. ທັດສະນະຄະຕິຕໍ່ການໃຊ້ເຕັກນິກການສອນບົດສົນທະນາ
5. ບົດຄົ້ນຄ້ວາທີ່ກ່ຽວຂ້ອງ

### 1. ແນວຄິດພື້ນຖານກ່ຽວກັບການສອນພາສາອັງກິດເພື່ອການສື່ສານ

ການສອນພາສາຕ່າງປະເທດໃນໄລຍະຜ່ານມາຈະເຫັນໄດ້ວ່າມີວິທີການສອນທີ່ແຕກຕ່າງກັນຫຼາຍຕາມຫຼັກການພື້ນຖານ ແລະ ວິທີການສອນພາສາທີ່ແຕກຕ່າງກັນນັ້ນກໍ່ຍ້ອນນັກພາສາສາດເປັນຜູ້ປະຍຸກຄົ້ນຄິດ ຂຶ້ນເພື່ອຮັບໃຊ້ໃນການສອນທີ່ມີສະຖານະການແຕກຕ່າງກັນເພື່ອເປັນການປັບປຸງການຮຽນ-ການສອນໃຫ້ມີປະສິດທິພາບສູງຂຶ້ນການສອນພາສາອັງກິດຕາມແນວທາງການສອນພາສາເພື່ອການສື່ສານເປັນອີກແນວທາງ ຫນຶ່ງທີ່ເກີດຂຶ້ນປະ

ມານກາງປີ 1960 ມີນັກວິໄຈຫຼາຍທ່ານທີ່ຊ່ອຍຄິດຄົ້ນພັດທະນາທິດສະດີຫຼັກການຕ່າງໆ ລວມເຖິງວິທີການຝຶກຕາມຂັ້ນຕອນ ເຊິ່ງເຮັດໃຫ້ການສອນພາສາເພື່ອການສື່ສານປະສົບຜົນສຳເລັດ ແລະ ໄດ້ຮັບຄວາມນິຍົມຢ່າງຫຼວງຫຼາຍໃນປະເທດອັງກິດເນື່ອງຈາກເປັນແນວທາງການສອນທີ່ເນັ້ນໃນເລື່ອງການ ສື່ສານຕາມສະຖານະການໃນການໃຊ້ພາສາຕົວຈິງຫຼາຍກ່ວາເນັ້ນການສອນໃນຮູບແບບ ຫຼື ໂຄງສ້າງຂອງ ພາສາພຽງແບບດຽວ (Widdowson, H. C, 1990: 123).

Widdowson, H. G (1990: 25-27) ໄດ້ກ່າວໄວ້ວ່າແນວທາງການສອນພາສາເພື່ອການສື່ສານນັ້ນມີເຫດຜົນມາຈາກການທີ່ຜູ້ຮຽນສາມາດສ້າງປະໂຫຍກທີ່ຖືກຕ້ອງຕາມຫຼັກໄວຍະກອນໃນຫ້ອງຮຽນໄດ້ເປັນຢ່າງດີແຕ່ກໍ່ຍັງບໍ່ສາມາດທີ່ຈະນຳເອົາຄວາມຮູ້ທາງພາສາທີ່ໄດ້ຮຽນມານັ້ນໄປໃຊ້ໃນສະຖານະການຕົວຈິງໄດ້ ຢ່າງເໝາະສົມ, ຖືກຕ້ອງຕາມບໍລິບົດທີ່ເປັນແບບນີ້ກໍ່ເນື່ອງມາຈາກການຮູ້ກົກເຄົ້າໃນພາສາກົກເຄົ້າໃນພາສາຂອງຜູ້ຮຽນຍັງບໍ່ ພຽງພໍ, ການສອນພາສາເພື່ອການສື່ສານຈຶ່ງມຸ້ງເນັ້ນໃຫ້ຜູ້ຮຽນສາມາດນຳເອົາຄວາມຮູ້ທາງພາສາທີ່ມີໄປໃຊ້ໃນ ຊີວິດປະຈຳວັນໄດ້ ເຊິ່ງນອກຈາກຜູ້ຮຽນຕ້ອງມີຄວາມຮູ້ໃນເລື່ອງໄວຍະກອນພາສາແລ້ວ ຕ້ຍ ຄວາມຮູ້ໃນສິ່ງທີ່ມີຢູ່ນອກເຫນືອຕົວພາສາເຊັ່ນ: ສະຖານະພາບຫຼືຄວາມສຳພັນຂອງຄູ່ສົນທະ ອາຍຸ, ເພດ, ການສຶກສາ, ຄວາມສຸພາບຕະຫຼອດຮອດເຈດຕະນາທັງທາງກົງ ແລະ ທາງອ້ອມ, : ຈັດການຮຽນຮູ້ພາສາອັງກິດຈະໄດ້ຮັບຜົນດີຫຼາຍທີ່ສຸດ ຖ້າຄູຜູ້ສອນໃຫ້ຜູ້ຮຽນໄດ້ໃຊ້ພາສາໃນສະ ທີ່ສອດຄ່ອງກັບສະຖານະການຕົວຈິງ ທັງຄູ ແລະ ຜູ້ຮຽນກຽວຂ້ອງກັບການຈັດການຮຽນການສອງ ໃຫ້ຜູ້ຮຽນສາມາດສື່ສານໄດ້, ມີການຈັດການສອນທີ່ໃຊ້ເຕັກນິກຢ່າງຫຼາກຫຼາຍມາຫມູນໃຊ້ໃຫ້ເໝາະສົມກັບບໍ.ລິບົດຂອງຕົນເອງ ໂດຍເນັ້ນໃຫ້ຜູ້ຮຽນຝຶກການໃຊ້ພາສາໃນສະຖານະການທີ່ຄ້າຍຄືກັບສະຖານະການຕົວຈິງຈຶ່ງເປັນເລື່ອງສຳຄັນທີ່ຄູ ແລະ ຜູ້ທີ່ກຽວຂ້ອງຕ້ອງເອົາໃຈໃສ່ໃນການສ້າງເຕັກນິກການສອນເພື່ອຕອບສະໜອງຄວາມຕ້ອງການໃຊ້ພາສາໃນສັງຄົມປະຈຸບັນ.

Krashen, S. D (1984: 32-34) ກ່າວວ່າການຈັດການຮຽນການສອນພາສາອັງກິດມີຈຸດມຸ້ງໝາຍ ໃຫ້ຜູ້ຮຽນໄດ້ພັດທະນາການໃຊ້ພາສາອັງກິດໃນການສື່ສານ. ດັ່ງນັ້ນ, ຜູ້ສອນຕ້ອງຈັດຂະບວນການຮຽນຮູ້ ໃຫ້ຜູ້ຮຽນໄດ້ມີໂອກາດຝຶກທັກສະການໃຊ້ພາສາອັງກິດໃຫ້ຫຼາຍທີ່ສຸດທັງໃນ ແລະ ນອກຫ້ອງຮຽນເພື່ອໃຫ້ຜູ້ຮຽນສາມາດສື່ສານກັບຄົນຕ່າງປະເທດ ແລະ ນໍາເອົາພາສາອັງກິດໄປນໍາໃຊ້ໃນຊີວິດປະຈໍາວັນໄດ້ຢ່າງ ຖືກຕ້ອງ, ເໝາະສົມ. ຜູ້ສອນຕ້ອງຈັດກິດຈະກໍາການຮຽນ ການສອນໃຫ້ຜູ້ຮຽນໄດ້ຮຽນຮູ້ຕາມຈຸດປະສົງ ແລະ ເປົ້າຫມາຍທີ່ກໍານົດໄວ້.

Littlewood, W. (1995: 17) ອະທິບາຍວ່າການສອນພາສາເພື່ອການສື່ສານເປັນແນວທາງໃນການສອນທີ່ບໍ່ຈໍາກັດຄວາມສາມາດຂອງຜູ້ຮຽນໄວ້ພຽງແຕ່ຄວາມຮູ້ທາງໂຄງສ້າງດ້ານໄວຍະກອນເທົ່ານັ້ນແຕ່ສະໜັບສະໜູນໃຫ້ຜູ້ຮຽນໄດ້ມີການພັດທະນາການໃຊ້ທັກສະໃນການເວົ້າພາສາທຸກໆທັກສະໂດຍສໍາພັນກັບຄວາມສາມາດທາງໄວຍະກອນເຂົ້າກັບຍຸດທະສາດການສື່ສານດ້ວຍວິທີການທີ່ຖືກຕ້ອງ ແລະ ເໝາະສົມກັບ ກາລະເທສະໃນຊີວິດຕົວຈິງ, ຜູ້ຮຽນຕ້ອງສໍາພັນກັບການສື່ສານທີ່ເປັນການໃຊ້ພາສາໃນຮູບແບບຕ່າງໆຢ່າງ ຫຼວງຫຼາຍ. ດັ່ງນັ້ນ, ການສອນພາສາເພື່ອການສື່ສານຄວນໃຫ້ຜູ້ຮຽນຄຸ້ນເຄີຍກັບການໃຊ້ພາສາໃນຊີວິດປະຈໍາວັນ ແລະ ນໍາພາສາຄຸ້ນເຄີຍນັ້ນໄປໃຊ້ໄດ້.

ສະຫຼຸບວ່າການສອນພາສາເພື່ອການສື່ສານເປັນການເຮັດໃຫ້ຜູ້ຮຽນໄດ້ພັດທະນາການໃຊ້ພາສາອັງກິດເພື່ອການສື່ສານໃນສະຖານະການຕົວຈິງ ຄູຜູ້ສອນຕ້ອງເນັ້ນໃສ່ການຈັດຂະບວນການຮຽນຮູ້ໂດຍໃຊ້ເຕັກນິກທີ່ຫຼາກຫຼາຍມາໝູນໃຊ້ໃຫ້ເໝາະສົມກັບຜູ້ຮຽນ ເພື່ອໃຫ້ຜູ້ຮຽນຄຸ້ນເຄີຍກັບການໃຊ້ພາສາໃນຊີວິດປະຈໍາວັນ ແລະ ນໍາພາສາທີ່ຄຸ້ນເຄີຍນັ້ນໄປໃຊ້ໃນການສື່ສານໄດ້.

## 2. ການສອນເວົ້າພາສາອັງກິດ

ການເວົ້າເປັນການສື່ສານຂອງມະນຸດທີ່ມີຄວາມສໍາຄັນຕໍ່ຊີວິດຄວາມເປັນຢູ່ ແລະ ການປະກອບອາຊີບ ມະນຸຈະຕ້ອງເວົ້າສື່ສານໃຫ້ບຸກຄົນອື່ນທີ່ກ່ຽວຂ້ອງເຂົ້າໃຈກ່ຽວກັບກິດຈະກໍາຕ່າງໆທີ່ດໍາເນີນຢູ່ໃນທຸກໆ ວັນ. ຖ້າສື່ສານກັນໄດ້ດີການເຮັດວຽກງານຕ່າງໆຈະດໍາເນີນໄປຢ່າງມີປະສິດທິພາບ.

### 2.1. ຄວາມຫມາຍຂອງການເວົ້າ

ມີນັກທິດສະດີ ແລະ ນັກພາສາສາດຫຼາຍທ່ານໄດ້ໃຫ້ຄວາມຫມາຍຂອງການເວົ້າໄວ້ດັ່ງນີ້:

Byene, D. (1987: 22-24) ໄດ້ໃຫ້ຄວາມໝາຍຂອງການເວົ້າໄວ້ວ່າ ແມ່ນຄວາມສາມາດໃນການ ເວົ້າພາສາອັງກິດ ແລະ ມີຄວາມກ່ຽວຂ້ອງກັບລະບົບການຟັງຂອງມະນຸດໂດຍກົງ ເຊິ່ງຜູ້ເວົ້າເຮັດໜ້າທີ່ເປັນສົ່ງສານ ໃຫ້ກັບຜູ້ຟັງໃນການສື່ສານສອງທາງຄືການແລກປ່ຽນຂໍ້ມູນສື່ສານຊຶ່ງກັນ ແລະ ກັນ ແລະ ແລກປ່ຽນ ບົດບາດກັນເປັນຜູ້ເວົ້າ ແລະ ຜູ້ຟັງ.

ສຸມິດຕາ ອັງວັດທະນະກຸນ ( 2540: 167) ເວົ້າເຖິງຄວາມຫມາຍຂອງການເວົ້າວ່າ: ການເວົ້າເປັນການຖ່າຍທອດຄວາມຮູ້ສຶກນຶກຄິດຄວາມເຂົ້າໃຈໃຫ້ຜູ້ຟັງໄດ້ຮັບຮູ້ ແລະ ເຂົ້າໃຈຈຸດມຸ່ງຫມາຍຂອງ ໃຊ້ຍຸດທະວິທີການເວົ້າທີ່ເຮັດໃຫ້ການສື່ສານມີປະສິດທິພາບ.

ງາມພິ້ງ ຮຸ່ງໂລດ ( 2548: 3) ໄດ້ໃຫ້ຄວາມຫມາຍຂອງການເວົ້າວ່າ: ການເວົ້າແມ່ນການໃຊ້ຖ້ອຍຄໍານໍ້າສຽງລວມທັງກິລິຍາອາການ ເພື່ອຖ່າຍທອດຄວາມຄິດຄວາມຮູ້ສຶກຄວາມຕ້ອງການຂອງຜູ້ເວົ້າໃຫ້ຜູ້ຟັງຮັບຮູ້ ແລະ ເກີດການຕອບສະໜອງ.

ຈາກຄວາມຫມາຍຂອງການເວົ້າໃນເບື້ອງຕົ້ນສະຫຼຸບໄດ້ວ່າການເວົ້າໝາຍເຖິງການໃຊ້ຖ້ອຍຄຳສຳນຽງ, ພາສາ ໃນການຖ່າຍທອດຄວາມຮູ້ສຶກນຶກຄິດຄວາມຮູ້ຄວາມເຂົ້າໃຈຄວາມຕ້ອງການເພື່ອໃຫ້ເກີດຄວາມເຂົ້າໃຈຄວາມຕ້ອງການເພື່ອໃຫ້ເກີດຄວາມເຂົ້າໃຈລະຫວ່າງກັນກົງຕາມຈຸດມຸ່ງໝາຍຂອງການເວົ້າໃນແຕ່ລະຄັ້ງການເວົ້າເປັນພຶດຕິກຳການສື່ສານດ້ວຍການ ໃຊ້ພາສາທີ່ຄຽງຄູ່ໄປກັບການຟັງ ເວົ້າໄດ້ວ່າ: ເມື່ອມີຜູ້ເວົ້າກໍຕ້ອງມີຜູ້ຟັງຈຶ່ງຈະເກີດຄວາມສົມບູນຈະຂາດຝ່າຍ ໃດຝ່າຍໜຶ່ງບໍ່ໄດ້ການເວົ້າກໍແມ່ນພຶດຕິກຳການສື່ສານຂອງມະນຸດ ໂດຍອາໃສພາສາຖ້ອຍຄຳນໍ້າສຽງຕະຫຼອດ ຮອດກິລິຍາທ່າທາງ ແລະ ອື່ນໆ ເພື່ອຖ່າຍທອດຄວາມຮູ້ສຶກນຶກຄິດຂອງຕົນໃຫ້ແກ່ຜູ້ອື່ນເພື່ອໃຫ້ເກີດການ ຕອບສະໜອງຕາມຄວາມຕ້ອງການ.

## 2.2. ຈຸດມຸ່ງຫມາຍຂອງການເວົ້າ

ມີນັກທິດສະດີ ແລະ ນັກພາສາສາດຫຼາຍທ່ານໄດ້ເວົ້າເຖິງຈຸດມຸ່ງຫມາຍຂອງການເວົ້າໄວ້ດັ່ງນີ້:

ກຸນທະລີ ໄວຍະນິດ (2545: 6-10) ໄດ້ເວົ້າເຖິງຈຸດປະສົງຂອງການເວົ້າດັ່ງນີ້:

ການເວົ້າກັບເດັກນ້ອຍຜູ້ໃຫຍ່ຜູ້ຍິງຜູ້ຊາຍບຸກຄົນຕ່າງອາຊີບ ຫຼື ຕ່າງລະດັບການສຶກສາຫຼາຍໜ້ອຍເທົ່າ ໃດກໍ່ຕາມລ້ວນແຕ່ມີຈຸດມຸ່ງໝາຍຂອງການເວົ້າ 3 ລັກສະນະຄື:

1) ການເວົ້າເພື່ອໃຫ້ຄວາມຮູ້ ແມ່ນການເວົ້າເພື່ອໃຫ້ຜູ້ຟັງໄດ້ຮູ້ ແລະ ເຂົ້າໃນເນື້ອໃນຄວາມໝາຍ ສຳຄັນສະນັ້ນຜູ້ເວົ້າຕ້ອງອະທິບາຍຊີ້ແຈ້ງຍົກຕົວຢ່າງໃຫ້ເຫດຜົນຈົນຜູ້ຟັງເຂົ້າໃຈແຈ່ມແຈ້ງຈຶ່ງເວົ້າໄດ້ວ່າການ ເວົ້າຄັ້ງນັ້ນປະສົບຄວາມສຳເລັດ.
2) ການເວົ້າເພື່ອຈູງໃຈ ແມ່ນການເວົ້າໃຫ້ຜູ້ຟັງປ່ຽນແນວຄວາມຄິດຄວາມເຊື່ອ ແລະ ຄ້ອຍຕາມ ຫຼືປະຕິບັດຕາມຜູ້ທີ່ເວົ້າຈູງໃຈໄວ້.
3) ການເວົ້າຈາລ່າເລີງໃຈ ແມ່ນການເວົ້າໃຫ້ຜູ້ຟັງເກີດຄວາມເບີກບານມ່ວນຊື່ນຜ່ອນຄາຍອາລົມ ຄວາມຕຶງຄຽດເກີດຄວາມພູມໃຈ ຫຼື ຄວາມຮູ້ສຶກທີ່ດີ.

ລັດດາ ເພພັດພິສຸດ (2548: 17-18) ໄດ້ເວົ້າເຖິງຈຸດມຸ່ງໝາຍຂອງການເວົ້າໄວ້ດັ່ງຕໍ່ໄປນີ້:

1) ເພື່ອໃຫ້ຄວາມຮູ້ເປັນການເວົ້າເພື່ອໃຫ້ຜູ້ຟັງເກີດຄວາມຮູ້ຄວາມເຂົ້າໃຈເລື່ອງລາວຕ່າງໆເປັນການຖ່າຍທອດຄວາມຮູ້ຄວາມຄິດ ແລະ ຂໍ້ເທັດຈິງໂດຍການບັນຍາຍອະທິບາຍແນະນຳເຊັ່ນ: ການບັນຍາຍ ໃນຊັ້ນຮຽນການແນະນຳວິທີປະຕິບັດງານ ການເວົ້າລາຍງານທາງວິຊາການເປັນຕົ້ນການເວົ້າແບບນີ້ ຜູ້ເວົ້າ ຕ້ອງກະກຽມເນື້ອໃນສຳຄັນໃຫ້ຖືກຕ້ອງຄົບຖ້ວນແທດເໝາະ ແລະ ເລືອກໃຊ້ວິທີການນຳສະເໜີທີ່ເໝາະສົມ.
2) ເພື່ອໂນ້ມນ້າວ ໃຈ ແມ່ນການເວົ້າຊັກຈູງເພື່ອໃຫ້ຜູ້ຟັງເຊື່ອຖື ໃຫ້ມີຄວາມເຫັນຄ້ອຍຕາມ ໃຫ້ປ່ຽນແປງທັດສະນະຄະຕິ ຫຼື ພຶດຕິກຳເຊັ່ນ: ການເວົ້າໂຄສະນາການ ໂຄສະນາຫາສຽງຂອງນັກການເມືອງ ການເວົ້າໂຕ້ວາທີ ການເວົ້າວິຈານ ການເວົ້າເພື່ອຂໍຄວາມຊ່ວຍເຫຼືອ ຫຼື ຂໍຄວາມຮ່ວມມືເປັນຕົ້ນການເວົ້າ

ຕາມ ຈຸດມຸ່ງໝາຍນີ້ຜູ້ເວົ້າຕ້ອງສຶກສາພູມຫຼັງຂອງຜູ້ຟັງໃຊ້ຈິດຕະວິທະຍາໃນການເວົ້າຈູງໃຈ ເພື່ອໃຫ້ຜູ້ຟັງເຫັນປະໂຫຍດຂອງການປະຕິບັດຕາມທີ່ສຳຄັນຜູ້ເວົ້າຕ້ອງມີຄຸນນະທຳຈິງໃຈຕໍ່ຜູ້ຟັງບໍ່ຫຼອກລວງພຽງເພື່ອເຮັດໃຫ້ຜູ້ ຟັງຫຼົງເຊື່ອ ຫຼື ຫຼົງກົນ.

3) ເພື່ອຄວາມເພີດເພີນ ແລະ ລ່າເລີງໃຈ ແມ່ນການເວົ້າເພື່ອໃຫ້ຜູ້ຟັງໄດ້ຮັບຄວາມສະໜຸກສະໜານເພີດເພີນ ຫຼື ເກີດຄວາມຮູ້ສຶກດີມີຄວາມສຸກເບີກບານໃຈໄດ້ຮັບຄະຕິ ຫຼື ແນວທາງໃນການດຳເນີນຊີວິດ ເຊັ່ນ: ການ

ເລົ່ານິທານ ເລົ່າປະສົບການທີ່ໜ້າໃຈສົນການທ່ອງທ່ຽວການເວົ້າຍ້ອງຍໍ ຫຼື ເວົ້າສັນລະເສີນ ເວົ້າ ຕ້ອນຮັບ ການເວົ້າໃຫ້ໂອວາດການເວົ້າສະແດງຄວາມຍິນດີ ຫຼື ສະແດງຄວາມໂອບອ້ອມອາລີ.

4) ເພື່ອຄົ້ນຫາຄຳຕອບ ແມ່ນການເວົ້າເພື່ອລະດົມແນວຄວາມຄິດເຫັນຈາກຜູ້ຟັງອັນຈະນຳໄປສູ່ການແກ້ໄຂ ບັນຫາທັງບັນຫາສ່ວນບຸກຄົນ ແລະ ສ່ວນລວມເຊັ່ນ: ການເວົ້າສົນທະນາການສຳພາດການປາໃສ ການ ປະຊຸມສຳມະນາເປັນຕົ້ນການເວົ້າເພື່ອຫາຄຳຕອບນີ້ຜູ້ເວົ້າຈະຊີ້ໃຫ້ເຫັນບັນຫາສາເຫດ ແລະ ໃຊ້ຄຳຖາມ ທີ່ ເຮັດໃຫ້ຜູ້ຟັງຄິດຕຶກຕ້ອງຫາຄຳຕອບ ຫຼື ວິທີການແກ້ໄຂບັນຫານັ້ນໆ.

5) ເພື່ອໃຫ້ຄິດຢ່າງມີວິຈາລະນະຍານ ແມ່ນການເວົ້າແບບຊີ້ແຈງໃຫ້ເຫັນເຖິງບັນຫາ ຫຼື ຂໍ້ສົງໃສ ທີ່ຊຸ້ນເຄືອງ ໃຈເປັນການເວົ້າເຖິງສາເຫດທີ່ເກີດຂຶ້ນຂອງບັນຫາ ເພື່ອໃຫ້ຜູ້ຟັງເຫັນຊ່ອງທາງຂອງບັນຫາໄດ້ຊັດເຈນ.

6) ເພື່ອປ່ຽນທັດສະນະຄະຕິ ແລະ ຄວາມເຊື່ອ ແມ່ນການເວົ້າທີ່ຜູ້ເວົ້າຕ້ອງສະແດງຄວາມຄິດ ເຫັນຕໍ່ບັນຫາ ນັ້ນໆຕ້ອງເວົ້າໃຫ້ຜູ້ຟັງເຫັນວ່າຄວາມຄິດຂອງຜູ້ເວົ້າເຊື່ອຖືໄດ້ ແລະ ຖືກຕ້ອງ ເພື່ອຊັກຈູງໃຫ້ຜູ້ ຟັງເຫັນນຳ ກັບຄວາມຄິດເຫັນ ແລະ ວິທີຂອງຜູ້ເວົ້າ.

7) ເພື່ອຍ້ອງຍໍຊົມເຊີຍແມ່ນການເວົ້າໃຫ້ກຽດກັບຜູ້ໃດຜູ້ໜຶ່ງ ຫຼື ຜູ້ຟັງ ຫຼື ສິ່ງໃດສິ່ງໜຶ່ງຊຶ່ງອາດຈະ ແມ່ນສະ ຖາບັນສະຖານທີກໍໄດ້ຈຶ່ງເປັນການເວົ້າທີ່ກ່າວເຖິງຄວາມແທ້ຈິງທີ່ປະຈັກໃຫ້ຄົນຟັງຮູ້ຊຶ່ງສ່ວນຫຼາຍ ຈະເປັນ ການເວົ້າໃນແຕ່ສິ່ງທີ່ດີໆ.

ຈາກທີ່ເວົ້າເຖິງຈຸດມຸ່ງໝາຍໃນການເວົ້າໃນເບື້ອງຕົ້ນສະຫຼຸບໄດ້ວ່າ: ໃນການເວົ້ານັ້ນຜູ້ເວົ້າຄວນຄິດ ແລະ ກຳນົດຈຸດມຸ່ງໝາຍທີ່ຈະເວົ້າໃຫ້ຊັດເຈນລວມທັງວິທີການເວົ້າທັງນີ້ເພື່ອເປັນການກະກຽມຕົວ ແລະ ເນື້ອ ໃນ ແລະ ຫາຍຸດທະວິທີການຖ່າຍທອດໃຫ້ເໝາະສົມ ແຕ່ບໍ່ໄດ້ໝາຍຄວາມວ່າຕ້ອງມີຈຸດມຸ່ງໝາຍພຽງ ປະການດຽວເທົ່ານັ້ນຜູ້ເວົ້າສາມາດເພີ່ມຈຸດມຸ່ງຫມາຍອື່ນເຂົ້າຮ່ວມໄດ້ໂດຍມີການກຳນົດຈຸດມຸ່ງໝາຍຫຼັກ ໄວ້ ແລະ ຈຸດມຸ່ງໝາຍອື່ນໆເປັນຈຸດມຸ່ງໝາຍແຝງເພື່ອໃຫ້ບັນລຸຈຸດປະສົງໃນການເວົ້າ.

### 2.3 ອົງປະກອບຂອງການເວົ້າ

ມີນັກທິດສະດີ ແລະ ນັກພາສາສາດຫຼາຍທ່ານໄດ້ເວົ້າເຖິງອົງປະກອບຂອງການເວົ້າໄວ້ດັ່ງນີ້:

ປັດຊະນາ ອາພາກູນ & ກຸນັ້ນ ລັດຕະນະແສນວົງ (2540: 12) ເວົ້າວ່າການເວົ້າແມ່ນການສື່ສານ ປະກອບ ດ້ວຍສ່ວນປະກອບສຳຄັນ 3 ສ່ວນຄື:

ຜູ້ເວົ້າ (Speaker)

ຄຳເວົ້າ (Speech)

ຜູ້ຟັງ (Listener)

ການທີ່ຈະເຮັດໃຫ້ປະສົບຜົນສຳເລັດຕາມຈຸດມຸ່ງໝາຍຂອງຜູ້ເວົ້າຈຳເປັນຈະຕ້ອງປະກອບໄປດ້ວຍລາລະ

ອຽດຫຼາຍຂຶ້ນຄື:

1) ຜູ້ເວົ້າ ແມ່ນຜູ້ທີ່ຖ່າຍຄວາມຮູ້ຄວາມຄິດຄວາມຮູ້ສຶກອາລົມທັດສະນະຄະຕິ ແລະ ອື່ນໆຂອງຕົນໄປຫາຜູ້ຟັງດ້ວຍ ການເວົ້າຜູ້ເວົ້າທີ່ດີຈຶ່ງຕ້ອງມີຄວາມໝັ້ນໃຈໃນຕົນເອງມີບຸກມະລິກກະພາບດີຮູ້ຈັກໃຊ້ຖ້ອຍຄຳນ້ຳສຽງສີໜ້າ, ແວວ ຕາທ່າທາງ ໄດ້ຢ່າງຖືກຕ້ອງເໝາະສົມກັບຜູ້ຟັງ ແລະ ສະຖານະການເຮັດໃຫ້ຜູ້ຟັງເຂົ້າໃຈເນື້ອໃນໄດ້ງ່າຍຊັດເຈນ ແລະ ວ່ອງໄວສາມາດຕອບສະໜອງການເວົ້າໄດ້ດີຜູ້ເວົ້າຈຳເປັນຈະຕ້ອງຝຶກຝົນຕົນເອງຢ່າງສະໜ່ຳສະເໝີ ແລະ ຕ້ອງ ກຽມຕົວມາເປັນຢ່າງດີສິ່ງທີ່ຄວນພິຈາລະນາເປັນພິເສດກ່ຽວກັບຕົວຜູ້ເວົ້າ ຫຼື ຜູ້ສົ່ງສານ.

2) ສາລະ ແມ່ນເລື່ອງລາວທີ່ເວົ້າຕ້ອງເປັນເລື່ອງທີ່ຜູ້ເວົ້າມີຄວາມຮູ້ມີປະສົບການ ຫຼື ຊຳນານເໝາະ ສົມກັບຜູ້ຟັງ, ໂອກາດ ແລະ ສະຖານະການ.

3) ສື່ ແມ່ນສິ່ງທີ່ຊ່ວຍໃຫ້ຜູ້ເວົ້າສາມາດຖ່າຍທອດຄວາມຮູ້ຄວາມຄິດ ແລະ ອື່ນໆຂອງຕົນໄປຫາ ຜູ້ຟັງໄດ້ສະດວກ ວ່ອງໄວຊັດເຈນ ແລະ ໜ້າສົນໃຈ.

4) ສະຖານະການເວົ້າ ແມ່ນກາລະເທສະປະກອບດ້ວຍ ເວລາ, ໂອກາດ, ສະຖານທີ່ ແລະ ສິ່ງ ແວດລ້ອມໃນເວລາ ເວົ້າ.

5) ຜູ້ຟັງ ແມ່ນຜູ້ທີ່ມີອິດທິພົນຕໍ່ຜູ້ເວົ້າຫຼາຍເພາະເປັນຜູ້ຕັດສິນວ່າຜູ້ເວົ້າ-ເວົ້າດີຫຼືບໍ່ຜູ້ເວົ້າຈະຕ້ອງ ສຶກສາຄຸນສົມບັດຂອງກຸ່ມຜູ້ຟັງເຊັ່ນ: ອາຍຸ, ເພດການສຶກສາອາຊີບຄວາມເຊື່ອ ແລະ ຄວາມຕ້ອງການຂອງຜູ້ ຟັງ ເພື່ອນຳໄປວາງແນວທາງໃນການເວົ້າໃຫ້ສອດຄ່ອງກັນທັງນີ້ຈະຕ້ອງງົດເວັ້ນການເວົ້າທີ່ຈະຕ້ອງກໍ່ໃຫ້ເກີດ ຄວາມຂັດແຍ່ງກັບຜູ້ຟັງທັງໃນດ້ານຄວາມຄິດ ແລະ ການປະຕິບັດດ້ວຍ.

ກຸນທະລີ ໄວຍະນິດ (2545: 6-10) ໄດ້ເວົ້າເຖິງອົງປະກອບຂອງການເວົ້າດັ່ງຕໍ່ໄປນີ້:

1) ຜູ້ເວົ້າ ແມ່ນຜູ້ທີ່ຕ້ອງການສະແດງອອກເຖິງຄວາມຮູ້ຄວາມຄິດຄວາມຮູ້ສຶກ ຫຼື ຄວາມ ຕ້ອງການໃຫ້ອີກຜູ້ໜຶ່ງຮັບຮູ້ຜູ້ເວົ້າຕ້ອງໃຊ້ພາສານ້ຳສຽງກິລິຍາທ່າທາງຕະຫຼອດຮອດການໃຊ້ອຸປະກອນຕ່າງໆປະກອບເຊັ່ນ: ຫຸ່ນຈຳລອງວັດຖຸຕົວຢ່າງຮູບພາບປະກອບ ຫຼື ການສາທິດເພື່ອໃຫ້ການເວົ້າບັນລຸຕາມຈຸດ ປະສົງ.

2) ເນື້ອຫາສາລະ ແມ່ນເນື້ອເລື່ອງຊຶ່ງອາດຈະເປັນຄວາມຮູ້ຄວາມຕ້ອງການ ຫຼື ອາລົມຂອງຜູ້ເວົ້າ ທີ່ຕ້ອງການສະແດງອອກເນື້ອໃນຄວາມໝາຍອາດຈະເປັນການແຈ້ງໃຫ້ຮັບຮູ້ ເລົ່າໃຫ້ຟັງຖາມໃຫ້ຕອບສັ່ງໃຫ້ ປະຕິບັດ ຫຼື ແນະນຳໃຫ້ຄິດ ແລະ ອື່ນໆ.

3) ຜູ້ຟັງ ແມ່ນຜູ້ຮັບເນື້ອຫາສາລະຈາກຜູ້ເວົ້າຜູ້ຟັງອາດຈະຮັບຮູ້ເລື່ອງລາວຕ່າງໆຂອງຜູ້ເວົ້າໄດ້ ໜ້ອຍຫຼາຍເທົ່າໃດຂຶ້ນກັບຄວາມສົນໃຈລະດັບຄວາມຮູ້ອາຍຸ ແລະ ເພດເປັນຕົ້ນ. ຜູ້ຟັງອາດຈະແມ່ນຄົນດຽວ ຫຼືກຸ່ມຄົນກໍ່ໄດ້.

ລັດດາ ແພພັດພິສຸດ (2548: 16) ໄດ້ເວົ້າເຖິງອົງປະກອບຂອງການເວົ້າທີ່ສົ່ງຕໍ່ຄວາມສຳເລັດຂອງການເວົ້າແຕ່ລະຄັ້ງຊຶ່ງສຳພັນ ແລະ ສອດຄ່ອງກັນມີດັ່ງຕໍ່ໄປນີ້:

1) ຜູ້ເວົ້າ ແມ່ນຜູ້ທີ່ຕ້ອງການຖ່າຍທອດຄວາມຮູ້ຄວາມຄິດຄວາມຮູ້ສຶກ ແລະ ຄວາມຕ້ອງການຂອງຕົນເອງຮູ້ຈັກເລືອກໃຊ້ວິທີໃນການຖ່າຍທອດໄດ້ຢ່າງເໝາະສົມຮູ້ຈັກໃຊ້ພາສານ້ຳສຽງກັບກິລິຍາຕ່າງໆໃຫ້ຄ້າຍຄືກັບເນື້ອໃນທີ່ນຳສະເໜີລວມທັງຍັງຕ້ອງວິເຄາະ ແລະ ສັງເກດພຶດຕິກຳຂອງຜູ້ຟັງເພື່ອເປັນຂໍ້ມູນໃນການກຽມ ຫຼື ປັບສານທີ່ນຳສະເໜີ.
2) ເນື້ອຫາສາລະ ແມ່ນເນື້ອໃນທີ່ຜູ້ເວົ້າຕ້ອງການສົ່ງໄປຫາຜູ້ຟັງເນື້ອໃນຂອງສານທີ່ດີຄວນມີ ຄວາມຍາກງ່າຍເໝາະສົມກັບລະດັບຂອງຜູ້ຟັງນອກຈາກນີ້ເນື້ອໃນທີ່ນຳມາເວົ້າຄວນຈະເປັນເນື້ອໃນທີ່ເປັນປະໂຫຍດສອດຄ່ອງກັບຄວາມສົນໃຈຂອງຜູ້ຟັງເປັນເລື່ອງທີ່ຜູ້ເວົ້າມີຄວາຊຳນານ ແລະ ມີຄວາມຮອບຮູ້ເປັນ ຢ່າງດີມີຂໍ້ມູນ ແລະ ມູນຄວາມຈິງທີ່ສາມາດນຳມາອ້າງອີງ ຫຼື ເສີມໃຫ້ເກີດຄວາມໜ້າເຊື່ອຖືຍິ່ງຂຶ້ນ.
3) ສື່ ແມ່ນສິ່ງທີ່ຊ່ວຍຖ່າຍທອດຄວາມຮູ້ ແລະ ຄວາມຄິດຂອງຜູ້ເວົ້າໄປຫາຜູ້ຟັງເຊັ່ນ: ນ້ຳສຽງ, ສີໜ້າກິລິຍາທ່າທາງ ແສງສະຫວ່າງລວມທັງອຸປະກອນຕ່າງໆຖ້າຫາກຜູ້ເວົ້າໃຊ້ສື່ໄດ້ເໝາະສົມກັບເນື້ອໃນທີ່ຈະເວົ້າມັນຍ່ອມເຮັດໃຫ້ການເວົ້າໃນເທື່ອນັ້ນປະສົບຜົນສຳເລັດໄດ້ງ່າຍຂຶ້ນ.

4) ຜູ້ຟັງ ແມ່ນຜູ້ຮັບສານຊຶ່ງອາດຈະເປັນບຸກຄົນ-ຄົນດຽວ ຫຼື ຫຼາຍຄົນກໍໄດ້ຜູ້ຟັງທີ່ດີຕ້ອງເປັນຄົນ ທີ່ມີຄວາມສາມາດໃນການຈັບໃຈຄວາມ ແລະ ຕ້ອງສາມາດວິເຄາະໄດ້ວ່າ ເລື່ອງທີ່ໄດ້ຍິນ, ໄດ້ຟັງນັ້ນມີ ຄວາມໜ້າເຊື່ອຖືໜ້ອຍຫຼາຍເທົ່າໃດ.

5) ສະພາບແວດລ້ອມໝາຍເຖິງເວລາໂອກາດ ແລະ ສະຖານທີ່ທີ່ໃຊ້ໃນການເວົ້າຄັ້ງນັ້ນໆສະພາບແວດລ້ອມທີ່ບໍ່ດີ ແລະ ດີເກີນໄປອາດຈະເປັນອຸປະສັກຕໍ່ການເວົ້າໄດ້ທັງໝົດເຊັ່ນ: ການເວົ້າໃນເວລາທ່ຽງ ອາກາດຮ້ອນອົບເອົ້າ ຫຼື ມີສຽງລົບກວນຕະຫຼອດເວລາອາດຈະເຮັດໃຫ້ຜູ້ຟັງຂາດສໍາມະທິໃນທາງກົງກັນຂ້າມຖ້າຈັດການເວົ້າໃນຫ້ອງທີ່ມີອາກາດເປັນສະບາຍຜູ້ຟັງເລືອກນັ່ງຕິດກັບເຮົາໄດ້ກໍຈະເຮັດໃຫ້ຜູ້ຟັງນອນຫຼັບ ໄດ້ຄືກັນ.

6) ຈາກອົງປະກອບຂອງການເວົ້າປະກອບດ້ວຍສ່ວນຕ່າງໆທີ່ສໍາຄັນຊຶ່ງຜູ້ຄົ້ນຄ້ວາສາມາດສະຫຼຸບໄດ້ ດັ່ງນີ້:

ຜູ້ເວົ້າແມ່ນຜູ້ຖ່າຍທອດຄວາມຮູ້ຄວາມຄິດຄວາມຮູ້ສຶກຄວາມຕ້ອງການ

ສານແມ່ນເນື້ອໃນຄວາມຫມາຍທີ່ຜູ້ເວົ້າຕ້ອງການສົ່ງໄປຫາຜູ້ຟັງ

ສື່ແມ່ນສິ່ງທີ່ຊ່ວຍໃນການຖ່າຍທອດຄວາມຮູ້ ແລະ ຄວາມຄິດຂອງຜູ້ເວົ້າໄປຫາຜູ້ຟັງ

ຜູ້ຟັງແມ່ນຜູ້ຮັບສານຊຶ່ງອາດຈະເປັນບຸກຄົນດຽວ ຫຼື ຫຼາຍຄົນກໍໄດ້

ສະຫຼຸບແລ້ວເຫັນວ່າການເວົ້າເປັນການຖ່າຍທອດຄວາມຮູ້ສຶກສໍານຶກຄິດຈາກຜູ້ເວົ້າໂດຍໃຊ້ສື່ ແລະ ສານໄປຫາຜູ້ຟັງເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈກົງກັນຜູ້ເວົ້າຕ້ອງອາໃສການຝຶກຝົນບໍ່ແມ່ນເກີດຂຶ້ນເອງຕາມທໍາມະຊາດຊຶ່ງທໍາມະຊາດເປັນພຽງຜູ້ໃຫ້ອະໄວຍະວະທີ່ໃຊ້ໃນການອອກສຽງມາເທົ່ານັ້ນຄົນເຮົາຖ້າອະໄວຍະວະທີ່ ໃຊ້ອອກສຽງບໍ່ບົກຜ່ອງກໍ່ສາມາດເປັ່ງສຽງອອກມາໄດ້ແຕ່ວ່າການທີ່ຈະເປັ່ງສຽງອອກມາໃຫ້ເປັນສຽງພາສາທີ່ ສາມາດສື່ສານກັນເຂົ້າໃຈໃນຝູງຊົນດ້ວຍການນັ້ນຕ້ອງອາໃສການຮຽນຮູ້ຂອງພາສາທີ່ໃຊ້ເວົ້າສື່ສານກັນໃນໝູ່ຄະນະ ແລະ ອາໃສການຝຶກຝົນ ເພື່ອໃຫ້ເວົ້າໄດ້ດີບັນລຸຈຸດມຸ່ງໝາຍຂອງການເວົ້າ ແລະ ໃຊ້ການເວົ້າໃຫ້ເປັນ ປະໂຫຍດໃນການດໍາລົງຊີວິດໄດ້.

## 2.4 ແນວຄິດກ່ຽວກັບການສອນເວົ້າພາສາອັງກິດ

ນັກພາສາສາດດ້ານການສອນພາສາ ໄດ້ໃຫ້ແນວຄິດກ່ຽວກັບການສອນເວົ້າພາສາອັງກິດໄວ້ດັ່ງນີ້:

Widdowson, H. G (1990: 60-61) ໄດ້ໃຫ້ແນວຄວາມຄິດກ່ຽວກັບການສອນທັກສະການເວົ້າພາສາອັງກິດວ່າໃນການພັດທະນາຄວາມສາມາດໃນການເວົ້າຂອງຜູ້ຮຽນ. ຄູຄວນຄໍານຶງເຖິງຈຸດມຸ່ງໝາຍ, ຂອງຫຼັກສູດຄູຄວນສອນໃນສິ່ງທີ່ຜູ້ຮຽນຈໍາເປັນຕ້ອງຮູ້ໃນການນໍາໄປໃຊ້ໃນການເວົ້າ ໃຫ້ຜູ້ຮຽນໄດ້ມີໂອກາດໄດ້ຟັງກ່ອນທີ່ຈະເຂົ້າສູ່ລະດັບຂັ້ນສູງຂຶ້ນຄື: ມີຄວາມສາມາດໃນການເວົ້ານັ້ນຄື ໃຫ້ຜູ້ຮຽນໄດ້ຮັບຄວາມຮູ້ກ່ອນທີ່ຈະໃຫ້ເຮັດກິດຈະກໍາການເວົ້າ.

Richards, J. C. (1983: 84) ໄດ້ສະແດງທັກສະໃນການສອນການເວົ້າພາສາອັງກິດວ່າມີແນວຄິດຫຼັກ 2 ປະການຄື: ແນວຄິດການສອນແບບທາງອ້ອມ(An indirect approach) ຄື:ການສອນໂດຍໃຫ້ຜູ້ຮຽນເຮັດກິດຈະກໍາທີ່ມີການສົນທະນາປະຕິສໍາພັນກັນ ເພື່ອໃຫ້ຜູ້ຮຽນເກີດຄວາມສາມາດໃນການເວົ້າສົນທະນາໄດ້ເອງ ແລະ ແນວຄິດການສອນແບບກົງ (A direct approach) ຄື: ການສອນທີ່ມີການວາງ ໂປຣແກັຣມການສົນທະນາກ່ຽວກັບທັກສະສະເພາະການໃຊ້ຍຸດທະວິທີ ແລະ ຂະບວນການຕ່າງໆທີ່ຊ່ວຍໃຫ້ຜູ້ຮຽນສົນທະນາໄດ້ຢ່າງຄ່ອງແຄ້ວໂດຍສະເພາະຢ່າງຍິ່ງຍຸດທະວິທີໃນການໂຕ້ຕອບພຶດຕິກໍາຈາກຫົວຂໍ້ໃນການສົນທະນາຮູບແບບຕ່າງໆທີ່ເຫມາະສົມໃນການເວົ້າຄວາມຖືກຕ້ອງຂອງພາສາທີ່ໃຊ້ໃນການສົນທະນາ ແລະ ໄດ້ໃຫ້ຄໍາອະທິບາຍເພີ່ມຕື່ມກ່ຽວກັບແນວຄິດ

ການສອນທັກສະເວົ້າແບບກົງວ່າບໍ່ຄ້າຍຄືກັບວິທີການ ສອນແບບກົງ (The direct method) ຊຶ່ງເນັ້ນການສອນໃນເລື່ອງຫຼັກການໃຊ້ພາສາການຝຶກການຈື່ ໃນ ສິ່ງທີ່ຄູກຽມໄວ້ໃຫ້ກັບຜູ້ຮຽນເທົ່ານັ້ນ ເພາະການສອນດັ່ງກ່າວຜູ້ຮຽນຈະສັບສົນໃນການເລືອກໃຊ້ພາສູງທີ່ຈະເວົ້າ ແລະ ບໍ່ສາມາດປະເຊີນໜ້າກັບສະຖານະການຕ່າງໆໃນຊີວິດຈິງໄດ້ຢ່າງເໝາະສົມດັ່ງນັ້ນໃນການສອນທັກສະການເວົ້າຄູຄວນສອນຈຸດຫຼັກໆທາງພາສາ ແລະ ຝຶກໃຫ້ນຳໄປໃຊ້ໃນສະຖານະການຕ່າງໆມີຂັ້ນຕອນ ໃນການເລືອກຄຳສັບທີ່ຈຳເປັນຕໍ່ສະຖານະການນັ້ນລວມທັງການສອນຫຼັກໄວຍະກອນຈາກປະໂຫຍກ ໃຈຄວາມດຽວໄປສູ່ປະໂຫຍກທີ່ມີຫຼາຍກວ່າໜຶ່ງໃຈຄວາມ. ນອກຈາກນີ້ເຂົາໄດ້ສະເໜີແນະວ່າການສອນທັກສະການເວົ້າທີ່ເໝາະສົມທີ່ສຸດ ແມ່ນການນຳແນວຄິດທັງສອງແນວມາປະຍຸກໃຊ້ໃນລັກສະນະທີ່ມີຄວາມສົມດູນ ກັນຄືການເລີ່ມຕົ້ນດ້ວຍວິທີການຂອງແນວຄິດການສອນແບບກົງ ໂດຍຄູສອນຍຸດທະວິທີການເວົ້າ ໂຕ້ຕອບ ສົນທະນາຢ່າງຄ່ອງແຄ້ວ ແລະ ເປັນທຳມະຊາດໃຫ້ກັບຜູ້ຮຽນ ແລ້ວຈຶ່ງສອນຕາມແນວຄິດການສອນແບບອ້ອມໂດຍການຈັດກິດຈະກຳສົນທະນາແບບມີປະຕິສຳພັນກະຕຸ້ນໃຫ້ຜູ້ຮຽນຮຽນຮູ້ການເວົ້າດ້ວຍຕົນເອງທັງ ນີ້ຈະຊ່ວຍໃຫ້ຜູ້ຮຽນມີພັດທະນາການການເວົ້າໄດ້ດີກວ່າທີ່ຈະຮຽນຮູ້ດ້ວຍວິທີສອນແບບດຽວ.

Lightbown, P. (1998: 187-197) ໄດ້ໃຫ້ຂໍ້ຄິດກ່ຽວກັບການສອນທັກສະການເວົ້າພາສາອັງກິດວ່າການສອນເວົ້າໄດ້ແບບດີຕ້ອງເນັ້ນຮູບແບບຄວາມຖືກຕ້ອງຂອງການໃຊ້ພາສາ ແລະ ໄວຍະກອນ ໃຫ້ກັບຜູ້ຮຽນຈະເຮັດໃຫ້ຜູ້ຮຽນເວົ້າໄດ້ຢ່າງມີປະສິດທິພາບ ເພາະຮູ້ວ່າຈະເວົ້າຫຍັງໃນສິ່ງທີ່ຜູ້ຮຽນ ພະຍາຍາມຈະເວົ້າ ແລະ ເນັ້ນວ່າຄວນສອນການເວົ້າໃນລັກສະນະທີ່ມີການປະຕິສຳພັນກັນ.

Bygate, M. (1993: 5-6) ໄດ້ເວົ້າເຖິງທັກສະຂອງການເວົ້າພາສາອັງກິດ 2 ປະການຄື: ປະການ ທີ່ໜຶ່ງສອນທັກສະທີ່ຊ່ວຍໃຫ້ເກີດຄວາມເຂົ້າໃຈໄດ້ແກ່ການສອນທັກຕ່າງໆ ທີ່ກ່ຽວກັບຄວາມເຂົ້າໃຈເຊັ່ນ: ການຈຳການເວົ້າສຽງທີ່ຖືກຕ້ອງຕາມຫຼັກການໃຊ້ພາສາ ແລະ ໄວຍາກອນເພື່ອຄວາມໝາຍທີ່ຜູ້ເວົ້າຕ້ອງການ ແລະ ປະການທີສອງເພີ່ມທັກສະການປະຕິສຳພັນຄືການສອນໂດຍໃຫ້ສະຖານນະການທີ່ຄືກັບເຫດການທີເກີດຢູ່ນັ້ນ ຄວນເວົ້າແບບໃດ, ຢ່າງໃດ ຈຶ່ງຈະກົງກັບຈຸດປະສົງທີ່ຕົນເອງຕ້ອງການຈະສື່ສານອີກທັງສອນໃຫ້ຄຳນຶງເຖິງຄວາມສຳພັນລະຫວ່າງຕົນກັບຜູ້ຟັງ ໂດຍອາໃສຄວາມຮູ້ທີ່ໄດ້ຮັບຈາກການຮຽນທັກສະຊ່ວຍໃຫ້ເກີດຄວາມເຂົ້າໃຈຊຶ່ງໝາຍຄວາມວ່າຄວນໃຫ້ຄວາມຮູ້ຜູ້ຮຽນກ່ອນທີ່ຈະໃຫ້ເຮັດກິດຈະກຳທີ່ມີການປະຕິສຳພັນນັ້ນຄືການນຳແນວຄິດການສອນແບບກົງປະສົມປະສານກັບແນວຄວາມຄິດການສອນແບບອ້ອມເພື່ອ ໃຫ້ຜູ້ຮຽນມີຄວາມສາມາດໃນການເວົ້າ ໂດຍມີຄວາມຖືກຕ້ອງຂອງການໃຊ້ພາສາ ແລະ ຄວາມຄ່ອງແຄ້ວ ໃນການສື່ສານປະຕິສຳພັນກັບຜູ້ອື່ນ.

Dornyei, Z. & Thurrell, S. (1992: 48) ໄດ້ເວົ້າເຖິງການສອນທັກສະຂອງການເວົ້າວ່າ ໃນ ການສອນເວົ້າຄວນເນັ້ນຄວາມຄິດໃໝ່ໃນການສອນຄື: ສອນໂດຍໃຫ້ພື້ນຖານໃນດ້ານຄວາມເຂົ້າໃຈທີ່ຊັດເຈນຫຼາຍຂຶ້ນກ່ຽວກັບທັກສະໃຫຍ່ ແລະ ທັກສະຍ່ອຍໆທີ່ກ່ຽວຂ້ອງກັບການເວົ້າ ໂດຍພິຈາລະນາຈຸດປະສົງ ຂອງການນຳໄປປະຕິບັດຄືການສອນຕາມແນວຄວາມຄິດການສອນແບບກົງໃນການສອນເວົ້າເພື່ອການສື່ສານ.

Celce-Murcia M., Donnyei Z., & Thurrell, S. (1997: 141-148) ໄດ້ສະຫຼຸບໄວ້ວ່າ ຄູຄວນສອນພາສາທີ່ຕ້ອງໃຊ້ໃນການເວົ້າເຊັ່ນ: ຄຳສັບ ແລະ ໄວຍະກອນ ແລະ ຕ້ອງສອນທັກສະໃນການ ສົນທະນາດ້ວຍໄດ້ແກ່ສອນສົນທະນາໂດຍໃຊ້ໄວຍະກອນໃນການເວົ້າຂໍ້ຄວາມໃຫ້ສຳພັນກັນສອນຍຸດທະວິທີສະແດງຄວາມສຸພາບຍຸດທະວິທີໃນການສື່ສານ ແລະ ອົງປະກອບຕ່າງໆຂອງໂຄງສ້າງໃນການ ສົນທະນາເຊັ່ນ: ການເວົ້າເປີດສົນທະນາການເວົ້າປິດສົນທະນາ ແລະ ລະບົບຂອງການ ໂຕ້ຕອບການ ສົນທະນາ.

ຈາກແນວຄວາມຄິດກ່ຽວກັບການສອນເວົ້າພາສາອັງກິດເບື້ອງຕົ້ນສາມາດສະຫຼຸບໄດ້ວ່າຄູຈຳເປັນຕ້ອງສອນໃນສິ່ງທີ່ຜູ້ຮຽນຕ້ອງຮູ້ກ່ອນທີ່ຈະເວົ້າສ້າງຄວາມເຂົ້າໃຈກັບສິ່ງທີ່ຕ້ອງການຈະເວົ້າຈາກນັ້ນໃຫ້ນັກຮຽນທົດລອງຝຶກເວົ້າຕາມສະຖານະການຕ່າງໆ ເພື່ອສ້າງຄວາມຊຳນານໃຫ້ນັກຮຽນໄດ້ໃຊ້ພາສາໄດ້ຢ່າງຖືກຕ້ອງ ແລະ ເໝາະສົມກັບບຸກຄົນ ແລະ ສະຖານະການຕ່າງໆ.

## 2.5 ການປະເມີນຄວາມສາມາດໃນການເວົ້າພາສາອັງກິດ

ນັກພາສາສາດດ້ານການສອນພາສາໄດ້ສະເໜີການປະເມີນຄວາມສາມາດໃນການເວົ້າພາສາອັງກິດໄວ້ດັ່ງນີ້:

### 2.5.1 ວິທີວັດ ແລະ ທົດສອບຄວາມສາມາດໃນການເວົ້າພາສາອັງກິດ

ການປະເມີນຜົນຄວາມສາມາດໃນການເວົ້າພາສາອັງກິດສາມາດດຳເນີນການກ່ອນການຮຽນ ລະຫວ່າງຮຽນ ແລະ ຫຼັງການຮຽນເພື່ອກວດສອບພັດທະນາການດ້ານຄວາມຮູ້ ແລະ ຄວາມສາມາດຂອງຜູ້ຮຽນຊຶ່ງວິທີວັດ ແລະ ທົດສອບຄວາມສາມາດໃນການເວົ້າພາສາອັງກິດ ເຮັດໄດ້ຫຼາຍວິທີດັ່ງຕໍ່ໄປນີ້:

1) ການສຳພາດ (interview) ເປັນວິທີທົດສອບຄວາມສາມາດໃນການເວົ້າທີ່ງ່າຍທີ່ສຸດເປັນການເວົ້າລະ

ຫວ່າງຄົນ 2 ຄົນໂດຍຄູເປັນຜູ້ເລີ່ມປ້ອນຄຳຖາມ ແລະ ນັກຮຽນຕອບຄຳຖາມເພື່ອສະແດງຄວາມຄິດເຫັນຂອງຕົນເອງການສຳພາດມັກຈະເລີ່ມດ້ວຍການທັກທາຍ ເພື່ອໃຫ້ຜູ້ຮຽນຜ່ອນຄາຍ ກ່ອນຈະແມ່ນຄຳ ຖາມຂອງເລື່ອງທີ່ຈະທົດສອບ ໂດຍຄູຈະບັນທຶກການປະເມີນຜົນກາຍຍະພາບທາງການເວົ້າຂອງຜູ້ຮຽນ

(Harris, D. P, 1988: 83-84) ທັງນີ້ມີນັກວິຊາການຫຼາຍທ່ານ (Heaton, J.B,1990: 61-66) ແລະ (Cohen, A. D, 1994: 262-276) ໄດ້ກ່າວສະເໜີແນະເພີ່ມຕື່ມກ່ຽວກັບການສຳພາດໄວ້ດັ່ງນີ້:

- ❖ ການຖາມຄຳຖາມຜູ້ເຂົ້າສຳພາດຄວນເລືອກຄຳຖາມທີ່ນຳໄປສູ່ຄຳຕອບທີ່ໜ້າສົນໃຈ,ບໍ່ແມ່ນຖາມຫຍັງກໍໄດ້ຄວນເວົ້າໃຫ້ເປັນທຳມະຊາດບໍ່ຄວນກັງວົນກ່ຽວກັບມາດຖານການໃຊ້ພາສາຄວນສະແດງຄວາມເປັນມິດກັບຜູ້ຮຽນ ແລະ ມີສ່ວນຮ່ວມໃນການສົນທະນາກັບຜູ້ຮຽນ ແຕ່ບໍ່ຄວນເວົ້າຫຼາຍຈົນເກີນໄປ.
- ❖ ການໃຫ້ຄະແນນບໍ່ຄວນໃຫ້ຄະແນນຕໍ່ໜ້າຜູ້ເຂົ້າສຳພາດ ເນື່ອງຈາກຈະເປັນການເປັນການເຮັດໃຫ້ຜູເຂົ້າສຳພາດໝົດກຳລັງໃຈການໃຫ້ຄະແນນຄວນໃຫ້ຫຼັງຈາກຜູ້ເຂົ້າສຳພາດອອກໄປຈາກຫ້ອງແລ້ວ.
- ❖ ການທົດສອບເປັນຄູ່ການໃຫ້ຜູ້ຮຽນເຂົ້າສຳພາດຄັ້ງລະ 2 ຄົນຊຶ່ງສາມາດຫຼຸດຄວາມຕຶງຄຽດຂອງຜູ້ຮຽນລົງໄດ້ຄູອາຈານຂໍໃຫ້ຜູ້ຮຽນກຽມຄຳຖາມມາຖາມກັນເອງກໍໄດ້ດ້ານດີຂອງການສຳພາດເປັນຄູ່ຄືຜູ້ສຳພາດຈະໄດ້ຟັງການສົນທະນາຂອງຜູ້ຮຽນທີ່ລະດັບຄວາມສາມາດທາງພາສາບໍ່ແຕກຕ່າງກັນຫຼາຍຄືກັບສຳພາດກັບຄູຜູ້ປະເມີນ ແລະ ຜູ້ຮຽນໄດ້ສະແດງຄວາມສາມາດໃນການໃຊ້ພາສາຢ່າງເປັນທຳມະຊາດ.

2) ການປຶກສາຫາລື (Discussion) ການທົດສອບແບບນີ້ ເປີດໂອກາດໃຫ້ຜູ້ຮຽນສະແດງຄວາມຄິດເຫັນເປັນກຸ່ມໂດຍໃຊ້ຄວາມສາມາດທາງພາສາຜ່ານການເລົ່າບັນລະຍາຍການໃຫ້ຄວາມຄິດເຫັນຕາມຫົວຂໍ້ທີ່ກຳນົດຖືວ່າຜູ້ຮຽນໄດ້ສະແດງຄວາມສາມາດທາງດ້ານການເວົ້າຂອງຕົນເອງຢ່າງເຕັມທີ່ ໂດຍປະສາຈາກ ການແຊກແຊງຂອງຄູ (OoLoughlin, K, 2001: 38)

3) ການລາຍງານແບບປາກເປົ່າ (Oral report) ການທົດສອບປະເພດນີ້ຜູ້ຮຽນມີເວລາໃນການ ກະກຽມລ່ວງໜ້າຊຶ່ງໃຊ້ເວລາໃນການເວົ້າ 5-10 ນາທີນັກຮຽນສາມາດເບິ່ງຈາກການບັນທຶກໄດ້ແຕ່ບໍ່ແມ່ນວ່າໃຫ້ອ່ານສຽງດັງໃນການເວົ້າລາຍງານຜູ້ຮຽນອາດຈະໃຊ້ສື່ໃນການນຳສະເໜີ ແລະ ຫຼັງຈາກນັ້ນນຳສະເໜີຂໍ້ມູນຈົບຄູຖາມຄຳຖາມໃນເລື່ອງທີ່ຜູ້ຮຽນລາຍງານ (ອັດສະລາ ວົງໂສທອນ, 2538: 79-83).

4) ການໃຊ້ຮູບພາບ (Using pictures) ຮູບພາບເໝາະສຳຫຼັບການທົດສອບການເວົ້າເນື່ອງຈາກ ສາມາດກະຕຸ້ນຜູ້ຮຽນໄດ້ສະແດງຈິນຕະນາການຂອງຕົນ ແຕ່ຄູຕ້ອງເລືອກພາບໃຫ້ເໝາະກັບລະດັບຄວາມສາມາດຂອງຜູ້ຮຽນຕະຫຼອດຮອດຮູບພາບຕ້ອງຊັດເຈນ ແລະ ຕ້ອງແນ່ໃຈວ່າຜູ້ຮຽນໄດ້ເຫັນຮູບພາບເປັນເວລາພໍສົມຄວນກ່ອນການເວົ້າບັນລະຍາຍຮູບພາບຊຶ່ງການທົດສອບໂດຍການໃຊ້ຮູບພາບມີຫຼາຍລັກສະນະ ເຊັ່ນ: ຮູບພາບເພື່ອການບັນລະຍາຍ (Pictures for description) ຄວາມແຕກຕ່າງລະຫວ່າງຮູບພາບ (pictures for comparision) ຄວາມແຕກຕ່າງລະຫວ່າງຮູບພາບ (picture comparision) ການລຽງລຳດັບຮູບພາບ (Sequences of pictures) ເລື່ອງຈາກຮູບພາບ (Picture story) ແຜນທີ່ (Maps) ເປັນຕົ້ນ (Heaton, J. B., 1990: 59).

5) ການແລກປ່ຽນຂໍ້ມູນທີ່ຂາດຫາຍໄປ (information gap) ເປັນການທົດສອບແບບມີປະຕິສຳພັນລະຫວ່າງຜູ້ຮຽນ 2 ຄົນ ເພື່ອຕື່ມຂໍ້ມູນຂອງຕົນເອງທີ່ຂາດຫາຍໄປຈາກການສື່ສານກັບຄູ່ຂອງຕົນເອງຊຶ່ງຜູ້ຮຽນສາມາດຈັບຄູ່ກັນເອງຕາມຄວາມສະໝັກໃຈສົ່ງຜົນໃຫ້ຜູ້ຮຽນຮູ້ສຶກສະບາຍໃຈໃນການສົນທະນາໂຕ້ຕອບ (Bygate, M, 1987: 76-78).

ສະຫຼຸບໄດ້ວ່າການວັດ ແລະ ທົດສອບຄວາມສາມາດໃນການເວົ້າພາສາອັງກິດສາມາດເຮັດໄດ້ຫຼາຍວິທີ ເຊິ່ງຄູຄວນເລືອກວິທີທົດສອບໃຫ້ສອດຄ່ອງກັບວັດຖຸປະສົງຂອງການທົດສອບ ແລະ ຄວາມສາມາດຂອງຜູ້ຮຽນເພື່ອໃຫ້ຜູ້ຮຽນໄດ້ສະແດງອອກທາງພາສາເຕັມຕາມກາຍຍະພາບຂອງຕົນເອງ.

ໃນການຄົ້ນຄ້ວານີ້ຜູ້ຄົ້ນຄ້ວາໃຊ້ການທົດສອບທັກໃນການເວົ້າພາສາອັງກິດ ໂດຍໃຊ້ຮູບພາບຊຶ່ງເປັນການຊອກຫາຄວາມແຕກຕ່າງລະຫວ່າງຮູບພາບ (Find the differences & Conversation cards) ທີ່ເໝາະສົມກັບລະດັບຄວາມສາມາດຂອງຜູ້ຮຽນຕົວພາສາທີ່ໃຊ້ໃນແບບທົດສອບເປັນເນື້ອໃນທີ່ຜູ້ຮຽນໄດ້ຮຽນມາແລ້ວທັງໝົດອີກທັງການໃຊ້ຮູບພາບກໍເປັນວິທີການທົດສອບທີ່ໜ້າສົນໃຈສຳຫຼັບຜູ້ຮຽນໃນລະດັບສາມັນສຶກສາ.ນອກຈາກນີ້ກົດເກນການປະເມີນທັກສະການເວົ້າພາສາອັງກິດກໍມີສ່ວນສຳຄັນໃນການປະເມີນທັກສະການເວົ້າຂອງຜູ້ຮຽນດັ່ງທີ່ຈະກ່າວໃນລາຍລະອຽດຕໍ່ໄປນີ້:

### 2.5.2 ກົດເກນການໃຫ້ຄະແນນຄວາມສາມາດໃນການເວົ້າພາສາອັງກິດ

ໃນການປະເມີນຄວາມສາມາດໃນການເວົ້າພາສາອັງກິດກົດເກນການໃຫ້ຄະແນນຖືວ່າມີຄວາມສຳຄັນຢ່າງຍິ່ງນັກປະເມີນຜົນທາງພາສາຫຼາຍທ່ານໄດ້ກຳນົດກົດເກນການໃຫ້ຄະແນນຄວາມສາມາດໃນການ ເວົ້າພາສາອັງກິດໄວ້ດັ່ງຕໍ່ໄປນີ້:

Harris, D. P (1988: 81-82) ກ່າວວ່າຄວາມສາມາດໃນການເວົ້າພາສາອັງກິດສາມາດວັດໄດ້ຈາກອົງປະກອບດັ່ງຕໍ່ໄປນີ້:

ການອອກສຽງ (Pronunciation)

ໄວຍະກອນ (Grammar)

ຄຳສັບ (Vocabulary)

ຄວາມລ່ຽນໄຫຼ (Fluency)

ຄວາມເຂົ້າໃຈ (Comprehension)

Ur, P (1996: 135) ໄດ້ກໍານົດກົດເກນການປະເມີນຄວາມສາມາດໃນການເວົ້າພາສາອັງກິດ ອອກເປັນ 2 ອົງປະກອບ ແລະ ແບ່ງລະດັບການໃຫ້ຄະແນນໃນແຕ່ລະອົງປະກອບອອກເປັນ 5 ລະດັບ ໃນ 2 ດ້ານຄືດ້ານຄວາມລ່ຽນໄຫຼ ແລະ ດ້ານຄວາມຖືກຕ້ອງຂອງການໃຊ້ພາສາດັ່ງນີ້:

ດ້ານຄວາມຄ່ອງແຄ່ວຂອງການໃຊ້ພາສາ (Fluency) ມີກົດເກນການໃຫ້ຄະແນນດັ່ງນີ້:

1) ໝາຍເຖິງບໍ່ສາມາດເວົ້າສື່ສານໃຫ້ຜູ້ອື່ນເຂົ້າໃຈໄດ້ເລີຍ.
2) ໝາຍເຖິງຢຸດເວົ້າຫຼາຍໆຄັ້ງຕິດຕໍ່ກັນ ແລະ ເວົ້າສັ້ນໆ ແລະ ບາງຄັ້ງຍາກທີ່ຈະເຂົ້າໃຈ.
3) ໝາຍເຖິງຄວາມສາມາດເວົ້າສື່ສານຄວາມຄິດໄດ້ແຕ່ຍັງຄົງເວົ້າໄດ້ສັ້ນໆ ແລະ ບາງຄັ້ງກໍ່ເວົ້າ ຂາດວັກຂາດຕອນ.
4) ໝາຍເຖິງຄວາມສາມາດເວົ້າສື່ສານໄດ້ຢ່າງມີປະສິດທິພາບ ແຕ່ເປັນການສົນທະນາແລກປ່ຽນຂໍ້ ມູນຢ່າງສັ້ນໆ.
5) ໝາຍເຖິງຄວາມສາມາດເວົ້າໄດ້ເຂົ້າໃຈງ່າຍ ແລະ ມີການສົນທະນາແລກປ່ຽນຂໍ້ມູນໄດ້ງ່າຍ ຍາວໆ ແລະ ເຮັດໃຫ້ເກີດປະສິດທິພາບໃນການສື່ສານ.

ດ້ານຄວາມຖືກຕ້ອງຂອງການໃຊ້ພາສາ (Accuracy) ມີກົດເກນການໃຫ້ຄະແນນດັ່ງນີ້:

1) ໝາຍເຖິງ ບໍ່ມີການເວົ້າ ຫຼື ເວົ້າໜ້ອຍຫຼາຍຈົນບໍ່ສາມາດເຂົ້າໃຈໄດ້.

2) ໝາຍເຖິງ ໃຊ້ຄໍາເວົ້າຖືກຕ້ອງແນ່ນີຂໍ້ຜິດພາດເກີດຂຶ້ນໃນການໃຊ້ໂຄງສ້າງໄວຍະກອນ, ແລະ ມີການເວົ້າອອກສຽງທີ່ສະແດງ ໃຫ້ເຫັນສໍານຽງພາສາແມ່ຂອງຜູ້ເວົ້າຢ່າງຊັດເຈນ ແລະ ເປັນອຸປະສັກຕໍ່ຄວາມເຂົ້າໃນການຟັງຫຼາຍ.

3) ໝາຍເຖິງ ມີການໃຊ້ຄໍາສັບໃນວົງຈໍາກັດມີຂໍ້ຜິດພາດເກີດຂຶ້ນໃນການໃຊ້ໂຄງສ້າງໄວຍະກອນຢ່າງຊັດເຈນ ແລະ ມີການເວົ້າອອກສຽງສໍານຽງຂອງພາສາແມ່ປົນກັນໜ້ອຍໜຶ່ງເປັນອຸປະສັກຕໍ່ຄວາມເຂົ້າໃຈໃນການຟັງຢູ່.

4) ໝາຍເຖິງ ມີການໃຊ້ຄໍາສັບໃນວົງກວ້າງ ແຕ່ຍັງໃຊ້ໂຄງສ້າງໄວຍະກອນຜິດໃນບາງເທື່ອ ແລະ ມີການເວົ້າອອກສຽງສໍານຽງຂອງພາສາແມ່ປົນກັນໜ້ອຍໜຶ່ງ ເປັນອຸປະສັກຕໍ່ຄວາມເຂົ້າໃຈໃນການຟັງຢູ່.

5) ໝາຍເຖິງ ມີການໃຊ້ຄໍາສັບໃນວົງກວ້າງໄດ້ຖືກຕ້ອງເໝາະສົມບໍ່ມີຂໍ້ຜິດພາດໃນການໃຊ້ໂຄງສ້າງໄວຍະກອນຢ່າງຊັດເຈນ ແລະ ມີການເວົ້າອອກສຽງທີ່ສະແດງເຖິງສໍານຽງຂອງພາສາແມ່ປົນໜ້ອຍຫຼາຍ ແຕ່ບໍ່ເປັນອຸປະສັກຕໍ່ຄວາມເຂົ້າໃຈໃນການຟັງ.

Oller, L. W. (1979: 320-321) ໄດ້ກໍານົດກົດເກດການໃຫ້ຄະແນນຄວາມສາມາດໃນການເວົ້າພາສາອັງກິດໄວ້ 5 ລະດັບດັ່ງນີ້:

ລະດັບ 1: ສາມາດໃຊ້ພາສາໄດ້ໃນວົງຈໍາກັດສາມາດຖາມ ແລະ ຕອບຄໍາຖາມໃນເລື່ອງທີ່ຮູ້ຈັກລຶ້ງເຄີຍ ແລະ ເຂົ້າໃຈຄໍາຖາມ ແລະ ຂໍ້ຄວາມທີ່ງ່າຍໆໄດ້.

ລະດັບ 2: ສາມາດໃຊ້ພາສາຕາມຄວາມຈໍາເປັນຂອງສັງຄົມ ແລະ ການເຮັດວຽກໄດ້ຢ່າງຈໍາກັດສາມາດສົນທະນາໃນສະຖານະການທາງສັງຄົມທົ່ວໄປໄດ້ຢ່າງໝັ້ນໃຈແຕ່ບໍ່ຄ່ອງແຄ້ວພໍປານໃດ.

ລະດັບ 3: ສາມາດໃຊ້ກົດເກນທາງໄວຍະກອນ ແລະ ຄຳສັບໄດ້ຢ່າງຖືກຕ້ອງພຽງພໍທີ່ຈະເຂົ້າ ຮ່ວມສົນທະນາໄດ້ຢ່າງເປັນທາງການໃນເກືອບທຸກເລື່ອງທີ່ກ່ຽວກັບສັງຄົມ ແລະ ອາຊີບການງານສາມາດເວົ້າ ຈາໃນເລື່ອງທີ່ສົນໃຈເປັນພິເສດ ຫຼື ເລື່ອງທີມີຄວາມຮູ້ຄວາມສາມາດສະເພາະໄດ້ຢ່າງຄ່ອງແຄ້ວພໍປະມານມີຄວາມເຂົ້າໃຈໃນເລື່ອງທີ່ຟັງຄ່ອນຂ້າງສົມບູນມີວົງຄຳສັບທີ່ໃຊ້ຫຼາຍຈົນເກືອບບໍ່ຕ້ອງເວົ້າຊ້ຳສຳນຽງແປກຫຼາຍ ແຕ່ການໃຊ້ໄວຍະກອນດີຜູ້ຟັງທີ່ເປັນເຈົ້າຂອງພາສາເກືອບຈະບໍ່ມີບັນຫາໃນການຟັງ.

ລະດັບ 4: ສາມາດໃຊ້ພາສາໄດ້ຢ່າງຄ່ອງແຄ້ວ ແລະ ຖືກຕ້ອງໃນການເວົ້າທຸກລະດັບທີ່ກ່ຽວກັບຄວາມຈຳເປັນດ້ານອາຊີບການງານ ມີຄວາມເຂົ້າໃຈ ແລະ ຄວາມສາມາດເຂົ້າຮ່ວມໃນການສົນທະນາ ເລື່ອງທີ່ຜູ້ເວົ້າມີປະສົບການຢ່າງຄ່ອງແຄ່ວຫຼາຍ ແລະ ມີການໃຊ້ຄຳສັບແນ່ນອນຖືກຕ້ອງ ສາມາດໂຕ້ຕອບໄດ້ ຢ່າງ ເໝາະສົມໃນທຸກສະຖານນະການ ເກືອບບໍ່ມີການອອກສຽງ ແລະ ການໃຊ້ໄວຍະກອນຜິດສາມາດ ແປ ຫຼື ຕີຄວາມຈາກຂໍ້ຄວາມທົ່ວໄປທີ່ບໍ່ເປັນທາງການຈາກພາສາໜຶ່ງໄປຫາອີກພາສາໜຶ່ງ.

ລະດັບ 5: ສາມາດເວົ້າໄດ້ດີເໝືອນກັບເຈົ້າຂອງພາສາທີ່ມີການສຶກສາດີ ເວົ້າໄດ້ຈະແຈ້ງ ແລະ ຄ່ອງແຄ່ວໃນທຸກເລື່ອງທຸກລະດັບ ຄືກັນກັບເຈົ້າຂອງພາສາທີ່ມີການສຶກສາດີ ເຂົ້າໃຈຢ່າງເຕັມທີໃນທຸກດ້ານ ຂອງການເວົ້າລວມເຖິງວົງຄຳສັບ ແລະ ສຳນວນທີ່ໃຊ້ສາມາດໃຊ້ພາສາເວົ້າອ້າງອີງເຖິງຈຸດພິເສດທາງວັດທະນະທຳໄດ້.

Heaton, J. B. (1990: 68-71) ໄດ້ສະເໜີກົດເກນການໃຫ້ຄະແນນຊຶ່ງແບ່ງອອກເປັນ 6 ລະດັບດັ່ງນີ້:

ລະດັບ 1: ມີການອອກສຽງຜິດຫຼາຍ-ຫຼາຍບ່ອນມີຂໍ້ຜິດພາດໃນໂຄງສ້າງໄວຍະກອນຂັ້ນພື້ນຖານຢຸດເວົ້າຫຼາຍຄັ້ງໃນການໃຊ້ຄຳສັບໃນວົງຈຳກັດເຂົ້າໃຈຍາກຕ້ອງມີການສອບຖາມຕະຫຼອດເວລາແຕ່ບໍສາມາດອະທິບາຍ ຫຼື ສື່ຄວາມໝາຍໃຫ້ເຂົ້າໃຈໄດ້ມີທັກສະໃນການເວົ້າໜ້ອຍຫຼາຍ.

ລະດັບ 2: ມີການອອກສຽງຜິດຫຼາຍມີຂໍ້ຜິດພາດໃນການໃຊ້ໂຄງສ້າງໄວຍະກອນຂັ້ນພື້ນຖານມີການຢຸດເວົ້າດົນ ການໃຊ້ສຳນວນຢູ່ໃນວົງຈຳກັດການສື່ຄວາມໝາຍສ່ວນໃຫຍ່ບໍ່ຊັດເຈນຕ້ອງອາໃສຄວາມພະຍາຍາມການສ້າງຄວາມເຂົ້າໃຈຕ້ອງມີການສອບຖາມຫຼາຍຄັ້ງ ແລະ ບາງຄັ້ງບໍ່ສາມາດອະທິບາຍສື່ຄວາມ ໝາຍໃຫ້ເຂົ້າໃຈມີທັກສະໃນການເວົ້າຢູ່ໜ້ອຍໜຶ່ງ.

ລະດັບ 3: ການອອກສຽງຍັງຕິດສຳນຽງແມ່ມີການອອກສຽງຜິດ ເວົ້າຜິດຫຼັກໄວຍະກອນມີ ຄວາມຜິດພາດຫຼາຍບ່ອນເປັນເຫດໃຫ້ເກີດຄວາມເຂົ້າໃຈຜິດຫຼາຍ ມີການຢຸດເພື່ອຫາຄຳເວົ້າດົນ ການສື່ສານ ສ່ວນໃຫຍ່ສາມາດເຂົ້າໃຈໄດ້ຕ້ອງມີການສອບຖາມແດ່ມີທັກສະໃນການເວົ້າ.

ລະດັບ 4: ການອອກສຽງມີສຳນຽງຕິດພາສາແມ່ຢູ່ໜ້ອຍໜຶ່ງ ເວົ້າຜິດຫຼັກໄວຍະກອນແດ່ມີຂໍ້ຜິດພາດ 2-3 ແຫ່ງຊຶ່ງເປັນເຫດໃຫ້ເກີດເຂົ້າໃຈຜິດມີການຢຸດເພື່ອຫາຄຳເວົ້າດົນ ສາມາດສື່ໃຈຄວາມທົ່ວໆໄປໄດ້ຊັດເຈນຕ້ອງມີການສອບຖາມແດ່ໜ້ອຍໜຶ່ງສື່ຄວາມຫມາຍໄດ້ຂ້ອນຂ້າງຊັດເຈນມີທັກສະທາງການເວົ້າຂ້ອນຂ້າງດີ.

ລະດັບ 5: ການອອກສຽງຍັງມີສຳນຽງຕິດພາສາແມ່ຢູ່ຫນ້ອຍຫນຶ່ງເວົ້າຜິດຫຼັກໄວຍະກອນໜ້ອຍ ໜຶ່ງມີການຢຸດເພື່ອຫາຄຳສັບແຕ່ບໍ່ດົນ ສາມາດສື່ໃຈຄວາມທົ່ວໆໄປໄດ້ຊັດເຈນ ແຕ່ຍັງມີການສອບຖາມພຽງ ໜ້ອຍດຽວມີທັກສະການເວົ້າຂ້ອນຂ້າງດີ.

ລະດັບ 6: ການອອກສຽງດີ ເວົ້າຜິດຫຼັກໄວຍະກອນແດ່ໜ້ອຍໜຶ່ງມີການຢຸດເວົ້າບໍດົນ ເວົ້າເຂົ້າໃຈງ່າຍເກືອບບໍ່ຕ້ອງມີການສອບຖາມມີທັກສະການເວົ້າດີ.

ຢ່າງໃດກໍ່ຕາມ (Heaton, J, B, 1990: 68-71) ອະທິບາຍວິທີການແບ່ງລະດັບຄວາມສາມາດ ໃນການເວົ້າວ່າຄູສອນຄວນສ້າງລະດັບການໃຫ້ຄະແນນຂຶ້ນມາໃຊ້ເອງ ເພື່ອໃຫ້ເຫມາະສົມກັບຄວາມສາມາດ ຂອງຜູ້ຮຽນ ແລະ ຈຸດປະສົງຂອງຄູຜູ້ທົດສອບ.

ກົດເກນການໃຫ້ຄະແນນຄວາມສາມາດໃນເວົ້າເບື້ອງຕົ້ນເຫັນໄດ້ວ່າຄວາມສາມາດທາງດ້ານການເວົ້າ ຂອງຜູ້ເວົ້າມີຫຼາຍລະດັບຕັ້ງແຕ່ເວົ້າໄດ້ດີຖືກຕ້ອງ ແລະ ເຂົ້າໃຈໄດ້ຈົດຮອດເວົ້າບໍ່ໄດ້ເລີຍດັ່ງນັ້ນກົດເກນການ ໃຫ້ຄະແນນຄວາມສາມາດໃນການເວົ້າຈຶ່ງສາມາດວັດຄວາມສາມາດທາງການໃຊ້ພາສາການສື່ຄວາມເຂົ້າ ໃຈຄວາມຖືກຕ້ອງ ແລະ ຄວາມຄ່ອງແຄ່ວຂອງຜູ້ເວົ້າທີ່ມີຄວາມສາມາດຕ່າງກັນແຕ່ເຖິງວ່າກົດເກນການໃຫ້ ຄະແນນຄວາມສາມາດໃນການເວົ້າຄວນເຫມາະສົມກັບຈຸດປະສົງຂອງການທົດສອບ ແລະ ຄວາມສາມາດ ຂອງຜູ້ຮຽນ.

## 3. ການສອນບົດສົນທະນາພາສາອັງກິດ

### 3.1. ຄວາມໝາຍຂອງການສົນທະນາ

ຜູ້ຊ່ຽວຊານດ້ານການສອນພາສາໄດ້ໃຫ້ຄວາມໝາຍຂອງການສົນທະນາ ໄວ້ດັ່ງນີ້:

Brown, G, & Yule, G. (1983:212) ໄດ້ໃຫ້ຄວາມໝາຍຂອງການສົນທະນາໄວ້ວ່າການສົນທະນາ ໝາຍເຖິງການລົມກັນຂອງບຸກຄົນຕັ້ງແຕ່ສອງຄົນຂຶ້ນໄປເປັນການເຮັດໃຫ້ຜູ້ຟັງ ແລະ ຜູ້ເວົ້າເກີດຄວາມລຶ້ງເຄີຍກັນ.

Levinson, S,C. (1983:284) ເວົ້າວ່າການສົນທະນາແມ່ນການເວົ້າທີ່ບໍ່ກະກຽມມາກ່ອນຊຶ່ງ ເປັນໄປຕາມທຳມະຊາດໃນທຸກໆມື້ມີການເວົ້າລົມກັນເພື່ອແລກປ່ຽນຂໍ້ມູນຂ່າວສານລະຫວ່າງຄົນສອງຄົນ ຫຼື ຫຼາຍກວ່ານັ້ນ.

Kuzma, D. (2008: 1) ເວົ້າວ່າການສົນທະນາເປັນພື້ນຖານການປະຕິສຳພັນຂອງຄົນໃນສັງຄົມ ແລະ ການຮຽນຮູ້ກ່ຽວກັບບຸກຄົນອື່ນເພື່ອພັດທະນາຄວາມຄິດ ແລະ ປະສົບການ.

Hatch, F. & Long, M (1980: 4) ເວົ້າວ່າການສົນທະນາເປັນຕົວຢ່າງທີ່ຍອດປັ້ຽມໃນການຊຸມນຸມກັນໃນສັງຄົມ ແລະ ເປັນການປະຕິສຳພັນໃນການຕິດຕໍ່ສື່ສານ ໂດຍທຳມະຊາດການສົນທະນາເປັນການສ່ຽງໄພແຕ່ເຮັດໃຫ້ເກີດການຮ່ວມມືທີ່ດີໄດ້.

ຈາກຄວາມໝາຍຂອງການສົນທະນາໃນເບື້ອງຕົ້ນສະຫຼຸບໄດ້ວ່າການສົນທະນາໝາຍເຖິງການໃຊ້ພາສາ ໃດໜຶ່ງໃນການເວົ້າລົມກັນສື່ສານ ຫຼື ໂຕ້ຕອບລະຫວ່າງບຸກຄົນຕັ້ງແຕ່ 2 ຄົນຂຶ້ນໄປເພື່ອການແລກປ່ຽນຮຽນຮູ້ຄວາມຄິດຂໍ້ມູນຂ່າວສານໃນສັງຄົມ ແລະ ດຳເນີນໄປຕາມຂັ້ນຕອນຂອງການສົນທະນາໄປຈົນກວ່າບຸກຄົນເຫຼົ່ານັ້ນຈະຈົບການສົນທະນາ.

## 3.2 ໂຄງສ້າງຂອງການສົນທະນາ (Conversation Structures)

Sacks, H, Schedloff, E, A. & Jefferson, G. (1978: 7-57) ໄດ້ຮອບຮອມ ໂຄງສ້າງ; ຂອງບົດສົນທະນາໄວ້ດັ່ງນີ້:

### 3.2.1 ໂຄງສ້າງທົ່ວໄປຂອງການສົນທະນາ

ການປ່ຽນກັນເວົ້າ (Turn-taking) ໃນການສົນທະນານັ້ນຈະຕ້ອງມີຜູ້ໜຶ່ງເວົ້າ (A) ແລ້ວກໍ່ຢຸດ ແລະ ຜູ້ຮ່ວມສົນທະນາ (B) ອື່ນກໍ່ເລີ່ມເວົ້າ ແລະ ຢຸດ ນັ້ນກໍ່ຄືເມື່ອ (A) ເວົ້າຈົບແລ້ວ (B) ກໍ່ເວົ້າຕໍ່ ດັ່ງ ເຊັ່ນ: A-B-A-B-A=B ເປັນຕົ້ນ ຜູ້ທີ່ເວົ້າຄົນທຳອິດ (A) ອາດຈະຊັກຊວນໃຫ້ຄົນຕໍ່ໄປຄື: (B) ເວົ້າ ຫຼື (B) ອາດຈະເວົ້າສອດຂຶ້ນມາຕອນກາງກໍ່ໄດ້.

ການໂຕ້ຕອບ ແລະ ການປ່ຽນກັນເວົ້າ (Adjacency pairs) ແມ່ນຜູ້ເວົ້າປ່ຽນກັນເວົ້າສອງເທື່ອເກີດຂຶ້ນໃນຊ່ວງຂອງການເວົ້າທີ່ໃກ້ຄຽງກັນ ແລະ ມີເນື້ອໃນຄວາໝາຍທີ່ຕໍ່ເນື່ອງກັນສະເໜີເປັນສູດ

ຕົວຢ່າງ: ຄຳຖາມຄູ່ກັບຄຳຕອບ ຄຳຂໍຮ້ອງຄູ່ກັບຄຳຕົກລົງຮັບຄຳຄຳສະເໜີຊ່ວຍຄູ່ກັບຄຳຕອບຮັບຄວາມຊ່ວຍເຫຼືອຄຳຂໍໂທດຊ່ວຍຄູ່ກັນກັບຄໍໃຫ້ອະໄພເປັນຕົ້ນ.

**3.2.2 ໂຄງສ້າງຂອງການສົນທະນາໂດຍລວມ**

ການເປີດການສົນທະນາ (Opening sections) ເມື່ອເລີ່ມຕົ້ນສົນທະນານັ້ນ ຜູ້ຮ່ວມ ສົນທະນາຈະທັກທາຍກັນຊຶ່ງກໍ່ຄືປ່ຽນກັນເວົ້າທີ່ເກີດຄູ່ກັນ ຫຼື ນອກຈາກນັ້ນກໍ່ເລີ່ມດ້ວຍການເອີ້ນຊື່ ແລະ ຂານຮັບ (summons-answers) ຫຼັງຈາກນັ້ນຈຶ່ງເລີ່ມເວົ້າສິ່ງທີ່ຕົນຕ້ອງການເວົ້າດັ່ງຕົວຢ່າງເຊັ່ນ: ຄຳທັກ ທາຍກັນ.

A: Hello. How are you?

B: Hello. I am fine. How are you?

ການປິດການສົນທະນາ (Closing sections) ການປິດການສົນທະນາຕ້ອງອາໃສວິທີເວົ້າທີ່ ອ່ອນໂຍນໂດຍທີ່ຝ່າຍທີ່ເລີ່ມເປັນຜູ້ປິດການສົນທະນາຈະຕ້ອງເວົ້າໂດຍທີ່ບໍ່ເຮັດໃຫ້ຜູ້ຟັງຮູ້ສຶກສາວ່າຕົນເອງ ຖືກໃຫ້ຢຸດເວົ້າທັງທີ່ມີເລື່ອງສຳຄັນທີ່ຈະຕ້ອງເວົ້າອີກຫຼາຍ.

**3.2.3 ການເວົ້າທີ່ບໍ່ເປັນໄປຕາມຄາດຫມາຍ (Dispreferred) ແລະ ການແກ້ໄຂ (Repair)**

ການເວົ້າທີ່ບໍ່ເປັນໄປຕາມຄາດໝາຍ (Dispreferred) ແມ່ນຄຳເວົ້າຕອບໂຕ້ທີ່ບໍ່ເປັນໄປຕາມຮູບ ແບບປົກກະຕິ ຫຼື ຕາມຄວາມຄາດໝາຍຂອງຜູ້ເວົ້າຄືຜູ້ເວົ້າປ່ຽນກັນເວົ້າທີສອງຕອບໂຕ້ຊ້ຳລົງເຕັມໄປດ້ວຍຄວາມບໍ່ແນ່ໃຈເວົ້າຂໍ້ຄວາມທີ່ຂັດກັນເຊັ່ນ: ເວົ້າຂອບໃຈແທນຄຳຕອບຮັບເມື່ອຜູ້ເວົ້າແລກປ່ຽນກັນເວົ້າເຊື້ອເຊີນ ຫຼື ເວົ້າໃຫ້ຄຳແນະນຳ.

ການແກ້ໄຂ (Repair) ຫມາຍເຖິງການກວດສອບຂໍ້ຄວາມທີ່ໄດ້ຍິນ

Dornyei, Z. & Thurrell, S. (1992: 3-5) ໄດ້ເວົ້າເຖິງໂຄງສ້າງຂອງເຕັກນິກການສອນສົນທະນາຊຶ່ງປະກອບດ້ວຍ 7 ຂັ້ນຕອນດັ່ງນີ້:

1) ການເປີດປິດສົນທະນາ (Opening) ວິທີການເລີ້ມຕົ້ນໃນການສົນທະນາມີການແນະນຳ ຕົນເອງການສົນທະນາກັບຄູ່ສົນທະນາ ໃນສະຖານະການທີ່ຜ່ອນຄາຍ.

2) ການສັບປ່ຽນກັນເວົ້າ (Turn-taking) ແມ່ນການສະຫຼັບບົດບາດກັນລະຫວ່າງຜູ້ເວົ້າ ແລະ ຟັງເມື່ອມີບຸກຄົນຫນຶ່ງເວົ້າຂຶ້ນບຸກຄົນຜູ້ຮ່ວມສົນທະນາທີ່ເຫຼືອຈະປ່ຽນຫນ້າທີ່ເປັນຜູ້ຟັງ ແລະ ຈະສະຫຼັບ ບົດບາດເປັນຜູ້ເວົ້າຕໍ່ໄປເມື່ອມີການປ່ຽນກັນເວົ້າ.

3) ການຂັດຈັງຫວະໃນການເວົ້າ (Interrupting) ແມ່ນການຕັ້ງໃຈປ່ຽນບົດບາດຈາກຜູ້ຟັງ ເປັນຜູ້ເວົ້າດ້ວຍການເວົ້າຂຶ້ນມາທັນທີ ໂດຍບໍ່ຄຳນຶງວ່າຈຸດປ່ຽນສະຫຼັບກຳລັງໃກ້ເຂົ້າມາເຖິງ ຫຼື ບໍ່ຊຶ່ງມັກຊີ້ວ່າ ຜູ້ຟັງບໍ່ສົນໃຈໃນສິ່ງທີ່ຜູ້ເວົ້າກຳລັງກ່າວເຖິງ ແລະ ຄິດວ່າຕົນມີອຳນາດເໜືອຜູ້ເວົ້າໃນລະດັບໜຶ່ງ ຫຼື ອາດຈະເອີ້ນໄດ້ວ່າເປັນການຂັດຈັງຫວະການເວົ້າ.

4) ການເວົ້າໂຕ້ຕອບຂອງຄູ່ສົນທະນາ (Adjacency pairs) ແມ່ນການໃຊ້ຄຳເວົ້າໃນການ ຖາມຄຳຖາມ ເຊື້ອເຊີນຂໍ້ຮ້ອງຂໍໂທດຊົມເຊີຍຊຶ່ງໃນການຕອບຄຳຖາມຕ້ອງມີຄວາມກ່ຽວຂ້ອງກັບສ່ວນທຳອິດທີ່ຜູ້ເວົ້າຄົນທຳອິດໄດ້ກ່າວໄວ້ຊຶ່ງເປັນການສະແດງການໂຕ້ຕອບຂອງຄູ່ສົນທະນາ.

5) ຮູບແບບການສົນທະນາໃນຊີວິດປະຈຳວັນ (Conversational routines) ແມ່ນທຳ ມະຊາດຂອງການສົນທະນາທີ່ບຸກຄົນສະແດງອອກທາງການເວົ້າມີຄວາມລ່ຽນໄຫຼຂອງບົດສົນທະນາມີການ ສ້າງຄວາມສົນໃຈໃຫ້ກັບຜູ້ຟັງການປ່ຽນຫົວຂໍ້ການເວົ້າໄດ້ຕາມຄູ່ສົນທະນາຕ້ອງການ.

6) ການປ່ຽນຫົວຂໍ້ສົນທະນາ (Topic shift) ແມ່ນການປ່ຽນຫົວຂໍ້ເລື່ອງທີ່ເວົ້າເມື່ອຄູ່ສົນທະນາບໍ່ຕ້ອງການທີ່ຈະເວົ້າກ່ຽວກັບເລື່ອງເກົ່າຍາວເກີນໄປເປັນການສົນທະນາເຂົ້າສູ່ຫົວຂໍ້ເລື່ອງໃໝ່.

7) ການປິດບົດສົນທະນາ (Closing) ແມ່ນການກະກຽມທີ່ຈະຈົບບົດສົນທະນາປິດເລື່ອງທີ່ເວົ້າກັນຢູ່ເຊັ່ນ: It was nice talking to you.

Brown. J (2008: 228) ໄດ້ເວົ້າເຖິງໂຄງສ້າງໂດຍທົ່ວໄປຂອງການສົນທະນາຊຶ່ງເປັນ ຊຸດທີ່ຈະເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ ແລະ ເປັນກົດເກນພື້ນຖານໃນການສົນທະນາ ມີດັ່ງນີ້:

ຫົວຂໍ້ທີ່ໄດ້ຮັບການສະເຫນີ ໃນການສົນທະນາ (Topic nomination) ເວົ້າວ່າ ເມື່ອຜູ້ເວົ້າເວົ້າເລື່ອງທີ່ໄດ້ຮັບຄວາມສົນໃຈຈາກຜູ້ຟັງໂດຍໃຊ້ທ່າທາງ ແລະ ສີຫນ້າທີ່ເຫມາະສົມຈະເຮັດໃຫ້ການສົນທະນານັ້ນ ຕໍ່ເນື່ອງ ແລະ ຫນ້າສົນໃຈ.

ການພັດທະນາຫົວຂໍ້ສົນທະນາ (Topic Development ) ແມ່ນເມື່ອມີຫົວຂໍ້ໃນການສົນທາແລ້ວຜູ້ເຂົ້າຮ່ວມໃນການສົນທະນາຕ້ອງເລີ່ມດຳເນີນການພັດທະນາຫົວຂໍ້ສົນທະນາໃໝ່.

ການສັບປ່ຽນກັນເວົ້າ (Turn-taking ) ແມ່ນ ສີລະປະທີ່ຈະເຮັດໃຫ້ເກີດຄວາມຊຳນານໃນຕົວເກນການສົນທະນາລະຫວ່າງຜູ້ຮ່ວມສົນທະນາ ໃນການສັບປ່ຽນກັນເວົ້າຈະເຮັດໃຫ້ບັນລຸເປົ້າຫມາຍຂອງການໃຊ້ພາສາໃນການສື່ສານທີ່ມີປະສິດທິພາບໄດ້.

ຫົວຂໍ້ສົນທະນາທີ່ຊັດເຈນ (Topic clarification) ແມ່ນການສະແດງໃຫ້ເຫັນເຖິງຮູບແບບທີ່ ຫຼາກຫຼາຍໃນການກະຕຸ້ນໃຫ້ຜູ້ຮຽນຄົ້ນຫາວິທີແກ້ບັນຫາຕ່າງໆດ້ວຍຕົນເອງ ແລະ ເປັນເປົ້າຫມາຍຂອງຜູ້ເວົ້າ ແລະ ຜູ້ຮ່ວມສົນທະນາໃນການທີ່ຈະເຂົ້າໃຈສິ່ງດຽວກັນ.

ການແກ້ໄຂ (Repair) ແມ່ນການໃຊ້ພາສາໃນການສົນທະນາທີ່ຜິດພາດ ແລະ ຕ້ອງແກ້ໄຂໂດຍ ທັນທີເມື່ອມີຜູ້ທີ່ເຂົ້າໃຈຜິດຊຶ່ງຖືເປັນຍຸດທະວິທີໃນການສື່ສານ.

ການປ່ຽນ ແລະ ການລຽງຫົວຂໍ້ໃນການສົນທະນາ (Topic shifting and avoidance) ຈະມີ ຜົກະທົບຕໍ່ການໃຊ້ຄຳເວົ້າການໃຊ້ພາສາທ່າທາງເປັນສັນຍາລັກໃນການລຽງ ຫຼື ປ່ຽນຫົວຂໍ້ໃນການ ສົນທະນາໃໝ່.

ການຂັດຈັງຫວະການເວົ້າ (Interruptions) ແມ່ນ ການແຊກໃນການສົນທະນາຊຶ່ງຜູ້ຂັດຈັງຫວະຕ້ອງໃຊ້ພາສາທີ່ເໝາະສົມໃນການເວົ້າຂັດຈັງຫວະ.

ສະຫຼຸບໂຄງສ້າງຂອງບົດສົນທະນາເບື້ອງຕົ້ນໄດ້ວ່າ ໃນບົດສົນທະນາໜຶ່ງໆຈະປະກອບ ການເປີດບົດສົນທະນາໂດຍການສະເໜີຫົວຂໍ້ໃນການສົນທະນາການພັດທະນາຫົວຂໍ້ໃນການສົນທະ ສັບປ່ຽນກັນເວົ້າເຊັ່ນ: ຄຳຂໍຮ້ອງຄູ່ກັບຄຳຕອບຮັບຄຳຂໍຮ້ອງຄຳທັກທາຍຄູ່ກັບຄຳທັກທາຍເປັນຕົ້ນ ການແຊກ ຫຼື ການເວົ້າຂັດຈັງຫວະ ການປ່ຽນ

ແລະ ການລຽງຫົວຂໍ້ໃນການສົນທະນາ ການປິດສົນທະ ເທື່ອກ່ອນທີ່ຜູ້ເວົ້າຈະສະແດງ ຈຸດປະສົງທີ່ແທ້ຈິງຂອງຕົນ ຜູ້ເວົ້າ ກໍ່ອາດຈະເວົ້າຄໍາໃດຄໍາໜຶ່ງກ່ອນ ເລື່ອງສົນທະນາກໍ່ໄດ້ລັກສະນະທົ່ວໄປໃນການສົນທະນາຕ້ອງມີກົດເກນທີ່ ເໝາະສົມ ຊຶ່ງຂຶ້ນຢູ່ກັບ " ແລະ ວັດທະນະທໍາຂອງເຈົ້າຂອງພາສາ.

## 3.3 ການສອນທັກສະການສົນທະນາ

ໃນການສອນບົດສົນທະນານອກຈາກຈະສອນເດັກປົກກະຕິແລ້ວ ຍັງສາມາດນໍາໄປສອນເດັກທີ່ມີຄວາມຜິດປົກກະຕິໄດ້ດັ່ງນີ້:

Hedgdon, L (2007: 1-5) ໄດ້ສຶກສາວິທີໃນການສອນທັກສະການສົນທະນາໂດຍໃຊ້ຍຸດທະວິທີສິ່ງທີ່ເບິ່ງເຫັນດ້ວຍຕາເປົ່າໃຫ້ກັບເດັກທີ່ມີຄວາມຜິດປົກກະຕິທາງການສື່ສານ ແລະ ອາລົມຊຶ່ງມີ 6 ອົງປະກອບດັ່ງນີ້:

1) ໜັງສືບົດສົນທະນາ (Conversation books) ຊ່ວຍໃຫ້ເດັກສ້າງຫນັງສືບົດສົນທະນາແບບສາມາດຖືໄປນໍາໄດ້ສະບັບເທົ່າກັບກະເປົ໋າ ໃນໜັງສືປະກອບໄປດ້ວຍຮູບພາບສະຕິກເກີທີ່ລວບລວມຄວາມສໍາຄັນກັບບຸກຄົນກິດຈະກໍາ ແລະ ເຫດການຕ່າງໆໜັງສືບົດສົນທະນາຈະຊ່ວຍໃຫ້ນັກຮຽນຮູ້ວ່າຈະເວົ້າຫຍັງຈະຖາມຫາຫຍັງ.

2) ເດົາເບິ່ງວ່າຂ້ອຍເຮັດຫຍັງ (Guess what I did?) ສິ່ງນີ້ຈະຄືກັບໜັງສືບົດສົນທະນາ ແຕ່ຈະເພີ່ມຄວາມຕື່ນເຕັ້ນໃນຊີວິດທີ່ເກີດຂຶ້ນຂອງນັກຮຽນເລື່ອນັກຮຽນໄປບ່ອນໃດທີ່ພິເສດ ແລະ ມີປະສົບການທີ່ມີຄວາມໝາຍ ເກັບລວບລວມຮູບພາບປີ້, ໃບປິວລາງວັນ, ເຄື່ອງມີຄ່າ, ໃບຈ່າຍເງິນ ເກັບລວບລວມໃນ ໜັງສືສົນທະນາເມື່ອເປີດຂຶ້ນເບິ່ງຈະຮູ້ວ່າເຫດການໃດເກີດຂຶ້ນຕອນໃດ.

3) ຮຽນໃນສິ່ງຂອງທີ່ບຸກຄົນເວົ້າເຖິງ (Learning stuff that other people talk about) ສອນໃນເລື່ອງບຸກຄົນສໍາຄັນໃນຊີວິດຂອງນັກຮຽນ ເລືອກໃນສິ່ງທີ່ນັກຮຽນຄົນອື່ນໃຫ້ຄວາມສົນໃຈເຊັ່ນ: ເລື່ອງກິລາໃນລະດູການຂອງຮ໋ອກກີ້ສອນກ່ຽວກັບເລື່ອງນັ້ນຮຽນກ່ຽວກັບຊື່ຜູ້ຫຼິ້ນເບິ່ງເກມການ ແຂ່ງຂັນ ແລະ ເຊຍອ່ານຫົວຂໍ້ການແຂ່ງຂັນໃນຫນັງສືພິມອ່ານກ່ຽວກັບເກມກິລາຮ໊ອກກີ້ທຸກມື້ເພື່ອຕິດຕາມເຫດການທີ່ເກີດຂຶ້ນ.

4) ຮູ້ຈັກຄູ່ສົນທະນາ (Know your partner) ສອນທັດສະນະການສື່ສານໂດຍການຈື່ຈໍາຂໍ້ ມູນສໍາຄັນຂອງຄູ່ສົນທະນາເຊັ່ນ: ຈື່ໄດ້ວ່າຫມູ່ເພື່ອນໄປພັກຜ່ອນວັນຢຸດຖາມຄໍາຖາມ How was you vacation? ເຮັດຫນັງສືສົນທະນາກ່ຽວກັບບຸກຄົນນັ້ນໆ ແຍກເປັນຫນ້າຂຽນບັນລະຍາຍກ່ຽວກັບສິ່ງທີ່ ນັກຮຽນ ຮູ້ກ່ຽວກັບບຸກຄົນນັ້ນ.

5) ຄິດກ່ຽວກັບຜູ້ເລີ່ມຕົ້ນສົນທະນາ (Think conversation starters) ລະດົມສະໝອງຂຽນລາຍການກ່ຽວກັບຄໍາຖາມ ຫຼື ການເລີ່ມຕົ້ນຂອງບົດສົນທະນາຄໍາຖາມໃນການສົນທະນາອາດສະເພາະເຈາະຈົງສໍາລັບບຸກຄົນຫນຶ່ງເທົ່ານັ້ນເຊັ່ນ:ການເລີ່ມຕົ້ນຂອງບົດສົນທະນາທົ່ວໄປ

What's up!

What's up?

What have you been doing?

What are you going to do this weekend?

ຄໍາຖາມທີ່ສະເພາະເຈາະຈົງໃນການສົນທະນາ.

How did you like the world Cup in Brazil?

How was your (Vacation activity) trip to Luangprabang?

6) ຈື່ຈຳກົດເກນໃນການສົນທະນາ (Remember the rules) ສະແດງໃຫ້ເຫັນກົດເກນໃນການເປັນຄູ່ສົນທະນາທີ່ດີເຊັ່ນ: ບອກບາງສິ່ງບາງຢ່າງໃນການພົບກັນຄັ້ງທຳອິດ Hi, What's up? How, are you? ຖາມຄຳຖາມ ລໍຖ້າຈົນກວ່າຈະເຖິງເວລາສັບປ່ຽນກັນເວົ້າ ເວົ້າເມື່ອເຖິງສັບປ່ຽນຕົນເອງຫ້າມເວົ້າຂັດຈັງຫວະເປັນຕົ້ນ.

ແມ່ນຫຍັງແມ່ນ ກົດເກນຂອງການສົນທະນາການສ້າງຄວາມສົນໃຈໃຫ້ກັບຜູ້ຟັງເປັນແບບໃດຈະເລີ່ມຕົ້ນຫົວຂໍ້ສົນທະນາແບບໃດດີ ຈະສິ້ນສຸດດ້ວຍຫົວຂໍ້ສົນທະນາໃດຈະຂັດຈັງຫວະການເວົ້າແບບໃດຈະແກ້ໄຂແບບໃດໃຫ້ຖືກຕ້ອງ ຖາມຄຳຖາມຫັຍງໃຫ້ຊັດເຈນ ຄຳຖາມເຫຼົ່ານີ້ກ່ຽວຂ້ອງກັນກັບທຸກໆກິດຈະກຳໃນຄວາມສາມາດກ່ຽວກັບພາສາສາດ ຊຶ່ງເວົ້າເຖິງຄວາມສາມາດໃນການໃຊ້ພາສາແມ່ໃນການສື່ສານ ແລະ ມີສ່ວນໜ້ອຍຫຼາຍທີ່ຈະໃຊ້ພາສາຕ່າງປະເທດໃນຫຼັກສູດດັ້ງເດີມໃນການຈັດການຮຽນການສອນໂດຍໃຊ້ບົດສົນທະນາ.

Sandbox, L (2013: 152) ໄດ້ອະທິບາຍກ່ຽວກັບທັກສະການສົນທະນາວ່າການສົນທະນາເປັນການສ້າງພື້ນຖານໃນການພັດທະນາຄວາມສຳພັນການເຮັດວຽກຮ່ວມກັນກັບບຸກຄົນອື່ນໆການຕິດຕໍ່ສື່ສານກັບຄົນອື່ນໆໃນມູມມອງຂອງຊີວິດ ເຖິງວ່າສີລະປະຂອງການສົນທະນາເປັນການຍາກທີ່ຈະຈັບໃຈຄວາມ ໄດ້ຍຸດທະວິທີໃນການສອນທັກສະການສົນທະນາພື້ນຖານມີ 6 ຂັ້ນຕອນດັ່ງນີ້:

1) ຂັ້ນການຈຳລອງທັກສະ ແມ່ນການເບິ່ງ ແລະ ເກັບລວບລວມຂໍ້ມູນ ໂດຍນັກຮຽນ-ຮຽນຮູ້ຈາກການເບິ່ງບຸກຄົນຕ່າງໆຈາກນັ້ນເປັນຂັ້ນຕອນຂອງການຝຶກທັກສະ, ສະຖານະການຈຳລອງເປັນການສອນທີ່ສະໜຸກ ແລະເປັນວິທີການສອນທີ່ມີປະສິດທິພາບ ເພາະເຮົາສາມາດໃຫ້ເດັກຮຽນຈາກຕົວຢ່າງຫຼັງຈາກ ສະຖານະການຈຳລອງແລ້ວເປັນການທັກທາຍ ແລະ ການສົນທະນາທີ່ເໝາະສົມ ໃຫ້ນັກຮຽນເຫັນວ່າຄຳຖາມຖືກຖາມແນວໃດຕອບແນວໃດ ແລະ ບຸກຄົນຢູ່ບ່ອນໃດຮັກສາກົດເກນງ່າຍໆ ແລະ ສັ້ນໆ ເພື່ອທີ່ຈະສະແດງໃຫ້ເຫັນພື້ນຖານຂອງທັກສະແລະ ຈາກນັ້ນຈຶ່ງອະທິບາຍຢ່າງລະອຽດ.

2) ຂັ້ນຕອນການຝຶກ ແມ່ນຄ້າຍຄືກັບທັກສະອື່ນໆທັກສະທາງສັງຄົມຈຳເປັນຈະຕ້ອງແຍກໃຫ້ເປັນຂັ້ນຕອນຍ່ອຍໆ ແລະ ຈາກນັ້ນຝຶກຫຼາຍໆຄັ້ງສະຖານະການຈຳລອງເປັນການທັກທາຍໂດຍການສອນໃຫ້ນັກຮຽນ ເວົ້າ "Hello" ແລະ ອະທິບາຍເພີ່ມຕື່ມກ່ຽວກັບ "Hello. How are you?".

3) ຂັ້ນການຖ່າຍທອດດ້ວຍຖ້ອຍຄຳທີ່ຫຼາກຫຼາຍທັກສະການສົນທະນາຖືກພັດທະນາມາຈາກ ຫຼາຍໆບຸກຄົນຫຼາຍຖ້ອຍຄຳຫຼາຍສະຖານະການເວົ້າໂດຍສະຫຼຸບແມ່ນການໃຊ້ຄຳຖາມ ແລະ ການໃຊ້ຄຳໃນສະຖານະການທີ່ຫຼາກຫຼາຍເຊັ່ນ: "Good morning" "Hello" & "Hi there" ໂດຍການໃຫ້ນັກຮຽນ ຮູ້ຈັກທັກທາຍທີ່ຫຼາກຫຼາຍ ແລະ ການຕອບທີ່ຫຼາກຫຼາຍຕັ້ງແຕ່ມີການສົນທະນາເກີດຂຶ້ນໃນທຸກໆມື້ ບຸກຄົນທີ່ຫຼາກຫຼາຍສະມາຊິກໃຫມ່ໃນ ໂຮງຮຽນ ແລະ ກຸ່ມຄົນໃນສັງຄົມນັ້ນທີ່ຊ່ວຍໃຫ້ນັກຮຽນ ສົນທະນາ.

4) ຂັ້ນການໃຊ້ພາສາກາຍ (Body language) ເມື່ອທີ່ເຮົາຝຶກການສົນທະນາໃຫ້ແນ່ໃຈວ່າເຮົາເປັນຕົວຂອງເຮົາເອງໃຊ້ພາສາທ່າທາງ ແລະ ການສະແດງອອກທາງສີຫນ້າ (Body , facial cues) ເຖິງວ່າຈະເປັນການສະແດງອອກທີ່ຍາກສຳຫຼັບເດັກນ້ອຍທີ່ຈະເຂົ້າໃຈ ແຕ່ບົດບາດເຫຼົ່ານັ້ນລວມຢູ່ໃນສະຖານະການ ແລະ ການສອນນຳອີກ.

5) ຂັ້ນເຮັດແບບໃດຈຶ່ງຈະບໍ່ໃຫ້ເວົ້າຊ້ຳນັກຮຽນຂ້ອນຂ້າງທີ່ຈະເສົ້າສະບາຍດີ ແລະ ຖາມຊື່ໃຜບາງຄົນຊຶ່ງເປັນສ່ວນໜຶ່ງຂອງການສົນທະນານັກຮຽນຈະຕ້ອງເວົ້າຊ້ຳໃຊ້ຖ້ອຍຄຳດຽວກັນໃນສະຖານະການດຽວກັນວິທີທີ່ຈະຝຶກການເວົ້າສິ່ງນັ້ນພຽງເທື່ອດຽວຄື (Hold up a finger as a visual cue during role play) ຍົກຕົວຢ່າງຖ້າມີຄຳຖາມ ຫຼື ຂໍ້ຄວາມທີ່ຕ້ອງໃຊ້ພຽງໜຶ່ງເທື່ອໃຫ້ຍົກມືຂຶ້ນໂດຍການຍົກນິ້ວຊີ້ຂຶ້ນລະຫວ່າງການຝຶກສົນທະນາ ຫຼັງ

ຈາກນັກຮຽນຖາມຄຳຖາມໃຫ້ເອົາມືລົງໄດ້ນີ້ເປັນບົດບາດທີ່ນັກຮຽນຮູ້ ໃນການຖາມຄຳຖາມຫຼັງຈາກນັກຮຽນໃຊ້ບົດບາດນີ້ ແລະ ປະສົບຄວາມສຳເລັດມາແລ້ວຫຼາຍຄັ້ງຝຶກກັບບົດບາດທີ່ເຮົາເອງເບິ່ງບໍ່ເຫັນຈາກນັ້ນ ໃຫ້ເພີ່ມການຈື່ຈຳທີ່ຈະຖາມຄຳຖາມພຽງເທື່ອດຽວ.

6) ຂັ້ນການຊົມເຊີຍ ແລະ ທວນຄືນການເວົ້າຊົມເຊີຍນັກຮຽນໃນການເວົ້າທັກທາຍ ໂດຍໃຊ້ວະລີພຽງໜຶ່ງຄັ້ງ ແລະ ການສົນທະນາຢ່າງເໝາະສົມ ເວົ້າຄຳຊົມເຊີຍນັກຮຽນເປັນປະຈຳໃນຂະນະທີ່ກຳລັງຝຶກ ຫຼື ຂັ້ນຕອນການຝຶກນັ້ນຈົບລົງແລ້ວກໍຕາມ ເພື່ອທີ່ຈະເຮັດໃຫ້ນັກຮຽນສາມາດຈື່ຈຳໄດ້ຢ່າງດີ ພະຍາຍາມ ບອກວ່ານັ້ນແມ່ນສິ່ງທີ່ຖືກຕ້ອງແລ້ວເຊັ່ນ: “I like the way you asked Mr. James if he was having a nice day only once” ຖ້າສະຖານະການນັ້ນເປັນທຳມະຊາດສະຖານະການຈຳລອງເປັນການຮຽນຮູ້ ແລະ ເປັນປະສົບການທີ່ດີຕໍ່ນັກຮຽນ.

ໃນບົດວິໄຈຄັ້ງນີ້ຜູ້ວິໄຈຈະໃຊ້ຂັ້ນຕອນຂອງການສອນເວົ້າພາສາອັງກິດ ໂດຍໃຊ້ເທັກນິກ ການສອນບົດສົນທະນາຂອງ (Dornyei, Z. & Thurrell, S, 1992: 3-5) ໃນການພັດທະນາຄວາມສາມາດໃນການເວົ້າພາສາອັງກິດຂອງນັກສຶກສາສາຍພາສາລາວ ປີທີ3 ເນື່ອງຈາກວ່າມີຄວາມລະອຽດ ແລະ ເໝາະສົມຕາມຂັ້ນຕອນທີ່ປະກົດໃນບົດສົນທະນາທົ່ວໄປປະກອບດ້ວຍ 7 ຂັ້ນຕອນດັ່ງນີ້: ຂັ້ນທີ 1 ການເປີດບົດສົນທະນາ (Openings), ຂັ້ນທີ 2 ການສັບປ່ຽນກັນເວົ້າ (Turn-taking), ຂັ້ນທີ 3 ການ ຂັດຈັງຫວະການເວົ້າ (Interrupting), ຂັ້ນທີ 4 ການເວົ້າໂຕ້ຕອບຂອງຄູ່ສົນທະນາ (Adjacency pairs), ຂັ້ນທີ 5 ຮູບແບບການສົນທະນາໃນຊີວິດປະຈຳວັນ (Conversaton routines), ຂັ້ນທີ 6 ການປ່ຽນຫົວຂໍ້ສົນທະນາ (Topic shift), ໂດຍຜູ້ຄົ້ນຄ້ວາໄດ້ປັບປຸງຂັ້ນທີ 7 ການປິດບົດສົນທະນາ ແລະ ການປະເມີນຜົນ (Closing and evaluation), ເພື່ອໃຫ້ຂັ້ນຕອນຕ່າງໆມີຄວາມຊັດເຈນຍິ່ງຂຶ້ນ.

## 3.4 ກິດຈະກຳໃນການສອນບົດສົນທະນາ

ສຸພັດທາ ອັກສະລານຸເຄາະ (2532: 58-60) ໄດ້ເວົ້າວ່າການໃນການຝຶກການເວົ້ານອກຈາກຜູ້ສອນ ຈະກະກຽມຜູ້ຮຽນໃນລັກສະນະທີ່ເປັນການຍຶດກຸ່ມເປັນສູນກາງ (Group centered approach) ໂດຍ ການຈັດກິດຈະກຳເປັນກຸ່ມໃຫຍ່ກຸ່ມຍ່ອຍໆ ແລະ ເປັນຄູ່ ແລ້ວຜູ້ສອນຄວນຈັດກິດຈະກຳອອກເປັນ 4 ໄລຍະດັ່ງນີ້:

1) ກິດຈະກຳກ່ອນການສົນທະນາ (Pre-conversation activities) ເປັນການກະກຽມຜູ້ ຮຽນ ໂດຍການສ້າງຄວາມສົນໃຈທົບທວນໂດຍໃຊ້ສື່ການສອນຕ່າງໆ ເຂົ້າຊ່ວຍເຊັ່ນ: ການສອນຄຳສັບການ ອອກສຽງການໃຫ້ຄວາມຮູ້ທາງວັດທະນະທຳກ່ຽວກັບການສົນທະນາທີ່ນຳມາໃຊ້ສອນການໃຫ້ຂໍ້ມູນໃນສ່ວນ ທີ່ຜູ້ຮ່ວມສົນທະນາບໍ່ມີຕົວຢ່າງເປັນຕົ້ນ.

2) ກິດຈະກຳການສົນທະນາໂດຍການກຳນົດຂອບເຂດໃຫ້ໝົດ (Controlled conversation ) ເຮັດໄດ້ໂດຍໃຫ້ຜູ້ຮຽນຝຶກສົນທະນາໂຕ້ຕອບເປັນກຸ່ມ ຫຼື ເປັນຄູ່.

3) ກິດຈະກຳການສົນທະນາໂດຍການກຳນົດຂອບເຂດເຄິ່ງໜຶ່ງ (Semi-Conversation) ຜູ້ຮຽນສົນທະນາກັນໂດຍອິດສະຫຼະພາຍໃຕ້ສະຖານະການທີ່ກຳນົດໃຫ້ ແລະ ໃຫ້ຄຳສັບ ແລະ ໂຄງສ້າງພາສາທີ່ຈຳເປັນຕ້ອງໃຊ້.

4) ກິດຈະກຳການສົນທະນາໂດຍອິດສະຫຼະ (Free conversation) ເປັນການສ້າງສະຖານະການໃຫ້ຜູ້ຮຽນມີໂອກາດສົນທະນາ ໂຕ້ຕອບກັນຢ່າງອິດສະຫຼະ ໂດຍຜູ້ຮຽນໃຊ້ຄຳສັບ ແລະ ໂຄງສ້າງເອງຕາມຄວາມເໝາະສົມ ແລະ ການກ່າວປາໄສແກ້ບັນຫາ ແລະ ການສະແດງບົດບາດສົມມຸດເຊັ່ນ: ການສົນທະນາໃຫ້ຄວາມຊ່ວຍເຫຼືອ

ກ່ຽວກັບທິດທາງການໃຫ້ເຫດຜົນໃນການໂຄສະນາສິນຄ້າ ແລະ ການໃຫ້ຜູ້ຮຽນປາໃສຢ່າງອິດສະຫຼະ ໂດຍໃຫ້ປະເດັນອະທິບາຍ.

ຈາກກິດຈະກຳໃນການສອນບົດສົນທະນາທີ່ກ່າວມາຂ້າງເທິງນັ້ນສາມາດສະຫຼຸບໄດ້ວ່າ ແຕ່ລະກິດຈະກຳມີບົດບາດສຳຄັນໃນການຈັດການຮຽນການສອນຊຶ່ງຜູ້ສອນຄວນຈະໃຊ້ກິດຈະກຳທີ່ຫຼາກຫຼາຍການສອນແຕ່ລະຄັ້ງເພື່ອຈັດປະສົບການໃຫ້ນັກຮຽນໄດ້ຮຽນຮູ້ ແລະ ນຳໄປໃຊ້ປະໂຫຍດໄດ້ແທ້ຈິງ.

### 3.5 ແນວຄິດກ່ຽວກັບອົງປະກອບຂອງການສົນທະນາ

Sacks, H, Scheglof, E. A. & Jefferson, G. (1978: 700-701) ໄດ້ເວົ້າເຖິງການສົນທະນາວ່າແມ່ນກິດຈະກຳທີ່ສະຫຼັບປ່ຽນກັນເວົ້າ (Turn - Taking activity) ທີ່ສາມາດອະທິບາຍໄດ້ ລັກສະນະ 14 ປະການດັ່ງນີ້:

1) ໃນການສະຫຼັບປ່ຽນກັນເວົ້າແຕ່ລະເທື່ອຕ້ອງມີການປ່ຽນຜູ້ເວົ້າສະເໝີ.

2) ໃນການເວົ້າເທື່ອທຳອິດຈະມີຜູ້ເວົ້າພຽງຄົນດຽວເທົ່ານັ້ນ

3) ການເວົ້າພ້ອມກັນຂອງຄູ່ສົນທະນານັ້ນສາມາດເກີດຂຶ້ນໄດ້ແຕ່ບໍ່ໃຫ້ຫຼາຍປານໃດ

4) ການສະຫຼັບປ່ຽນກັນເວົ້າແຕ່ລະເທື່ອອາດຈະເຮັດໃຫ້ເກີດການນິ້ງງຽບຫຼືເວົ້າຊ້ອນກັນກໍໄດ້ຊຶ່ງຖືເປັນເລື່ອງປົກກະຕິໃນການສົນທະນາແຕ່ລະເທື່ອຈະເປັນການລຽງລຳດັບການເວົ້າທີ່ແນ່ນອນ.

5) ການສະຫຼັບປ່ຽນກັນເວົ້າແຕ່ລະການສະຫຼັບຈະມີຂະໜາດທີ່ແຕກຕ່າງກັນໄປບໍ່ແນ່ນອນ

6) ໄລຍະເວລາທີ່ໃຊ້ໃນການສົນທະນາໃນແຕ່ລະຄັ້ງບໍ່ສາມາດກຳນົດລ່ວງໜ້າໄດ້

7) ຄຳເວົ້າຂອງຜູ້ເວົ້າແຕ່ລະຝ່າຍຈະບໍ່ສາມາດກຳນົດ ຫຼື ວາງແຜນໄວ້ລ່ວງໜ້າໄດ້

8) ການສະຫຼັບປ່ຽນກັນເວົ້າຂອງຜູ້ເວົ້າແຕ່ລະຄົນນັ້ນຈະບໍ່ມີການກຳນົດໄວ້ລ່ວງໜ້າ

9) ຈຳນວນຂອງຜູ້ທີ່ເຂົ້າຮ່ວມສົນທະນາຕ້ອງມີຢ່າງໜ້ອຍ 2 ຄົນ

10) ການເວົ້າແຕ່ລະຄັ້ງອາດຈະເລີ່ມຫຼືຢຸດລົງເມື່ອໃດກໍໄດ້

11) ຜູ້ເວົ້າໃນຂະນະໜຶ່ງຈະເປັນຜູ້ເລືອກຜູ້ເວົ້າຄົນຕໍ່ໄປຂະນະດຽວກັນກັບອີກຝ່າຍໜຶ່ງອາດສະເໜີຕົນເອງເປັນຜູ້ເວົ້າຕໍ່ໄປໄດ້ເຊັ່ນດຽວກັນ

12) ຫນ່ວຍໂຄງສ້າງຂອງການສັບປ່ຽນກັນເວົ້າ (Turn construction unit) ມີຄວາມຫຼາກ" ແຕກຕ່າງກັນໄປໄດ້ເຊັ່ນ: ອາດຈະເປັນພຽງຄຳໆດຽວ ຫຼື ປະໂຫຍກທັງປະໂຫຍກກໍ່ໄດ້.

13) ກົນໄກແກ້ໄຂການເວົ້າ (Repair mechanism) ເກີດຂຶ້ນໄດ້ທຸກເມື່ອທີ່ມີຄວາມຜິດພາດເກີດຂຶ້ນລະຫວ່າງການ

ສົນທະນາເຊັ່ນ: ເມື່ອຜູ້ເວົ້າທັງສອງຝ່າຍເວົ້າພ້ອມກັນຜູ້ເວົ້າຝ່າຍໃດຝ່າຍໜຶ່ງ ການເວົ້າອັດຕະໂນມັດເພື່ອໃຫ້ຜູ້ເວົ້າອີກຝ່າຍໜຶ່ງດຳເນີນການເວົ້າຕໍ່ໄປຈົນສຳເລັດ.

14) ນອກຈາກນີ້ຂະນະທີ່ສົນທະນານັ້ນຫນ່ວຍໂຄງສ້າງຂອງການສະຫຼັບປ່ຽນກັນເວົ້າ (Turn conversation unit)

ອາດຈະແມ່ນຄຳວະລີອະນຸປະໂຫຍກ ຫຼື ປະໂຫຍກກໍໄດ້ ແລະ ຈະພົບວ່າການເວົ້າພ້ອມກັນ (Simultaneous speech) ການເວົ້າຊ້ອນ (Overlap) ແລະ ການຢຸດງຽບ (Silence) ເປັນສິ່ງທີ່ເກີດຂຶ້ນໄດ້ຢ່າງເປັນປົກກະຕິລວມທັງກົນໄກການແກ້ໄຂການເວົ້າກໍ່ຈະເກີດໃນການສົນທະນາເມື່ອປະກົດບັນຫາ ຫຼື ຄວາມຜິດພາດຂຶ້ນລະຫວ່າງສົນທະນາ.

ສະຫຼຸບວ່າການສະຫຼັບປ່ຽນກັນເວົ້າຈະມີລັກສະນະພິເສດ 2 ປະການຄືໃນການສົນທະນາແຕ່ລະຄັ້ງຈະມີການລຽງລຳດັບການເວົ້າທີ່ຂ້ອນຂ້າງແນ່ນອນ ແລະ ຄຳເວົ້າຂອງຜູ້ເວົ້າຝ່າຍຜູ້ໃຫ້ບໍລິການຈະສາມາດກຳນົດ ຫຼື ວາງແຜນໄວ້ລ່ວງໜ້າເນື່ອງຈາກການໃຊ້ພາສາຂອງລູກຄ້າ ແລະ ຜູ້ໃຫ້ບໍລິການເກີດຂຶ້ນໃນບໍລິບົດສະເພາະ ເພາະຮ້ານອາຫານທີ່ໄດ້ຮັບລິຂະສິດຈາກຕ່າງປະເທດມັກຕ້ອງຮັກສາມາດຕະຖານຂອງຮ້ານປຽບເໝືອນວ່າ ຮ້ານເປັນສະຖາບັນ (Institution) ແຫ່ງໜຶ່ງທີ່ຜູ້ໃຫ້ບໍລິການຈະໄດ້ຮັບການຝຶກຝົນ ແລະ ດຳເນີນຂັ້ນຕອນ ການສົນທະນາຕາມລຳດັບຂັ້ນຕອນທີ່ຜ່ານການອົບຮົມມາໃຫ້ເປັນມາດຕະຖານດຽວກັນພາສາຂອງການ ສົນທະນາໃນການສັ່ງອາຫານຈຶ່ງໜ້າຈະມີລັກສະນະທີ່ແຕກຕ່າງໄປຈາກການສົນທະນາໂດຍທົ່ວໄປຕາມແນວ ຄິດຂອງ (Sacks, H, Schegloff, E. A. & Jefferson, G)

Cameson, D (2001: 89-90) ໄດ້ໃຫ້ຄວາມເຫັນເບື້ອງຕົ້ນກ່ຽວກັບອົງປະກອບຂອງການ ສະຫຼັບປ່ຽນກັນເວົ້າ ແລະ ກ່າວວ່າສະຫຼັບປ່ຽນກັນຈະເປັນຂອງຜູ້ເວົ້າຄົນດຽວໃນເວລາໜຶ່ງຜູ້ຮ່ວມການສົນທະນາມັກຈະບໍ່ເວົ້າໃນເວລາດຽວກັນພ້ອມໆກັນ ແລະ ໃນທຳນອງດຽວກັນຜູ້ຮ່ວມສົນທະນາກໍມັກຈະບໍ່ງຽບພ້ອມກັນທຸກຄົນເຊັ່ນກັນແຕ່ກໍບໍ່ໄດ້ໝາຍຄວາມວ່າການເວົ້າພ້ອມກັນ ແລະ ການຢຸດງຽບຈະບໍ່ມີທາງເກີດຂຶ້ນໃນການສົນທະນາການເວົ້າພ້ອມກັນ ແລະ ການຢຸດງຽບເປັນບັນຫາທີ່ຈະຕ້ອງໄດ້ຮັບການແກ້ໄຂ ຕົວຢ່າງ: ກໍລະນີການເວົ້າພ້ອມກັນຜູ້ເວົ້າຄົນໜຶ່ງກໍຈະສາມາດແຍ່ງສະຫຼັບສຳເລັດໂດຍມີສິດທິທີ່ຈະເວົ້າ ແລະ ໄດ້ຮັບຄວາມສົນໃຈຈາກຜູ້ຮ່ວມສົນທະນາຄົນອື່ນໆຂະນະທີ່ຄົນອື່ນຈະງຽບ ຫຼື ກໍລະນີທີ່ເກີດການຢຸດງຽບຂຶ້ນ ດົນຈົນຜູ້ຮ່ວມສົນທະນາຮູ້ສຶກອຶດອັດກໍຈະມີຜູ້ເວົ້າຄົນໜຶ່ງທຳລາຍການຢຸດງຽບ ແລະ ໄດ້ສະຫຼັບກັນ ສົນທະນາ.

Graddol, C, Cheshire, J. & Swan, J. (1994: 163-170) ໄດ້ແບ່ງການເວົ້າພ້ອມກັນ ອອກເປັນ 2 ປະເພດຫຼັກຄື: ການເວົ້າຊ້ອນ (Overlap) ຫຼື ການເວົ້າແຊກ (Interruption).

ການເວົ້າຊ້ອນຫມາຍເຖິງການເວົ້າພ້ອມກັນເກີດລະຫວ່າງຈຸດປ່ຽນສະຫຼັບປ່ຽນໂດຍຜູ້ຟັງທີ່ກຳລັງຈະ ສະຫຼັບຫນ້າທີ່ເປັນຜູ້ເວົ້າຕໍ່ໄປຄາດການຈຸດປ່ຽນສະຫຼັບປ່ຽນຄາດເຄື່ອນໂດຍອາດຈະຄິດວ່າຜູ້ເວົ້າຄົນທຳອິດ ກຳລັງຈະສະຫຼັບປ່ຽນແຕ່ແທ້ຈິງແລ້ວຜູ້ເວົ້າຄົນທຳອິດຍັງເວົ້າບໍ່ຈົບ..

ການເວົ້າແຊກໝາຍເຖິງການຕັ້ງໃຈແຍ່ງຜູ້ອື່ນເວົ້າໂດຍບໍ່ຄຳນຶ່ງວ່າຈຸດປ່ຽນສະຫຼັບມາເຖິງ ຫຼື ບໍ່ໂດຍມັກສື່ວ່າຜູ້ເວົ້າແຊກບໍ່ສົນໃຈໃນສິ່ງທີ່ຜູ້ເວົ້າອກຄົນໜຶ່ງກຳລັງກ່າວເຖິງ ແລະ ຄິດວ່າຕົນມີອຳນາດເໜືອຜູ້ເວົ້າໃນລະດັບໜຶ່ງ.

Hinds, J (1986: 10) ເວົ້າວ່າໃນເລື່ອງການເປີດ ແລະ ການປິດສົນທະນາ (Opening - closing) ມີຄວາມແຕກຕ່າງຂອງແຕ່ລະພາສາ ແລະ ວັດທະນະທຳມີແບບແຜນໃນການເປີດ - ການປິດການ ສົນທະນາທີ່ແຕກຕ່າງກັນໄປແຕ່ກໍເຮັດຫນ້າທີເຫມືອນກັນກໍ່ຄືການເປີດການສົນທະນາເປັນການເຊື່ອມຕໍ່ຊ່ອງວ່າງລະຫວ່າງາວະທີ່ບໍ່ມີການສື່ສານກັບພາວະທີ່ມີການສື່ສານກັບພາວະທີ່ບໍ່ມີການສື່ສານ.

ຈາກແນວຄວາມຄິດກ່ຽວກັບອົງປະກອບຂອງການສົນທະນາສາມາດສະຫຼຸບໄດ້ວ່າໃນການສົນທະນາມີການເປີດປົດສົນທະນາການສະຫຼັບປ່ຽນກັນເວົ້າການແກ້ໄຂການເວົ້າການເວົ້າຊ້ອນການເວົ້າພ້ອມກັນການມຢຸດງຽບການຮຽກເອີ້ນການຂັດຈັງຫວະການເວົ້າ ແລະ ການປິດປົດສົນທະນາເປັນຕົ້ນຂັ້ນຕອນທີ່ຜູ້ຄົ້ນຄວ້າເລືອກໃຊ້ປັບປຸງ

ມາຈາກຂອງ (Dornyei, Z & Thurrell, S, 1992: 3-5) ມີສ່ວນທີ່ຄ້າຍຄືກັນຄື: ການເປີດບົດສົນທະນາການສະຫຼູບປ່ຽນກັນເວົ້າການຂັດຈັງຫວະການເວົ້າການປິດບົດສົນທະນາສ່ວນທີ່ມີຕື່ມເຂົ້າມາແມ່ນການເວົ້າໂຕ້ຕອບຂອງຄູ່ສົນທະນາຮູບແບບການສົນທະນາໃນຊີວິດປະຈຳວັນການປ່ຽນຫົວຂໍ້ສົນທະນາການປິດບົດສົນທະນາ ແລະ ການປະເມີນຜົນ.

## 4. ທັດສະນະຄະຕິ (Attitude)

ທັດສະນະຄະຕິເປັນອົງປະກອບສຳຄັນຕໍ່ການປ່ຽນພາສາເປັນຢ່າງຍິ່ງເພາະເມື່ອນັກຮຽນມີທັດສະນະຄະຕິທີ່ດີວິຊາທີ່ຮຽນກໍຈະເຮັດໃຫ້ນັກຮຽນເດຄວາມສົນໃຈເອົາໃຈໃສ່ຕໍ່ການຮຽນແລະເຂົ້າໃຈບົດຮຽນໄດ້ຫຼາຍຂຶ້ນນອກຈາກນີ້ທັດສະນະຄະຕິເປັນອົງປະກອບສຳຄັນໃນການປັບປ່ຽນພຶດຕິກຳການຮຽນຂອງນັກຮຽນຊຶ່ງໃນເລື່ອງນີ້ນັກວິຊາການ, ນັກສຶກສາ, ຜູ້ຊ່ຽວຊານໄດ້ໃຫ້ຄວາມຫມາຍຂອງທັດສະນະຄະຕິຕໍ່ການຮຽນດັ່ງນີ້:

### 4.1 . ຄວາມໝາຍຂອງທັດສະນະຄະຕິ

ທັດສະນະຄະຕິໝາຍເຖິງອົງປະກອບທີ່ສຳຄັນຢ່າງໜຶ່ງທີ່ຈະເຮັດໃຫ້ການຮຽນບັນລຸຕາມຈຸດປະສົງຂອງການຮຽນທີ່ວາງໄວ້ໄດ້ຢ່າງນັ້ນຄືທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການຈັດການຮຽນ - ການສອນຊຶ່ງ ຈາກການລວບລວມເອກະສານດ້ານທັດສະນະຄະຕິທີ່ນັກວິຊາການໄດ້ໃຫ້ຄວາມໝາຍຂອງທັດສະນະຄະຕິໄວ້ດັ່ງຕໍ່ໄປນີ້:

Newcomb, M (1954: 128) ເວົ້າເຖິງທັດສະຄະຕິຂອງແຕ່ລະບຸກຄົນນັ້ນຂຶ້ນຢູ່ກັບລັກສະນະ ແລະສິ່ງແວດລ້ອມທີ່ນັກຮຽນໄດ້ຮັບທັດສະຄະຕິອງດສະແດງອອກມາໃນທາງພຶດຕິກຳຊຶ່ງເປັນໄປໃນສອງ ລັກສະນະຄື: ລັກສະນະຂອງຄວາມພໍໃຈມັກເອີ້ນວ່າ: ທັດສະນະຄະຕິດ້ານບວກ (Positive Attitude). ສ່ວນລັກສະນະທີ່ສອງຄືການສະແດງອອກໃນລັກສະນະຂອງຄວາມບໍ່ພໍໃຈເບື່ອຫນ່າຍຊຶ່ງເອີ້ນວ່າທັດສະນີ ຄະຕິດ້ານລົບ (Negative Attitude).

Good, C. V (1959: 48) ເວົ້າວ່າທັດສະນະຄະຕິໝາຍເຖິງຄວາມພ້ອມທີ່ຈະສະແດງອອກໃນລັກສະນະໃດລັກສະນະໜຶ່ງ ຊຶ່ງເປັນການສະໜັບສະໜູນສິ່ງເສີມ ຫຼື ຕໍ່ຕ້ານກັບສະຖານະການ ຫຼື ບຸກຄົນ ເຊັ່ນ: ຄວາມຮູ້ຮັກກຽດຊັງ ຫຼື ບໍ່ພໍໃຈໜ້ອຍຫຼາຍເທົ່າໃດຕໍ່ສິ່ງ ຫຼື ເຫດການນັ້ນ.

Hilgaro, F (1967: 214) ໄດ້ໃຫ້ຄວາມໝາຍຂອງທັດສະນະຄະຕິວ່າແມ່ນພຶດຕິກຳ ຫຼື ຄວາມຮູ້ສຶກທີ່ເກີດຂຶ້ນໃນຄັ້ງທຳອິດທີ່ມີຕໍ່ບຸກຄົນ ຫຼື ສິ່ງໃດສິ່ງໜຶ່ງຄວາມຄິດ ຫຼື ສະຖານະການໃດໆໃນທາງບວກ ຫຼື ລົບ ແລະເປັນພຶດຕິກຳທີ່ພ້ອມຈະຕອບສະຫນອງໃນຄັ້ງຕໍ່ໆໄປເພື່ອພົບກັບພຶດຕິກຳນັ້ນອີກ.

Kagan, J, & Haveman, A (1968: 618) ໄດ້ໃຫ້ຄວາມໝາຍຂອງທັດສະນະຄະຕິວ່າແມ່ນແນວໂນ້ມທີ່ເກີດຂຶ້ນໃນຄວາມຮູ້ສຶກຄວາມຄິດທັງໃນທາງບວກ ແລະ ທາງລົບທີ່ມີຕໍ່ເຫດການ ຫຼື ສິ່ງທີ່ເກີດຂຶ້ນໂດຍສະເພາະຊຶ່ງທັດສະນະຄະຕິປະກອບດ້ວຍສິ່ງສຳຄັນ 2 ປະການຄື: ຄວາມຮູ້ຄວາມເຂົ້າໃຈ ແລະ ອາລົມຄວາມຮູ້ຂອງບຸກຄົນ.

ປິຍາພອນ ວົງອະນຸຕະໂລດ (2545: 207) ໄດ້ເວົ້າເຖິງທັດສະນະຄະຕິວ່າເປັນເລື່ອງຂອງຄວາມມັກ ຫຼືຄວາມບໍ່ມັກຄວາມລຳອຽງຄວາມຄິດເຫັນຄວາມຮູ້ສຶກຄວາມເຊື່ອຟັງໃນຂອງເຮົາຕໍ່ສິ່ງໃດສິ່ງໜຶ່ງມັກເກີດຂຶ້ນເມື່ອເຮົາຮັບຮູ້ ແລະ ປະເມີນຜູ້ຄົນເຫດການຕ່າງໆໃນສັງຄົມເຮົາຈະເກີດອາລົມຄວາມຮູ້ສຶກບາງຢ່າງຄຽງຄູ່ກັນໄປກັບການຮັບນັ້ນ ແລະ ມີຜົນຕໍ່ຄວາມຄິດ ແລະ ປະຕິກິລິຍາໃນໃຈຂອງເຮົາດັ່ງນັ້ນທັດສະນະຄະຕິຈຶ່ງເປັນທັງພຶດຕິກຳພາຍນອກທີ່ອາດຈະສັງເກດໄດ້ ຫຼື ພຶດຕິກຳພາຍໃນທີ່ບໍ່ສາມາດສັງເກດເຫັນໄດ້ໂດຍງ່າຍແຕ່ມີຄວາມໂນ້ມອຽງທີ່ຈະເປັນພຶດຕິກຳພາຍໃນຫຼາຍກວ່າພຶດຕິກຳພາຍນອກ.

ຈາກຄວາມໝາຍດັ່ງກ່າວສາມາດສະຫຼຸບໄດ້ວ່າທັດສະນະຄະຕິຕໍ່ການຮຽນມີສ່ວນສຳຄັນຢ່າງຍິ່ງຕໍ່ການຈັດກິດຈະກຳການຮຽນ-ການສອນເພາະຄວາມຮູ້ສຶກຂອງນັກຮຽນທັງດ້ານບວກ ແລະ ດ້ານລົບຕໍ່ວິຊາຮຽນທັດສະນະຄະຕິເປັນຕົວກະຕຸ້ນໃຫ້ນັກຮຽນສະແດງພຶດຕິກຳໃຫ້ນັກຮຽນເກີດຄວາມຮູ້ຄວາມເຂົ້າໃຈ ຄວາມສົນໃຈ ແລະ ສົ່ງເສີມສັກກະຍະພາບຂອງນັກຮຽນໃຫ້ບັນລຸຈຸດປະສົງຂອງການຮຽນຮູ້.

## 4.2 ທັດສະນະຄະຕິຕໍ່ການຮຽນພາສາຕ່າງປະເທດ

ທັດສະນະຄະຕິມີຄວາມສຳພັນກ່ຽວຂ້ອງກັບການຮຽນການສອນພາສາຕ່າງປະເທດເປັນຢ່າງຍິ່ງຊຶ່ງທັດສະນະຄະຕິນັ້ນເປັນປັດໃຈໜຶ່ງທີ່ເຮັດໃຫ້ເກີດການຮຽນຮູ້ພາສາຊຶ່ງເປັນແຮງຂັບມາຈາກພາຍໃນ ຫຼື ພາຍ ນອກກໍໄດ້ດັ່ງທີ່ມີນັກພາສາສາດນັກວິຊາການໄດ້ໃຫ້ຄວາມເຫັນໄວ້ດັ່ງຕໍ່ໄປນີ້:

Finocchiaro, M. & Bonomo, C. J (1973: 203-204) ເວົ້າເຖິງການວັດທັດສະນະຄະຕິ ວ່າການວັດທັດສະນະຄະຕິແມ່ນການສັງເກດປະຕິກິລິຍາຂອງນັກຮຽນກັບການຮຽນ-ການສອນຊຶ່ງອາດວັດໄດ້ໂດຍການໃຊ້ເຄື່ອງມືການສັງເກດການໃຊ້ຜູ້ຊ່ວຍສັງເກດ ແລະ ການຕັ້ງຄຳຖາມກ່ຽວກັບທັດສະນະຄະຕິແບບສອບຖາມຄວາມສົນໃຈຂອງນັກຮຽນສາມາດພິຈາລະນາໄດ້ຈາກການມີສ່ວນຮ່ວມໃນຊັ້ນຮຽນການອາສາທີ່ຈະປະຕິບັດງານໃນກຸ່ມການເປັນຕົວແທນຕອບຄຳຖາມໃນໜ້າຊັ້ນຮຽນ (ຊຶ່ງແນ່ນອນວ່າຫາກ ນັກຮຽນບໍ່ເຮັດກິດຈະກຳ ຫຼື ໂຕ້ຕອບອາດຈະບົ່ງຊີ້ໄດ້ວ່ານັກຮຽນເກີດຄວາມຢ້ານກົວຫຼາຍກ່ວາຄວາມກະຕືລືລົ້ນ ຫຼື ຂາດທັດສະນະຄະຕິຕໍ່ການຮຽນ) ດັ່ງນັ້ນຄູທີ່ມີຄວາມເຂົ້າໃຈໃນເລື່ອງການວັດທັດສະນະຄະຕິຄືຜູ້ທີ່ມີຄວາມສາມາດພິຈາລະນາທັດສະນະຄະຕິໄດ້ເປັນທີ່ໜ້າພໍໃຈ.

Krashen, S. D (1984: 21) ເວົ້າໂດຍສະຫຼຸບວ່າທັດສະນະຄະຕິມີຄວາມສຳພັນກັບການຮຽນຮູ້ ພາສາທີ່ສອງດັ່ງນີ້:

1) ສົ່ງເສີມການຮຽນຮູ້ພາສາຄື: ເປັນອົງປະກອບໃນການກະຕຸ້ນໃຫ້ນັກຮຽນມີຄວາມຕ້ອງການທີ່ຈະໃຊ້ພາສາຕິດຕໍ່ກັບເຈົ້າຂອງພາສາ ຫຼື ຍອມຮັບໃນການຮຽນຮູ້ພາສານັ້ນ.
2) ສົ່ງເສີມໃຫ້ນັກຮຽນນຳພາສາໄປໃຊ້ປະໂຫຍດໂດຍທີ່ນັກຮຽນຈຳເປັນຈະຕ້ອງເຂົ້າໃຈພາສາ ແລະ ຄວາມສາມາດໃຊ້ພາສາໄດ້ຢ່າງຖືກຕ້ອງ.

ຈາກແນວຄິດກ່ຽວກັບທັດສະນະຄະຕິກັບການຮຽນພາສາອັງກິດສະຫຼຸບໄດ້ວ່າທັດສະນະຄະຕິມີຄວາມສຳຄັນຕໍ່ການຮຽນພາສາອັງກິດເພາະເມື່ອມີທັດສະນະຄະຕິທີ່ດີຕໍ່ການຮຽນຮູ້ນັກຮຽນຈະມີຄວາມຮູ້ສຶກທີ່ດີຕໍ່ການຮຽນທັດສະນະຄະຕິຊ່ວຍກະຕຸ້ນນັກຮຽນຕ້ອງການໃຊ້ພາສາ ແລະ ທັດສະນະຄະຕິທີ່ດີສາມາດຊ່ວຍໃຫ້ນັກຮຽນນຳການຮຽນຮູ້ໄປສູ່ຄວາມສຳເລັດ ແລະ ມີຄວາມພະຍາຍາມທີ່ຈະຮຽນເພີ່ມຫຼາຍຂຶ້ນ.

## 4.3 ວິທີການວັດທັດສະນະຄະຕິ

ທັດສະນະຄະຕິເປັນເລື່ອງທີ່ເກີດຂຶ້ນພາຍໃນຈິດໃຈບໍ່ສາມາດວັດໄດ້ອອກມາໂດຍກົງຊຶ່ງການວັດທັດສະນະຄະຕິທີ່ເກີດຂຶ້ນນັ້ນຈຶ່ງເປັນໄປໃນລັກສະນະການວັດໂດຍທາງອ້ອມ ແລະ ບໍ່ພຽງສຶກສາ ໃນດ້ານທັດສະນະຄະຕິຂອງບຸກຄົນເທົ່ານັ້ນແຕ່ຕ້ອງສຶກສາເຖິງລະດັບທັດສະນະຄະຕິ ຫຼື ຄວາມເຂັ້ມຂອງທັດສະນະ ຄະຕິນັ້ນນຳໂດຍນັກວິຊາການໄດ້ສະເໜີແນະຮູບແບບການວັດທັດສະນະຄະຕິໄວ້ດັ່ງນີ້:

Edwards, A (1957: 3-16) ໄດ້ນຳສະເໜີແນວທາງການວັດທັດສະນະຄະຕິໄວ້ດັ່ງນີ້:

1) ໂດຍການສຳພາດ ຫຼື ການສອບຖາມໂດຍກົງເປັນວິທີທີ່ງ່າຍ ແລະ ກົງໄປກົງມາຫຼາຍທີ່ສຸດທີ່ຜູ້ຖາມຈະໄດ້ຮັບຊາບຄວາມຮູ້ສຶກ ຫຼື ຄວາມຄິດເຫັນຂອງຜູ້ຕອບທີ່ມີຕໍ່ສິ່ງໃດສິ່ງຫນຶ່ງແຕ່ມີຈຸດດ້ອຍຢູ່ໃນຜູ້ຖາມອາດຈະບໍ່ໄດ້ຮັບຄຳຕອບເນື່ອງຈາກຜູ້ຖືກສຳພາດອາດຈະເກີດຄວາມຢ້ານກົວຕໍ່ການສະແດງຄວາມຄິດເຫັນຊຶ່ງວິທີການແກ້ໄຂຄືຜູ້ສຳພາດຈະຕ້ອງສ້າງບັນຍາກາດໃຫ້ຜູ້ຕອບຮູ້ສຶກເປັນອິດສະຫຼະ ແລະ ແນ່ໃຈວ່າຄຳຕອບຂອງເຂົາເປັນຄວາມລັບ.

2) ໂດຍການສັງເກດພຶດຕິກຳມີຜູ້ສະເໜີວ່າຕ້ອງມີການຮູ້ວ່າໃຜມີຄວາມຄິດ ຫຼື ຮູ້ສຶກຕໍ່ສິ່ງໃດກໍໃຫ້ສັງເກດພຶດຕິກຳຂອງຄົນນັ້ນຕໍ່ສິ່ງນັ້ນແຕ່ວິທີນີ້ມີຂໍ້ຈຳກັດຄືໃນກໍລະນີທີ່ເຮັດການຄົ້ນຄ້ວາຫຼາຍໆນັ້ນບໍ່ສາມາດສັງເກດພຶດຕິກຳໄດ້ໝົດທຸກຄົນນອກຈາກນີ້ທັດສະນະຄະຕິເປັນພຽງສ່ວນໜຶ່ງເທົ່ານັ້ນທີ່ຈະມີອິດທິພົນຕໍ່ບຸກຄົນດັ່ງນັ້ນໃນການທີ່ຈະຕັດສິນພຶດຕິກຳຫຍັງເຮົາຈະຄາດຫວັງພຶດຕິກຳຂອງບຸກຄົນໂດຍພິຈາລະນາ ຈາກທັດສະນະຄະຕິຢ່າງດຽວບໍ່ໄດ້ແລະໃນແບບດຽວກັນກໍ່ຈະເອົາພຶດຕິກຳທີ່ເຂົາເຈົ້າສະແດງອອກມາຕັດສິນວ່າເຂົາເຈົ້າມີທັດສະນະຄະຕິແບບໃດກໍ່ບໍ່ໄດ້ເຊັ່ນດຽວກັນ.

3) ໂດຍການສ້າງຂໍ້ຄວາມທີ່ເປັນຄວາມຄິດເຫັນຕໍ່ສິ່ງກະຕຸ້ນທີ່ຕ້ອງການວັດສະນະຄະຕິເປັນເຄື່ອງກະຕຸ້ນໃຫ້ຄົນທີ່ເຮົາຕ້ອງການໃຫ້ເຂົາເຈົ້າສະແດງທັດສະນະຄະຕິຕໍ່ສິ່ງນັ້ນຕອບຄຳຖາມໃນການເຫັນນຳ ຫຼື ບໍ່ ເຫັນນຳກັບຂໍ້ຄວາມນັ້ນໆການວັດທັດສະນະຄະຕິວິທີນີ້ຈະອອກມາໃນຮູບແບບທັດສະນະຄະຕິ ຫຼື ເຄື່ອງມື ວັດທັດສະນະຄະຕິທີ່ເໝາະຈະໃຊ້ໃນການສຶກສາ ແລະ ງານວິໄຈເນື່ອງຈາກສະດວກວ່ອງໄວຕໍ່ການຮູ້ວ່າຄ່າມັດຊິມເລຂາຄະນິດຂອງທັດສະນະຄະຕິຕໍ່ເລື່ອງໃດເລື່ອງຫນຶ່ງຂອງບຸກຄົນສ່ວນໃຫ່ຍ.

ວິທີຂອງ Likert (ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ, 2543: 90-96) ໄດ້ເວົ້າເຖິງວິທີການ ວັດ ແລະ ສ້າງເຄື່ອງວັດທັດສະນະຄະຕິດັ່ງນີ້:

ພິຈາລະນາວ່າຈະວັດທັດສະນະຄະຕິຂອງໃຜທີ່ມີຕໍ່ຫຍັງ ແລະ ໃຫ້ຄວາມໝາຍຂອງທັດສະນະຄະຕິ ແລະ ສິ່ງທີ່ວັດນັ້ນໃຫ້ແນ່ນອນ.

ເມື່ອຕີຄວາມໝາຍຂອງສິ່ງທີ່ຈະວັດແນ່ນອນແລ້ວກໍ່ສ້າງຂໍ້ຄວາມໃນແຕ່ລະຫົວຂໍ້ນັ້ນໆໂດຍໃຫ້ກວມເນື້ອໃນໃນຫົວຂໍ້ເຫຼົ່ານັ້ນ ແລະ ຂໍ້ຄວາມທີ່ຈະຖາມຈະຕ້ອງເປັນຂໍ້ຄວາມທີ່ຖາມກ່ຽວກັບຄາມຮູ້ສຶກ ຫຼື ຄວາມເຊື່ອຂອງຜູ້ຕອບຊຶ່ງ (Likert) ໄດ້ເວົ້າເຖິງຫຼັກໃນການສ້າງແບບສອບຖາມເພື່ອວັດທັດສະນະຄະຕິໄວ້ ດັ່ງນີ້:

1) ຂໍ້ຄວາມທີ່ຈະຂຽນໃນດ້ານຄວາມຮູ້ສຶກຄວາມເຊື່ອ ຫຼື ຄວາມຕັ້ງໃຈທີ່ຈະເຮັດສິ່ງໃດສິ່ງໜຶ່ງໂດຍບໍ່ມີການປອແປງ.

2) ຂໍ້ຄວາມທີ່ບັນຈຸລົງໃນ (Scale) ຈະຕ້ອງປະກອບດ້ວຍຂໍ້ຄວາມທີ່ເປັນໄປໃນທາງບວກ ແລະ ຂໍ້ຄວາມທີ່ເປັນໄປໃນທາງລົບ.

3) ຂໍ້ຄວາມແຕ່ລະຂໍ້ຈະຕ້ອງສັ້ນເຂົ້າໃຈງ່າຍຊັດເຈນຈຳນວນຂໍ້ທີ່ສ້າງຄັ້ງທຳອິດຈະມີປະມານ 2025 ຂໍ້ຄວາມແຕ່ລະຫົວຂໍ້ຂອງສິ່ງທີ່ຈະວັດເມື່ອໄດ້ຂໍ້ຄວາມພຽງພໍແລ້ວກໍບັນຈຸລົງໃນສະເກວໂດຍໃຫ້ມີ ເລືອກ 5 ຂໍ້ຄວາມດັ່ງນີ້ “ເຫັນດີນຳຢ່າງຍິ່ງ” “ເຫັນດີນຳ” “ບໍ່ແນ່ໃຈ” “ບໍ່ເຫັນດີນຳ” ແລະ “ບໍ່ເຫັນດີນຳຢ່າງ ຍິ່ງ”.

ມາດຕາວັດທັດສະນະຄະຕິທີ່ໃຊ້ສຳຫຼັບການຄົ້ນຄ້ວາໃນປັດຈຸບັນມີຢູ່ຫຼາຍຊະນິດຊຶ່ງຜູ້ຄົ້ນຄ້ວາໄດ້ສຶກສາ ແລະ ນຳມາໃຊ້ໃນການຄົ້ນຄ້ວາຄັ້ງນີ້ຄືມາດຕາວັດທັດສະນະຄະຕິຕາມວິທີການຂອງ Likert ຜູ້ຄິດຄື Rennis Likert ການວັດທັດສະນະຄະຕິໂດຍວິທີ “Summated rating” ມີຂັ້ນຕອນດັ່ງນີ້:

1) ຕັ້ງຈຸດປະສົງວ່າຕ້ອງການສຶກສາທັດສະນະຄະຕິຂອງໃຜທີ່ມີຕໍ່ສິ່ງໃດ.

2) ໃຫ້ຄວາມໝາຍຂອງທັດສະນະຄະຕິຕໍ່ສິ່ງນັ້ນໃຫ້ເດັ່ນເພື່ອໃຫ້ຮູ້ວ່າສິ່ງທີ່ເປັນຄວາມມຸ່ງຫມາຍທີ່ ກ່ຽວຂ້ອງກັບຈິດຕະວິທະຍາ (Psychological objective) ນັ້ນແມ່ນຫຍັງປະກອບດ້ວຍຄຸນລັກສະນະ ໃດແດ່ເຊັ່ນ: ເມື່ອຕ້ອງມີການວັດທັດສະນະຄະຕິຂອງນັກຮຽນຕໍ່ການຮຽນພາສາອັງກິດກໍ່ຕ້ອງວິເຄາະໃຫ້ຮູ້ ວ່າຄວນຖາມກ່ຽວກັບການຮຽນພາສາອັງກິດໃນເລື່ອງໃດແດ່.

3) ເຮັດຫນ້າທີ່ສ້າງຂໍ້ຄວາມທັດສະນະຄະຕິໃຫ້ຄວບຄຸມລັກສະນະຕ່າງໆທີ່ຈະວິເຄາະ ແລະ ຈຳນວນຂໍ້ຄວາມທີ່ສ້າງຄວນມີ 20-30 ຂໍ້ຄວາມ ແລະ ໃຫ້ມີຈຳນວຂໍ້ຄວາມທີ່ກ່າວເຖິງສິ່ງທີ່ຕ້ອງການໃນ ທາງທີ່ດີ (ທາງບວກ) ແລະ ໃນທາງທີ່ບໍ່ດີ (ທາງລົບ) ຈຳນວນຫຼາຍພຽງພໍຕໍ່ກັບການທີ່ເມື່ອນຳໄປວິເຄາະຄຸນ ນະພາບແລ້ວເຫຼືອຕາມທີ່ຕ້ອງການ.

4) ກວດສອບຂໍ້ຄວາມທີ່ສ້າງຂຶ້ນອາດຈະເຮັດໄດ້ ໂດຍຜູ້ສ້າງເອງ ຫຼື ນຳໄປໃຫ້ຜູ້ທີ່ມີຄວາມ ຊ່ຽວຊານໃນເລື່ອງນັ້ນກວດສອບ.

5) ສ້າງການທົດລອງກ່ອນນຳໄປໃຊ້ຕົວຈິງໂດຍການນຳຂໍ້ຄວາມທີ່ໄດ້ກວດສອບແລ້ວໄປທົດລອງໃຊ້ກັບກຸ່ມຕົວຢ່າງຈຳນວນຫນຶ່ງເພື່ອປັບປຸງແກ້ໄຂກ່ອນຈະບັນຈຸລົງໃນມາດຕາວັດທັດສະນະຄະຕິ.

ມາດຕາວັດທັດສະນະຄະຕິ ລິເຄີຣ໌ທກຳນົດຊ່ວງຄວາມຮູ້ສຶກເປັນ 5 ຊ່ວງ ຫຼື 5 ລະດັບຄືເຫັນດີນຳ ຢ່າງຍິ່ງເຫັນດີນຳຊື່ໆບໍ່ເຫັນດີນຳ ແລະ ບໍ່ເຫັນດີນຳຢ່າງຍິ່ງຂໍ້ຄວາມທີ່ບັນຈຸລົງໃນມາດຕາວັດປະກອບດ້ວຍ ຂໍ້ຄວາມທີ່ສະແດງຄວາມຮູ້ສຶກຕໍ່ສິ່ງໃດສິ່ງຫນຶ່ງທັງໃນທາງດີ ແລະ ທາງບໍ່ດີ ໂດຍມີຈຳນວນຂໍ້ທຽບເທົ່າກັນ ຂໍຄວາມອາດຈະມີປະມານ 18-20 ຂໍ້ຄວາມກຳນົດຕາມວິທີ Arbitrary weighting method ຊຶ່ງເປັນທີ່ນິຍົມກັນຫຼາຍທີ່ສຸດຄືກຳນົດຄະແນນເປັນ 5, 4, 3, 2, 1 (ຫຼື 4, 3, 2, 1, 0) ສຳຫຼັບຂໍ້ຄວາມທາງບວກ 1, 2, 3, 4, 5 (ຫຼື 0 1, 2, 3, 4) ສຳຫຼັບຂໍ້ມູນທາງລົບ.

ຈາກມາດຕາວັດທັດສະນະຄະຕິທີ່ກ່າວມາຂ້າງເທິງນັ້ນສາມາດສະຫຼຸບໄດ້ວ່າການວັດທັດສະນະຄະຕິໃຫ້ໄດ້ຮັບຜົນທີ່ດີທີ່ສຸດນັ້ນຂຶ້ນຢູ່ກັບວິຈາລະນາຍານຂອງຜູ້ຄົ້ນຄ້ວາວ່າຈະນຳໄປໃຊ້ວັດກັບໃຜໃນສະຖານະການໃດຊຶ່ງຂຶ້ນຢູ່ກັບອົງປະກອບຫຼາຍດ້ານດ້ວຍກັນເຖິງວ່າມາດຕາວັດທັດສະນະຄະຕິຂອງ likert ປັນວິທີທີ່ໄດ້ຮັບຜົນທີ່ຊັດເຈນແລະ ເປັນທີ່ນິຍົມໃຊ້ຫຼາຍໃນປັດຈຸບັນ (ພວງລັດ ທະວິລັດ, 2543)

## 5. ບົດວິໄຈທີ່ກ່ຽວຂ້ອງ

### 5.1 ບົດວິໄຈພາຍໃນປະເທດ

ຈາກການຄົ້ນຄ້ວາຊອກຫາຂໍ້ມູນຕາມແຫຼ່ງຕ່າງໆ ໃນການເຮັດບົດວິໄຈນີ້ບໍ່ທັນມີນັກວິໄຈຄົນໃດທີ່ຄົ້ນຄ້ວາຫົວຂໍ້ນີ້ໃນບໍລິບົດຂອງການພັດທະນາຄວາມສາມາດໃນການເວົ້າພາສາອັງກິດ ໂດຍ - ເຕັກນິກການສອນບົດສົນທະນາ ຜູ້ໄຈວິອາດເວົ້າໄດ້ວ່າບົດຄົ້ນຄ້ວາບົດນີ້ອາດເປັນບົດທຳອິດທີ່ຄົ້ນຄ້ວາບັນຫາດັ່ງກ່າວໃນບໍລິບົດຂອງການພັດທະນາທັກສະໃນການເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາເວົ້າລວມ ແລະ ໃນລະດັບຊັ້ນມັດທະຍົມໂດຍສະເພາະ.

### 5.2 ບົດວິໄຈຕ່າງປະເທດ.

ວຽກງານວິໄຈທີ່ກ່ຽວຂ້ອງກັບການສົນທະນາຜ່ານອິນເທີແນັດການສົນທະນາໃນລາຍການ ໂທລະສັບ ແລະ ວິທະຍຸມີລາຍລະອຽດຕໍ່ໄປນີ້:

Jangarun, K. (2004) ໄດ້ສຶກສາການວິເຄາະພາສາໃນຫ້ອງສົນທະນາ ແລະ ການສົນທະນາຕໍ່ ຫນ້າຂອງ ນັກຮຽນຊັ້ນ ປີທີ່ 4 ມະຫາວິທະຍາໄລເສດຕະສາດວິທະຍາໄລເຂດກຳແພງແສນ ການສຶກສາໃນ ຄັ້ງນີ້ມີວັດຖຸປະສົງເພື່ອວິເຄາະຄວາມຄ້າຍຄືກັນ ແລະ ຄວາມແຕກຕ່າງກັນໃນການສົນທະນາໃນຫ້ອງ ສົນທະນາ ແລະ ການສົນທະນາຕໍ່ຫນ້າພາຍໃນເງື່ອນໄຂການໃຊ້ພາສາ ໂຄງສ້າງປະໂຫຍດ ແລະ ຫນ້າທີ່ຂອງຄຳ ເວົ້າເຫັນວ່າການວິເຄາະການໃຊ້ພາສາມີອົງປະກອບ 4 ຫຼັກດ້ວຍກັນຄື 1. ຄຳສະແຫຼງ 2. ສັນຍະລັກ 3. ອັກສອນຫຍໍ້ 4. ຄຳອຸທານເປັນຂໍ້ມູນສະເພາະໃນການຈຳແນກການວິເຄາະໃນໂຄງສ້າງຂອງພາສາມີ 2 ຢ່າງ ດ້ວຍກັນ 1. ປະໂຫຍກທີ່ສົມບູນ 2. ປະໂຫຍກທີ່ບໍ່ສົມບູນການປະຕິບັດຕົວໃນການເວົ້າມີ 4 ໜ້າທີ່ຫຼັກ 1. ສຳນວນ 2. ຄຳສັ່ງ 3. ຂໍ້ອ້າງອີງ 4. ການປະຕິສຳພັນຂອງຄູ່ສົນທະນາຜົນທີ່ໄດ້ຮັບມີຄວາມຄ້າຍຄືຂອງພາສາ ທີໃຊ້ມີຄວາມສຳພັນກັບການໃຊ້ພາສາສະແຫຼງ ແລະ ຄຳອຸທານພາສາສະແຫຼ່ງທີ່ປະກົດໃນການສົ່ງຜ່ານ ແລະ ຄຳອຸທານຄວາມແຕກຕ່າງທີ່ພົບໃນສັນຍາລັກແລະອັກສອນຫຍໍ້ຊຶ່ງບໍ່ພົບພໍ້ໃນການສົນທະນາຕໍ່ຫນ້າ ແຕ່ພົບພໍ ໃນການໃຊ້ໃນຫ້ອງສົນທະນາແບບໃນປະ ໂຫຍກທັງສອງຢ່າງໃນການສົ່ງຜ່ານ ມີປະໂຫຍກທີ່ສົມບູນ ແລະ ອັນຫຼັກໆແມ່ນປະ ໂຫຍກປັດຈຸບັນນະການຫນ້າທີ່ຂອງຄຳເວົ້າຜົນທີ່ໄດ້ຮັບທັງສອງຢ່າງ ໃນການສົ່ງຜ່ານຄື: ການອ້າງຄຳເວົ້າທີ່ຊ້ຳໄປ-ມາການໃຊ້ສຳນວນ ການປະຕິບັດຂອງຄູ່ສົນທະນາ ແລະ ການ ໃຊ້ຄຳສັ່ງຕາມ ລຳດັບ.

ຊັດວະດີ ສອນລຳ ( 2544) ສຶກສາການໃຊ້ພາສາໃນຫ້ອງສົນທະນາ ໂດຍມີວັດຖຸປະສົງເພື່ອສຶກສາລັກສະນະການໃຊ້ພາສາໃນຫ້ອງສົນທະນາທາງອິນເທີເນັດຕາມແນວທາງຂອງການວິເຄາະພາສາລະດັບຂໍ້ຄວາມ ໂດຍເກັບຂໍ້ມູນຈາກການສົນທະນາທາງເວັບໄຊ ແລະ ຜົນການສຶກສາເຫັນວ່າລັກສະນະການໃຊ້ ພາສາໃນຫ້ອງສົນທະນາເຫັນວ່າມີ 6 ລັກສະນະດັ່ງນີ້:

1) ການເປີດ ແລະ ການປິດສົນທະນາໂດຍມີການເປີດສົນທະນາເຫັນການທັກທາຍ ແລະ ການ ຮຽກເອີ້ນຊຶ່ງເປັນການໃຊ້ພາສາໃນການເປີດການສົນທະນາ ໃນກໍລະນີທີ່ຄູ່ສົນທະນາຕ່າງກໍ່ຮູ້ຈັກຊຶ່ງກັນ ແລະກັນແລ້ວ ແລະ ເປັນລັກສະນະການເວົ້າແບບປະເຊີນຫນ້າກັບການປິດການສົນທະນາເຫັນວ່າປະກອບດ້ວຍ ສອງສ່ວນສຳຄັນຄື: ສ່ວນກ່ອນການປິດການສົນທະນາ ແລະ ສ່ວນການປິດການສົນທະນາສ່ວນກ່ອນການປິດການສົນທະນາແມ່ນລັກສະນະພາສາທີ່ສະແດງໃຫ້ເຫັນວ່າຄູ່ສົນທະນາເລີ່ມຈົບການສົນທະນາສຳຫຼັບສ່ວນການປິດສົນທະນາແມ່ນລັກສະນະພາສາທີ່ສະແດງການຈົບການສົນທະນາໂດຍສົມບູນ.

2) ການໃຊ້ເຄື່ອງໝາຍວັກ, ຕອນໃນຄຳເວົ້າ

3) ການປ່ຽນຫົວຂໍ້ໃນການສົນທະນາເຫັນວ່າມີການປ່ຽນຫົວຂໍ້ດ້ວຍການໃຊ້ປະໂຫຍກຄຳຖາມການເລົ່າເລື່ອງດ້ວຍປະໂຫຍກບອກເລົ່າ

4) ການປ່ຽນການສະກົດຄຳເພື່ອສະແດງຄວາມສຸພາບໃນການສົນທະນາ ເມື່ອຜູ້ສົນທະນາຕ້ອງ ການໃຊ້ຄຳຕ້ອງຫ້າມໃນພາສາໄທ

5) ການສະແດງອາລົມຄວາມຮູ້ສຶກ ເຫັນວ່າມີການໃຊ້ສັນຍາລັກຮູບອາລົມ (Emotions) ແລະ ການພິມແບບພິເສດເຊັ່ນ: ການພິມຕົວອັກສອນທ້າຍຂອງຄຳເພື່ອສະແດງປະລິມານທາງດ້ານອາລົມ ແລະ ຄວາມຮູ້ສຶກຂອງຜູ້ສົນທະນາ

6) ການໃຊ້ອັກສອນຫຍໍ້ ໃຊ້ເພື່ອຄວາມວ່ອງໄວໃນການພິມຂໍ້ຄວາມ. ວຽກງານວິໄຈທີ່ກ່ຽວຂ້ອງກັບການສົນທະນາໃນລາຍການໂທລະສັບ ແລະ ວິທະຍຸມີລາຍລະອຽດຕໍ່ໄປນີ້:

ເສົາວະລັກ ແຊ່ລີ້ (2546) ໄດ້ສຶກສາເລື່ອງ “ການສຶກສາລັກສະນະພາສາໃນການສົນທະນາກຸ່ມ ຍ່ອຍ” ເພື່ອສຶກສາໂຄງສ້າງລາຍການສົນທະນາກຸ່ມຍ່ອຍ ແລະ ລັກສະນະພາສາໃນການສົນທະນາກຸ່ມຍ່ອຍ ໂດຍເກັບຂໍ້ມູນມາຈາກການສົນທະນາທາງລາຍການໂທລະສັບໃນສະຖານະການປະເຊີນຫນ້າ. ຜົນການສຶກ ສາໃນເລື່ອງການເປີດ-ປິດການສົນທະນາເຫັນວ່າການເປີດ - ການປິດລາຍການແບ່ງເປັນ 2 ສ່ວນຄື:ການ ເປີດ-ການປິດລາຍການຕໍ່ຜູ້ຊົມ ແລະ ການເປີດ-ປິດລາຍການຕໍ່ຜູ້ຮ່ວມສົນທະນາລັກສະນະພາສາທີ່ປະກົດ ໃນການສົນທະນາກຸ່ມຍ່ອຍ ເຫັນວ່າມີການສະຫຼັບປ່ຽນກັນເວົ້າ ໂດຍໃຊ້ການຖາມຫຼາຍທີ່ສຸດການເວົ້າພ້ອມ ກັນນັ້ນເຫັນວ່າການໃຊ້ກິລິຍາວະລີຫຼາຍທີ່ສຸດຂະນະທີ່ລັກສະນະການສະແດງສັນຍານຕອບຮັບເຫັນວ່າປະ ກົດໃນລຳດັບການເວົ້າຂອງຜູ້ດຳເນີນລາຍການຫຼາຍທີ່ສຸດ ເພື່ອສະແດງຄວາມຮັບຜິດຊອບຕໍ່ການສົນທະນາ ລວມທັງການໃຊ້ຄຳສະແດງຄວາມສຸພາບຄຳສະແດງການຕອບຮັບ ແລະ ໃຊ້ຄຳສະແດງການຕິດຕາມ.

ມະຍູລີ ສະວັດດີເມືອງ (2540) ໄດ້ສຶກສາເລື່ອງການສຶກສາພາສາສົນທະນາທາງໂທລະສັບທາງ ສະຖານີວິທະຍຸຂ່າວສານ ແລະ ການຈາລະຈອນ ເພື່ອສຶກສາລັກສະນະພາສາທີ່ສະແດງການເປີດບົດ ສົນທະນາ ແລະ ປິດບົດສົນສົນທະນາ, ລັກສະນະພາສາ ແລະ ຫນ້າທີ່ຂອງການສັບປ່ຽນກັນເວົ້າ ການເວົ້າ ຊ້ອນກັນການຂັດຈັງຫວະການເວົ້າ ແລະ ການເວົ້າພ້ອມກັນ ແລະ ເພື່ອສຶກສາລັກສະນະພາສາທີ່ສະແດງຫົວ ເລື່ອງ ແລະ ການປ່ຽນຫົວເລື່ອງ. ຜົນການສຶກສາເຫັນວ່າລັກສະນະ ແລະ ຫນ້າທີ່ທີ່ປະກົດໃນການສັບປ່ຽນ ກັນເວົ້າຫຼາຍທີ່ສຸດຄື: ການໃຊ້ຄຳສະແດງຄວາມສຸພາບໂດຍເຫັນວ່າຈະມັກປະກົດໃນການສັບປ່ຽນກັນເວົ້າ ຂອງຜູ້ດຳເນີນລາຍການ ເພື່ອຕິດຕາມການສົນທະນາສ່ວນລັກສະນະພາສາ ແລະ ຫນ້າທີ່ປະກົດຫຼາຍທີ່ສຸດໃນ ການເວົ້າພ້ອມກັນການຂັດຈັງຫວະການເວົ້າ ແລະ ການເວົ້າພ້ອມກັນຄືກິລິຍາວະລີເຫັນວ່າ: ໃນການເວົ້າ ພ້ອມກັນ ແລະ ການຂັດຈັງຫວະການເວົ້ານັ້ນມັກປະກົດໃນການສັບປ່ຽນກັນເວົ້າຂອງຜູ້ດຳເນີນການເພື່ອສະແດງການປິດສົນທະນາ ແລະ ເພື່ອຖາມຄຳຖາມຕາມລຳດັບສ່ວນໃນການເວົ້າພ້ອມກັນເຫັນວ່າມັກປະກົດ. ການປ່ຽນກັນເວົ້າຂອງຜູ້ໂທເພື່ອໃຫ້ຂໍ້ມູນ.

ວຽກງານຄົ້ນຄວ້າທີ່ກ່ຽວຂ້ອງກັບການສົນທະນາໃນການວິເຄາະພາສາລາຍລະອຽດດັ່ງນີ້: (ຊິນທິຊາ ວາລັກ , 2539: 167) ສຶກສາພາສາໂຕ້ຕອບທີ່ມຸ່ງເນັ້ນການສົນທະນາ (Conversation) ເປັນສິ່ງ ສຳຄັນໃນກາສຶກສາເລື່ອງ “ການວິເຄາະພາສາລະດັບຂໍ້ຄວາມປະເພດຕ່າງໆໃນພາສາໄທ” ຊຶ່ງແບ່ງການວິ ເຄາະພາສາເປັນ 2 ລັກສະນະຄືການສື່ສານໃນສະຖານະການປະເຊີນຫນ້າເຊັ່ນ: ການສື່ສານໃນຊີວິດປະຈຳວັນ ແລະ ສະຖານະການແບບບໍ່ປະເຊີນໜ້າເຊັ່ນ: ການສົນທະນາທາງໂທລະສັບນອກຈາກນີ້ຍັງພິຈາລະນາ ວ່າສະຖານະການວ່າການໃຊ້ພາສາແບບທາງການ ຫຼື ບໍ່ເປັນທາງການຜົນການສຶກສາສາມາດສະຫຼຸບໄດ້ດັ່ງນີ້:

1) ການເປີດ-ການປິດບົດສົນທະນາທາງໂທລະສັບມີຮູບແບບຄືກັບການເປີດການສົນທະນາທາງໂທລະສັບມີ 3 ຮູບແບບສ່ວນການປິດການສົນທະນາທາງໂທລະສັບມີພຽງ 2 ຮູບແບບເທົ່ານັ້ນ.

2) ລັກສະນະພາສາ ແລະ ຫນ້າທີ່ຂອງການສະຫຼັບປ່ຽນກັນເວົ້າການຂັດຈັງຫວະການເວົ້າ ແລະ ການເວົ້າພ້ອມກັນເຫັນວ່າ ໃນການສະຫຼັບປ່ຽນກັນເວົ້າເຫັນວ່າມັກມີການໃຊ້ຄຳສະແດງຄວາມສຸພາບ ເພື່ອ ເປັນການສະແດງການຕິດຕາມການສົນທະນາ ໃນການເວົ້າພ້ອມກັນການເວົ້າຊ້ອນກັນ ແລະ ການຂັດຈັງຫວະການເວົ້າລັກສະນະພາສາທີ່ພົບພໍ້ຫຼາຍທີ່ສຸດຄື: ການໃຊ້ກິລິຍາວະລີເຫັນວ່າໃນການເວົ້າຊ້ອນກັນ ແລະ ການຂັດຈັງຫວະການເວົ້ານັ້ນມັກປະກົດໃນການສະຫຼັບປ່ຽນກັນເວົ້າຂອງຜູ້ດຳເນີນລາຍການ ເພື່ອສະ ແດງການຂູດການສົນທະນາ ແລະ ເພື່ອຖາມຄຳຖາມຕາມລຳດັບສ່ວນການເວົ້າພ້ອມກັນເຫັນວ່າມັກປະກົດ ໃນການສະຫຼັບປ່ຽນກັນເວົ້າຂອງຜູ້ໂທເພື່ອໃຫ້ຂໍ້ມູນ

3) ລັກສະນະພາສາສະແດງຫົວເລື່ອງ ເຫັນວ່າລັກສະນະພາສາທີ່ປະກົດຫຼາຍທີ່ສຸດຄືນາມວະລີ ໂດຍປະກົດໃນການສະຫຼັບປ່ຽນການເວົ້າຂອງຜູ້ໂທ ເພື່ອກ່າວເຖິງຫົວຂໍ້ທີ່ຈະສົນທະນາ ແລະ ການໃຊ້ຄຳສະ ແດງຄວາມສຸພາບປະກົດຫຼາຍທີ່ສຸດ ໃນການປ່ຽນຫົວເລື່ອງໂດຍປະກົດຢູ່ 2 ສ່ວນຄືຕອນຕົ້ນຂອງບົດສົນທະນາ ເພື່ອສະແດງການປ່ຽນຫົວເລື່ອງຈາກການເປີດການສົນທະນາເປັນສ່ວນເນື້ອເລື່ອງ ແລະ ປະກົດ ໃນຕອນທ້າຍຂອງການສົນທະນາ ເພື່ອສະແດງການປ່ຽນຈາກເນື້ອເລື່ອງໄປເປັນການປິດການສົນທະນາ.

ຈາກການສຶກສາວຽກງານຄົ້ນຄ້ວາທີ່ກ່ຽວຂ້ອງກັບການສົນທະນາກ່ຽວຂ້ອງກັບການສຶກສາຄັ້ງນີ້ໄດ້ດັ່ງນີ້:

Hinds, J. (1988) ສຶກສາການສົນທະນາໃນພາສາໄທກາງໃນບົດຄວາມ ໂດຍສຶກສາການສະຫຼັບ ປ່ຽນກັນເວົ້າ (Turn-taking) ການເວົ້າພ້ອມກັນ (Simultaneous talking) ການຂັດຈັງຫວະການເວົ້າ (Interruption) ແລະ ການປ່ຽນຫົວເລື່ອງ (Topic shift) ໃນການສົນທະນາພາສາໄທກາງກ່າວວ່າບໍ່ວ່າ ຈະເປັນພາສາໃດໃນໂລກການສົນທະນາເປັນກິດຈະກຳຢ່າງໜຶ່ງທີ່ຕ້ອງມີຜູ້ເຂົ້າຮ່ວມສະເໝີ ແຕ່ສິ່ງທີ່ແຕກ ຕ່າງກັນຂອງແຕ່ລະພາສາກ່ຽວກັບການສົນທະນາຄືວິທີການເຂົ້າຮ່ວມ ໃນການສົນທະນາຂອງຜູ້ເວົ້າ ແຕ່ລະຄົນລັກສະນະພິເສດທີ່ຫນ້າສົນໃຈໃນພາສາໄທຄືລັກສະນະການເວົ້າພ້ອມກັນຊຶ່ງເບິ່ງຄ້າຍຄືກັບວ່າຈະ ເປັນການລະເມີດກົດເກນການສົນທະນາ ແຕ່ການເວົ້າພ້ອມກັນຂອງຄົນໄທເປັນລັກສະນະສະເພາະຢ່າງຫນຶ່ງ ທີ່ເກີດຂຶ້ນຢ່າງມີເຫດຜົນ ເນື່ອງຈາກວ່າ:

1) ຜູ້ເວົ້າຝ່າຍໜຶ່ງຢຸດເພື່ອອະນຸຍາດໃຫ້ຜູ້ເວົ້າອີກຝ່າຍໜຶ່ງເວົ້າຕໍ່
2) ເປັນການສະແດງໃຫ້ເຫັນວ່າຄູ່ສົນທະນາໃຫ້ຄວາມສົນໃຈ ແລະ ຕິດຕາມການສົນທະນາຢູ່ຕະຫຼອດ
3) ເມື່ອຜູ້ເວົ້າ ໃຫ້ສັນຍານອີກຝ່າຍຫນຶ່ງໄດ້ເວົ້າແລ້ວແຕ່ລືມສັນຍານຂອງຕົນ ແລະ ກັບມາເວົ້າໃໝ່ອີກຄັ້ງ.
4) ເປັນລັກສະນະຂອງການຂັດຈັງຫວະໃນການເວົ້າຊຶ່ງໂດຍສ່ວນຫຼາຍຈະເກີດຂຶ້ນຢ່າງມີຈຸດມຸ່ງໝາຍຄື: ເພື່ອເປັນຖາມຄຳຖາມການຕອບຄຳຖາມ ການໃຫ້ຂໍ້ມູນ ແລະ ການສະແດງຄວາມຄິດເຫັນ ໃນການ ສະແດງພຶດຕິກຳທາງສັງຄົມຂອງຄົນໄທອາດຈະສະແດງອອກໄດ້ທາງພາສາໂດຍການປຽບທຽບລັກສະນະການຂັດຈັງຫວະການເວົ້າໃນການສົນທະນາກັບພຶດຕິກຳການຈາລະຈອນໃນທີ່ສາທາລະນະສະຫຼຸບໄດ້ວ່າລັກສະນະໃນການປ່ຽນຫົວຂໍ້ການສົນທະນາໃນກະທັນຫັນຂອງຄົນໄທເປັນໄປຕາມຫຼັກການ “ME-first principle” ເວົ້າຄືຜູ້ເວົ້າຈະປ່ຽນຫົວຂໍ້ທັນທີເມື່ອພົບວ່າສິ່ງທີ່ກຳລັງຈະກ່າວນັ້ນມີຄວາມສຳຄັນກັບຕົ້ນການປະຕິບັດແບບນີ້ຈະແຕກຕ່າງຈາກວັດທະນະທຳອື່ນໆແຕ່ເປັນທີ່ຍອມຮັບກັນໄດ້ໃນສັງຄົມ ແລະ ວັດທະນະທຳ
5) Lebron & Lozada, S. 1. (2012) ໄດ້ສຶກສາການຮຽນສົນທະນາພາສາອັງກິດກັບນັກຮຽນທີ່ຮຽນພາສາອັງກິດທົ່ວໄປເພື່ອພັດທະນາກິດຈະກຳການຮຽນຮູ້ໃຫ້ປະສົບຜົນສຳເລັດສຳຫຼັບນັກຮຽນ ESOL ໃຫ້ຫ້ອງຮຽນສົນທະນາ ໂດຍການໃຊ້ເທັກໂນໂລຢີ ແລະ ວິທີການອອກແບບການຮຽນການສອນແບບ Constructivism ຜົນການສຶກສາພົບວ່າ ພອດດາສຕ໌ຂອງນັກຮຽນທີ່ສ້າງຂຶ້ນຈະມີຜົນຕໍ່ທັດສະນະໃຊ້ ພາສາໃນການສົນທະນາການອອກສຽງ ໄວຍະກອນຄວາມຄ່ອງແຄ່ວ ແລະ ລະດັບຄຳສັບທີ່ແຕກຕ່າງກັນນັກຮຽນມີທັດນະຄະຕິທີ່ດີຕໍ່ການໃຊ້ພາສາ ໂດຍໃຊ້ໂປແກັມຄອນສຕຣັດຕິວິສຕ໌ ແລະ ຮູບແບບການຮຽນການສອນ.

# ບົດທີ 3

# ວິທີການດຳເນີນການວິໄຈ

ໃນການດຳເນີນການວິໄຈຄັ້ງນີ້ມີລັກສະນະແບບທົດລອງການນຳໃຊ້ເຕັກນິກການສອນບົດສົນທະນາ ເຂົ້າໃນການສອນເວົ້າພາສາອັງກິດໃຫ້ນັກສຶກສາສາຍພາສາລາວ ປີທີ 3 ທີ່ວິທະຍາໄລຄູສາລະວັນ ສົກຮຽນ 2021 – 2022 ດັ່ງນັ້ນ, ຜູ້ດຳເນີນການວິໄຈໄດ້ມີຂັ້ນຕອນການວິໄຈດັ່ງນີ້:

1. ປະຊາກອນ ແລະ ກຸ່ມຕົວຢ່າງ
2. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ
3. ວິທີການເກັບຮວບຮວມຂໍ້ມູນ
4. ວິທີການວິເຄາະຂໍ້ມູນ
5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

## 1. ປະຊາກອນ ແລະ ກຸ່ມຕົວຢ່າງ

### 1.1 ປະຊາກອນ

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາສາຍພາສາລາວ ປີທີ 3 ທີ່ວິທະຍາໄລຄູສາລະວັນ ໃນສົກຮຽນ 2021 – 2022.

### 1.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາສາຍພາສາລາວ ປີທີ 3 ທີ່ວິທະຍາໄລຄູສາລະວັນ ໃນສົກຮຽນ 2021 – 2022. ມີ 1 ຫ້ອງຈຳນວນ 33 ຄົນ ເປັນກຸ່ມຕົວຢ່າງ ໃຊ້ແບບເຈາະຈົງ (purposive sampling) (ວິຊິດ ສຸລັດເຮືອງໄຊ, 2551: 111)

## 2. ເຄື່ອງມືໃນການເກັບຂໍ້ມູນ

ໃນການວິໄຈຄັ້ງນີ້ຜູ້ວິໄຈໄດ້ໃຊ້ເຄື່ອງມື ແລະ ມີລັກສະນະວິທີສ້າງເຄື່ອງມືດັ່ງນີ້:

2.1. ລັກສະນະຂອງເຄື່ອງມືທີ່ໃຊ້ໃນການວິໄຈເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍເຄື່ອງມືທັງໝົດ 3 ປະເພດດັ່ງນີ້:

1) ແຜນການຈັດການຮຽນ-ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ ຈຳນວນ 4 ແຜນແຜນລະ 2 ຊົ່ວໂມງລວມ 8 ຊົ່ວໂມງ.
2) ແບບທົດສອບວັດທັກສະໃນການເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາກ່ອນ ແລະ ຫຼັງການຮຽນ (Pretest-posttest) ເປັນແບບທົດສອບໂດຍໃຊ້ການຫາຄວາມແຕກຕ່າງ (Find the differences) ໃຊ້ຮູບພາບ 2 ຮູບໃຫ້ນັກຮຽນສົນທະນາໂດຍການຖາມຂໍ້ແຕກຕ່າງຮູບພາບທີ່ມີທັງຫມົດ 10 ຈຸດ ແລະ Conversation Cards ທີ່ມີທັງໝົດ 1 ຊຸດເພື່ອໃຊ້ວັດ ແລະ ປະເມີນຜົນທັກສະໃນການເວົ້າພາສາອັງກິດຂອງນັກຮຽນໂດຍຜູ້ວິໄຈເປັນຄົນສ້າງຂຶ້ນ.

3) ແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບດອນທາຈຳນວນ 1 ຊຸດ ເປັນແບບມາດຕາສ່ວນປະເມີນຄ່າ 5 ລະດັບ (Rating scale) ໂດຍ ເຊການວດຄາລະ ຂອງ Likert scale.

**2.2 ສ້າງເຄື່ອງມືທີ່ໃຊ້ໃນການວິໄຈ**

ວິທີສ້າງເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຜູ້ວິໄຈໄດ້ແບ່ງເຄື່ອງມືອອກເປັນ 3 ປະເພດ ແລະ ໄດ້ດຳເນີນການຕາມຂັ້ນຕອນດັ່ງລຸ່ມນີ້

2.2.1 ແຜນການ ຈັດການຮຽນ-ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ.

2.2.1.1 ວິເຄາະມາດຕະຖານການຮຽນ ແລະ ຕົວຊີ້ວັດສາລະການຮຽນພາສາຕ່າງປະເທດ (ພາສາອັງກິດ) ຈາກຫຼັກສູດການສຶກສາຂັ້ນພື້ນຖານ ໂດຍເລືອກເນື້ອໃນທີ່ຫຼາກຫຼາຍ ແລະ ເໝາະສົມກັບລະດັບຂອງຜູ້ຮຽນ.

2.2.1.2 ກຳນົດຂອບເນື້ອໃນ, ເວລາທີ່ຮຽນ, ກິດຈະກຳທີ່ຈະນຳມາອອກແບບໃນການຮຽນ, ສື່ການຮຽນ-ການສອນ, ວິທີ ແລະ ເຄື່ອງມືການວັດ ແລະ ປະເມີນຜົນໂດຍປະກອບຂອງແຜນການສອນມີດັ່ງນີ້:

1) Topic

2) Time

3) Concept

4) Objective

1. Terminal objective
2. Behavioral Objective

5) Content

6) Teaching and language procedures

1. Openings
2. Turn-taking
3. Interrupting
4. Adjacency pairs
5. Conversational routines
6. Topic shift
7. Closings and evaluation

7) Teaching Materials

8) Evaluation

2.2.1.4 ຂຽນແຜນການຈັດການຮຽນຕາມຂັ້ນຕອນເຕັກນິກການສອນບົດສົນທະນາໂດຍປັບມາຈາກຂັ້ນການສອນເວົ້າບົດສົນທະນາຂອງ Dornyei, Z & Thurrell, S (1992: 3-5) ທີ່ມີຈຳນວນ.

4 ແຜນແຜນລະ 2 ຊົ່ວໂມງລວມ 8 ຊົ່ວໂມງໄລຍະເວລາ 4 ອາທິດມີແຜນຈັດການຮຽນທັງຫມົດ 4 ເລື່ອງ ດັ່ງນີ້:

1) Greeting
2) About the Family
3) My community
4) Shopping

2.2.1.5 ນຳແຜນການຈັດການຮຽນທີ່ສ້າງຂຶ້ນສະເຫນີຕໍ່ອາຈານທີ່ປຶກສາວິທະຍານິພົນເພື່ອ ກວດສອບຄວາມຖືກຕ້ອງແລ້ວນຳໄປປັບປຸງແກ້ໄຂຈາກນັ້ນນຳໄປໃຫ້ທີ່ປຶກສາຈຳນວນ 3 ທ່ານກວດ ສອບຄວາມຖືກຕ້ອງຂອງເນື້ອໃນຄວາມເໝາະສົມສອດຄ່ອງກັບຈຸດປະສົງກິດຈະກຳ ແລະ ເວລາທີ່ໃຊ້ໃນ ການຈັດການຮຽນລວມທັງການວັດ ແລະ ປະເມີນຜົນໂດຍຜູ້ຊ່ຽວຊານລົງຄວາມເຫັນ ແລະ ໃຫ້ຄະແນນ ຕາມເກນການໃຫ້ຄະແນນຄ່າດັດຊະນີຄວາມສອດຄ່ອງ (IOC) ດັ່ງນີ້: (ສຸວິມົນ ຕິການັ້ນ, 2548: 148).

$$IOC = \frac{\sum R}{N}$$

IOC ແທນ ຄ່າດັດສະນີຄວາມສອດຄ່ອງ

R ແທນ ຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ

N ແທນ ຈຳນວນຜູ້ຊ່ຽວຊານ

ໃຫ້ຄະແນນ +1 ແນ່ໃຈວ່າອົງປະກອບຂອງແຜນການຈັດການຮຽນມີຄວາມເຫມາະສົມ ແລະ ສອດຄ່ອງກັນ.

ໃຫ້ຄະແນນ 0 ບໍ່ແນ່ໃຈວ່າອົງປະກອບຂອງແຜນການຈັດການຮຽນ ມີຄວາມເໝາະສົມ ແລະ ສອດຄ່ອງກັນ.

ໃຫ້ຄະແນນ -1 ແນ່ໃຈວ່າອົງປະກອບຂອງແຜນການຈັດການຮຽນບໍ່ມີຄວາມເໝາະສົມ ແລະ ຫລັງຈາກນັ້ນນຳຄະແນນທີ່ໄດ້ມາຫາຄ່າດັດສະນີຄວາມສອດຄ່ອງ (Index of item Objective congruence)

2.2.1.7 ນຳແຜນການຈັດການຮຽນທີ່ປັບປຸງແກ້ໄຂແລ້ວໄປທົດລອງກັບນັກຮຽນ ສາຍພາສາລາວ ຈຳນວນ 1 ຫ້ອງທີ່ບໍ່ແມ່ນກຸ່ມເປົ້າຫມາຍເພື່ອປັບປຸງແກ້ໄຂດ້ານການໃຊ້ພາສາ ແລະ ໄລຍະເວລາທີ່ເໝາະສົມ ໃນການຈັດກິດຈະກຳການຮຽນກ່ອນຈະນຳໄປໃຊ້ຕົວຈິງ.

2.2.1.8 ນຳແຜນການຈັດການຮຽນທີ່ປັບປຸງແກ້ໄຂແລ້ວໄປທົດລອງໃຊ້ກັບນັກຮຽນກຸ່ມເປົ້າໝາຍ.

ຈາກການສຶກສາຂັ້ນຕອນການສ້າງ ແລະ ຫາຄຸນນະພາບແຜນການຈັດການຮຽນຜູ້ຄົ້ນຄວ້າໄດ້ສຶກ ສາຈຸດມຸ່ງໝາຍຂອງຫຼັກສູດ, ຂອບເນື້ອໃນ, ເວລາຮຽນ, ກິດຈະກຳ, ຂໍ້ສັງເກດ, ອຸປະກອນ, ຂໍ້ສະເໜີແນະ ເອກກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງສາມາດສະຫຼຸບເປັນຂັ້ນຕອນການສ້າງ ແລະ ຫາຄຸນນະພາບຂອງ ແຜນການຈັດການຮຽນການພັດທະນາທັກສະໃນການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດ ສົນທະນາຂອງນັກຮຽນ ສາຍພາສາລາວດັ່ງສະແດງອອກໃນແຜນວາດລຸ່ມນີ້:

ສຶກສາຫຼັກການ ແນວຄິດ ທິດສະດີຫຼັກສູດ ວິເຄາະມາດຕະຖານການຮຽນຮູ້ກຳນົດຂອບເນື້ອໃນ ເວລາຮຽນ ກິດຈະກຳ

↓

ຂຽນແຜນການຈັດການຮຽນຮູ້ ຕາມຂັ້ນຕອນເຕັກນິກການສອນບົດສົນທະນາ

↓

ນຳແຜນການຈັດການຮຽນຮູ້ທີ່ສ້າງຂຶ້ນສະເໜີຕໍ່ອາຈານທີ່ປຶກສາວິທະຍານິພົນ ແລະ ຜູ້ຊ່ຽວຊານ ເພື່ອ ກວດເບິ່ງຄວາມຖືກຕ້ອງ ແລະ ໃຫ້ຄຳແນະນຳໃນການປັບປຸງແກ້ໄຂ

↓

ປັບປຸງແກ້ໄຂແຜນການຈັດການຮຽນຮູ້ຕາມຄຳແນະນຳຂອງອາຈານທີ່ປຶກສາ ແລະ ຜູ້ຊ່ຽວຊານ ຫຼັງຈາກ ນັ້ນນຳໄປທົດລອງກັບນັກຮຽນທີ່ບໍ່ແມ່ນກຸ່ມເປົ້າໝາຍ ເພື່ອປັບປຸງແກ້ໄຂໃຫ້ເໝາະສົມ

↓

ນຳແຜນການຈັດການຮຽນຮູ້ທີ່ປັບປຸງແກ້ໄຂແລ້ວນັ້ນໄປທົດລອງກັບນັກຮຽນກຸ່ມເປົ້າໝາຍ

**ພາບປະກອບທີ 2** : ຂັ້ນຕອນການຈັດການຮຽນການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດ ສົນທະນາ

2.2.2 ແບບທົດສອບວັດຄວາມສາມາດໃນການເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາແບບວັດຄວາມສາມາດໃນການເວົ້າພາສາອັງກິດເປັນແບບວັດທີ່ມີຄວາມສຳຄັນຫຼາຍຕໍ່ການວິໄຈ ໃນຄັ້ງນີ້ຈຶ່ງຈຳເປັນທີ່ຈະຕ້ອງສ້າງຂຶ້ນມາວັດ ແລະ ປະເມີນຜົນຄວາມສາມາດໃນການເວົ້າພາສາອັງກິດຂອງຜູ້ຮຽນການສ້າງແບບທົດສອບວັດຄວາມສາມາດໃນການເວົ້າພາສາອັງກິດໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

1) ສຶກສາມາດຕະຖານການຮຽນຕົວຊີ້ວັດ ແລະ ຜົນການຮຽນທີ່ຄາດຫວັງການຈັດຜູ້ຮຽນ ພາສາຕ່າງປະເທດຕາມຫຼັກສູດລວມຂອງກະຊວງສຶກສາທິການ ແລະ ກິລາ ພ້ອມທັງສຶກສາຫລັກການ, ແນວຄິດ, ທິດສະດີການສອນສົນທະນາໂດຍໄດ້ສຶກສາຈາກຄູ່ມືການວັດ ແລະ ປະເມີນຜົນ ຜົນການຄົ້ນຄວ້າທີ່ກ່ຽວຂ້ອງຕ່າງໆຕຳລາຮຽນອິນເຕີເນັດ ແລະ ອື່ນໆທີ່ກ່ຽວຂ້ອງກັບການສອນບົດສົນທະນາ ໃນແຜນການຈັດການຮຽນຈຳນວນ 4 ແຜນ. .

2) ນຳເນື້ອໃນ ແລະ ຈຸດປະສົງການຮຽນພາສາອັງກິດແຕ່ລະແຜນການຈັດການຮຽນມາກຳນົດເນື້ອໃນ ແລະ ຈຸດປະສົງຂອງແບບທົດສອບວັດຄວາມສາມາດໃນການເວົ້າພາສາອັງກິດໂດຍພິຈາລະນາຈາກຈຸດປະສົງຂອງແບບທົດສອບວັດຄວາມສາມາດໃນການເວົ້າພາສາອັງກິດໃຫ້ສອດຄ່ອງກັບຈຸດປະສົງຈາກນັ້ນ

ກຳນົດທັກສະທີ່ຕ້ອງການວັດຄວາມສາມາດໃນການເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນສົນທະນາ.

3) ສ້າງແບບທົດສອບວັດຄວາມສາມາດໃນການເວົ້າພາສາອັງກິດເພື່ອທົດສອບກ່ອນ ແລະ ຫຼັງຮຽນ (Pretest-posttest) ທີ່ເປັນແບບທົດສອບໂດຍໃຊ້ການຫາຄວາມແຕກຕ່າງ (Find the differences) ໃຊ້ຮູບພາບ

2 ຮູບໃຫ້ນັກຮຽນສົນທະນາໂດຍການຖາມຂໍ້ແຕກຕ່າງທີ່ຢູ່ໃນຮູບພາບທີ່ມີທັງໝົດ, 10 ຈຸດ ແລະ Conversation Card 1 Card B ຈຳນວນ 1 ຊຸດໂດຍການກຳນົດເປັນ Card A ແລະ Card B ທີ່ຄູ່ສົນທະນາຈະຕ້ອງຖາມເພື່ອແລກປ່ຽນຄຳຕອບທີ່ຢູ່ໃນ Card ທັງສອງແຜ່ນນັ້ນໃນເກນການຕັດສິນການໃຫ້ຄະແນນຄວາມສາມາດໃນການເວົ້າພາສາອັງກິດທີ່ນຳມາໃຊ້ໃນການວິໄຈຄັ້ງນີ້ຜູ້ວິໄຈປັບປຸງເກນການໃຫ້ຄະແນນຂອງ (Harris. D. P, 1988: 81-82).

4) ນຳແບບທົດສອບວັດຄວາມສາມາດດ້ານການເວົ້າພາສາອັງກິດທີ່ສ້າງຂຶ້ນສະເໜີຕໍ່ອາຈານທີ່ປຶກສາເພື່ອກວດສອບຄວາມຖືກຕ້ອງຂອງເນື້ອໃນ ຄວາມເໝາະສົມສອດຄ່ອງກັບຈຸດປະສົງກິດຈະກຳ ແລະ ເວລາທີ່ໃຊ້ໃນການຈັດການຮຽນ ລວມທັງການວັດ ແລະ ປະເມີນຜົນໂດຍຜູ້ຊ່ຽວຊານລົງຄວາມເຫັນ ແລະ ຄະແນນຕາມເກນຂອງຄ່າດັດສະນີຄວາມສອດຄ່ອງ (Index of item objective congruence: IOC) ຕາມ (ສຸວິມົນ ຕິການັ້ນ, 2548: 148).

5) ປັບປຸງແກ້ໄຂແບບທົດສອບວັດຄວາມສາມາດດ້ານການເວົ້າຕາມຂໍ້ສະເໜີແນະຂອງ ອາຈານທີ່ປຶກສາ ແລະ ຜູ້ຊ່ຽວຊານໃຫ້ມີຄວາມຖືກຕ້ອງ ແລະ ເໝາະສົມຍິ່ງຂຶ້ນ

6) ນຳແບບທົດສອບວັດຄວາມສາມາດດ້ານການເວົ້າຕາມທີ່ປັບປຸງແກ້ໄຂແລ້ວໄປທົດລອງກັບນັກສຶກສາທີ່ບໍ່ແມ່ນກຸ່ມເປົ້າໝາຍຈຳນວນ 1 ຫ້ອງເພື່ອປັບປຸງແກ້ໄຂດ້ານການໃຊ້ພາສາ ແລະ ໄລຍະ ເວລາທີ່ເໝາະສົມໃນການຈັດກິດຈະກຳການຮຽນກ່ອນນຳໄປໃຊ້ຕົວຈິງ.

7) ນຳແບບທົດສອບວັດຄວາມສາມາດດ້ານການເວົ້າຕາມທີ່ປັບປຸງແກ້ໄຂດີແລ້ວໄປໃຊ້ກັບນັກຮຽນກຸ່ມເປົ້າໝາຍ.

**2.2.3 ແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ**

1) ສຶກສາທິດສະດີທັດສະນະຄະຕິ ເອກະສານ ແລະ ວຽກງານຄົ້ນຄ້ວາທີ່ກ່ຽວຂ້ອງກັບການວັດທັດສະນະຄະຕິຕໍ່ການຈັດການຮຽນຮູ້ໃນພາສາອັງກິດເປັນແບບມາດຕາສ່ວນປະເມີນຄ່າ 5 ລະດັບ (Rating scale) ໂດຍການວັດຕາມວິທີຂອງ (Likert scale).

2) ສ້າງແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເທັກນິກການສົນທະນາຈຳນວນ 1 ຊຸດ ໂດຍກຳນົດຄະແນນຂອງແບບວັດທັດສະນະຄະຕິຕາມວິທີຍ scale) ຊຶ່ງເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ (Rating scale) ມີລາຍລະອຽດດັ່ງນີ້:

**ກ. ຂໍ້ຄວາມທີ່ສະແດງແນວຄວາມຄິດໃນແງ່ບວກ.**

ເຫັນດີຫຼາຍ ໃຫ້ 5 ຄະແນນ

ເຫັນດີ ໃຫ້ 4 ຄະແນນ

ບໍ່ແນ່ໃຈ ໃຫ້ 3 ຄະແນນ

ບໍ່ເຫັນດີ ໃຫ້ 2 ຄະແນນ

ບໍ່ເຫັນດີຢ່າງຍິ່ງ ໃຫ້ 1 ຄະແນນ

**ຂ. ຂໍ້ຄວາມທີ່ສະແດງແນວຄວາມຄິດໃນແງ່ລົບ.**

ເຫັນດີຢ່າງຍິ່ງ ໃຫ້ 1 ຄະແນນ

ເຫັນດີ ໃຫ້ 2 ຄະແນນ

ບໍ່ແນ່ໃຈ ໃຫ້ 3 ຄະແນນ

ບໍ່ເຫັນດີ ໃຫ້ 4 ຄະແນນ

ບໍ່ເຫັນດີຢ່າງຍິ່ງ ໃຫ້ 5 ຄະແນນ

**ຄ.** ນຳແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເທັກນິກການສອນບົດ ສົນທະນາທີ່ສ້າງຂຶ້ນສະເຫນີຕໍ່ອາຈານທີ່ປຶກສາວິທະຍານິພົນ ເພື່ອກວດສອບຄວາມຖືກຕ້ອງແລ້ວນຳໄປ ປັບປຸງແກ້ໄຂຈາກນັ້ນນຳໄປໃຫ້ຜູ້ຊ່ຽວຊານຈຳນວນ 3 ທ່ານກວດສອບຄວາມຖືກຕ້ອງຄວາມທ່ຽງຕົງຂອງ ເນື້ອໃນຄວາມທ່ຽງກົງຕາມໂຄງສ້າງຄວາມຊັດເຈນຂອງພາສາຄວາມເຫມາະສົມກັບກິດຈະກຳ ແລະ ເວລາທີ່ ໃຊ້ການຈັດການຮຽນຮູ້ລວມທັງການວັດແລະປະເມີນຜົນ ໂດຍຜູ້ຊ່ຽວຊານລົງຄວາມເຫັນ ແລະ ໃຫ້ຄະແນນຕາມກົດເກນການ ໃຫ້ຄະແນນຄ່າດັດສະນີຄວາມສອດຄ່ອງ (Index of item-objective congruence: IOC) ຕາມລາຍລະອຽດດັ່ງນີ້ (ສຸວິມົນ ຕິການັ້ນ, 2548: 148).

ໃຫ້ຄະແນນເປັນ +1 ເມື່ອເຫັນວ່າຂໍ້ຄຳຖາມຄວາມເຫມາະສົມແລະສອດຄ່ອງກັບຈຸດປະສົງ.

ໃຫ້ຄະແນນເປັນ 0 ເມື່ອບໍ່ແນ່ໃຈວ່າຂໍ້ຄຳຖາມເຫມາະສົມ ແລະສອດຄ່ອງກັບຈຸດປະສົງ.

ໃຫ້ຄະແນນເປັນ -1 ເມື່ອບໍ່ແນ່ໃຈວ່າຂໍ້ຄຳຖາມບໍ່ເຫມາະສົມແລະບໍ່ສອດຄ່ອງກັບຈຸດປະສົງ.

ຫຼັງຈາກນັ້ນນຳຄະແນນທີ່ໄດ້ມາຫາຄ່າຂອງດັດສະນີຄວາມສອດຄ່ອງ (Index of item-objective congruence).

**ງ.** ນໍແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເທັກນິກການສອນສົນທະນາ ໄປໃຊ້ກັບນັກຮຽນກຸ່ມຕົວຢ່າງໃນການວິໄຈຫຼັງຈາກທີ່ໄດ້ຮັບການຈັດການຮຽນຮູ້ການສອນພາສາອັງກິດໂດຍໃຊ້ ເທັກນິກການສອນບົດສົນທະນາ.

ຈາກການສຶກສາຂັ້ນຕອນການສ້າງ ແລະ ຊອກຫາຄຸນນະພາບຂອງແບບວັດທັດສະນະຄະຕິຕໍ່ການ ຮຽນຮູ້ພາສາອັງກິດໂດຍໃຊ້ເທັກນິກການສອນສົນທະນາຜູ້ຄົ້ນຄ້ວາໄດ້ສຶກສາທິດສະດີກ່ຽວກັບທັດສະນະ ຄະຕິການວັດທັດສະນະຄະຕິ ເອກະສານ ແລະວຽກງານວິໄຈທີ່ກ່ຽວຂ້ອງສາມາດສະຫຼູບເປັນຂັ້ນຕອນ ແລະ ຊອກຫາຄຸນນະພາບຂອງແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເທັກນິກການສອນ ບົດສົນທະນາຕາມຮູບແບບຂອງການວັດທັດສະນະຄະຕິຂອງ (Likert scale) ດັ່ງແຜນວາດລຸ່ມນີ້:

ວັດທັດສະນະສຶກສາທິດສະດີ  ທັດສະນະຄະຕິ ເອກະສານ ແລະ ວຽກງານວິໃຈທີ່ກ່ຽວຂ້ອງກັບການຄະຕິຕໍ່ການຈັດການຮຽນຮູ້ໃນການເວົ້າພາສາອັງກິດ

↓

ສ້າງແບບວັດທັດສະນະຄະຕິຕໍ່ການເວົ້າພາສາອັງກິດ ໂດຍໃຊ້ເທັກນິກການສອນບົດສົນທະນາຈຳນວນ 1 ຊຸດ ໂດຍກຳນົດຄະແນນຂອງແບບວັດທັດສະນະຄະຕິຕາມວິທີຂອງ (Likert scale) ເຊິ່ງເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ (Rating scale)

↓

ນຳແບບທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເທັກນິກການສອນບົດສົນທະນາທີ່ສ້າງຂຶ້ນສະເໜີຕໍ່ອາຈານທີ່ປຶກສາ ເພື່ອກວດສອບຄວາມຖືກຕ້ອງ ແລະ ນຳໄປປັບປຸງແກ້ໄຂ

↓

ນຳແບບວັດທັດສະນະຕິ ໄປໃຊ້ກັບນັກຮຽນກຸ່ມຕົວຢ່າງໃນການວິໃຈຫຼັງຈາກທີ່ໄດ້ຮັບການຈັດການຮຽນຮູ້ການສອນເວົ້າພາສາອັງກິດ ໂດຍໃຊ້ເທັກນິກການສອນບົດສົນທະນາ

**ພາບປະກອບທີ 3 :** ຂັ້ນຕອນການສ້າງແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ

## 3. ວິທີຮວບຮວມຂໍ້ມູນ

ໃນການຄົ້ນຄວ້າຄັ້ງນີ້ດຳເນີນການກະກຽມການເກັບຮວບຮວມຂໍ້ມູນກ່ຽວກັບການພັດທະນາທັກສະໃນການເວົ້າພາສາອັງກິດຈາກກຸ່ມຕົວຢ່າງຊຶ່ງ ໃຊ້ເວລາໃນການທົດລອງ 4 ອາທິດອງທິດ, ທິດລະ 3 ຊົ່ວ ໂມງລວມທັງໝົດ 12 ຊົ່ວໂມງລວມ 4 ແຜນການຈັດການຮຽນຮູ້ ໃນພາກຮຽນທີ II ສົກສຶກສາ 2023  ດັ່ງລາຍລະອຽດຕໍ່ໄປນີ້:

1. ຈັດປະຖົມນິເທດນັກຮຽນ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບວິທີການຮຽນຈຸດປະສົງການຮຽນຮູ້ ແລະ ວິທີວັດປະເມີນຜົນການຮຽນ.

2. ທົດສອບກ່ອນຮຽນ (Pretest) ຜູ້ຄົ້ນຄ້ວາ ແລະ ຜູ້ຊ່ວຍຄົ້ນຄ້ວາດຳເນີນການທົດສອບກອນ ຮຽນໂດຍໃຊ້ແບບທົດສອບວັດທັກສະໃນການເວົ້າພາສາອັງກິດທີ່ຜູ້ວິໃຈສ້າງຂຶ້ນ

3. ຜູ້ຄົ້ນຄ້ວາດຳເນີນການຈັດການຮຽນຕາມແຜນການຈັດການຮຽນຮູ້ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາທັງ 4 ແຜນ

4. ທົດສອບຫຼັງຮຽນ (Posttest) ຜູ້ວິໄຈ ແລະ ຜູ້ຊ່ວຍວິໄຈດຳເນີນການທົດສອບຫຼັງຮຽນ ໂດຍໃຊ້ແບບທົດສອບວັດທັກສະໃນການເວົ້າພາສາອັງກິດທີ່ຜູ້ຄົ້ນຄ້ວາສ້າງຂຶ້ນ

5. ວັດທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດ ສົນທະນາດ້ວຍແບບວັດທັດສະນະຄະຕິທີ່ຜູ້ວິໄຈສ້າງຂຶ້ນ.

## 4. ວິທີການວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນຜູ້ວິໄຈໄດ້ດຳເນີນຜົນການທົດລອງມາວິເຄາະດັ່ງນີ້:

### 4.1 ສະຖິຕິການວິເຄາະຂໍ້ມູນພື້ນຖານ

1) ວິເຄາະຂໍ້ມູນເພື່ອສຶກສາທັກສະໃນການສອນເວົ້າພາສາອັງກິດ

2) ວິເຄາະຂໍ້ມູນເພື່ອທັກສະໃນການສອນເວົ້າພາສາອັງກິດຂອງນັກຮຽນທີ່ຮຽນ ໂດຍໃຊ້ເຕັກນິກ ການສອນບົດ ສົນທະນາກ່ອນຮຽນ ແລະ ຫຼັງຮຽນ

3) ວິເຄາະຂໍ້ມູນເພື່ອສຶກສາທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ ເຕັກນິກການສອນບົດສົນທະນາ ໂດຍໃຊ້ໂປຼແກມສຳເລັດຮູບທາງຄອມພິວເຕີ

## 4.2 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

1. ສະຖິຕິພື້ນຖານທີ່ໃຊ້ໃນການວິເຄາະຂໍ້ມູນປະກອບດ້ວຍ

1. ຄ່າສະເລ່ຍ (Mean)

2. ຄ່າສ່ວນຮ້ອຍ (Percentage)

3. ຄ່າຜັນປ່ຽນມາດຕະຖານ (Standard deviation)

**2. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນເພື່ອຫາປະສິດທິພາບຂອງເຄື່ອງມືທີ່ໃຊ້ໃນການວິໄຈດັ່ງນີ້:**

1. ຄ່າຄວາມທ່ຽງຕົງ( Validity ) ຂອງແຜນການຈັດການຮຽນຮູ້ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກກນິກ ການສອນບົດສົນທະນາ ແບບວັດທັກສະດ້ານການ ເວົ້າພາສາອັງກິດໂດຍໃຊ້ເຕັກນິກການ ສອນບົດສົນທະນາ ໂດຍໃຊ້ດັດສະນີຄວາມສອດຄ່ອງລະຫວ່າງຂໍ້ຄຳຖາມກັບຈຸດປະສົງ (IOC)

2. ຄ່າຄວາມຍາກງ່າຍ (P) ຂອງແບບວັດຄວາມສາມາດດ້ານການເວົ້າພາສາອັງກິດ

3. ຄ່າອຳນາດຈຳແນກ (r) ຂອງແບບວັດຄວາມສາມາດດ້ານການເວົ້າພາສາອັງກິດ

4. ຄ່າຄວາມເຊື່ອຫມັ້ນ (Reliability) ຂອງແບບວັດຄວາມສາມາດດ້ານການເວົ້າພາສາອັງກິດ Inter-rater reliability

5. ສະຖິຕິທີ່ໃຊ້ໃນການທົດສອບສົມມຸດຖານປຽບທຽບຄວາມແຕກຕ່າງຂອງຄະແນນສະເລ່ຍ ກ່ອນຮຽນ ແລະ ຄ່າຄະແນນຫຼັງຮຽນ ໂດຍວິເຄາະດ້ວຍວິທີທາງສະຖິຕິໂດຍໃຊ້ໂປຣແກັຣມສຳເລັດຮູບທາງຄອມພິວເຕີ

## 4.3 ເກນການແປຜົນຄະແນນແບບວັດທັດສະນະຄະຕິ

ຄະແນນແບບວັດທັດສະນະຄະຕິຕໍ່ການສອນເວົ້າພາສາອັງກິດຂອງນັກຮຽນ ໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກຮຽນກຸ່ມຕົວຢ່າງສາມາດນຳມາແປຜົນຄ່າສະເລ່ຍໄດ້ດັ່ງນີ້:

ສະເລ່ຍ 4.50 - 5.00 ໝາຍເຖິງ ມີທັດສະນະຄະຕິດີ

ສະເລ່ຍ 3.50 – 4.49 ໝາຍເຖິງ ມີທັດສະນະຄະຕິຂ້ອນຂ້າງດີ

ສະເລ່ຍ 2.50 – 3.49 ໝາຍເຖິງ ມີທັດສະນະຄະຕິປານກາງ

ສະເລ່ຍ 1.50 – 2.49 ໝາຍເຖິງ ມີທັດສະນະຄະຕິຂ້ອນຂ້າງບໍ່ດີ

ສະເລ່ຍ 1.00 – 1.49 ໝາຍເຖິງ ມີທັດສະນະຄະຕິບໍ່ດີ

## 5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

ຜູ້ວິໄຈໄດ້ນຳເອົາຂໍ້ມູນທີ່ໄດ້ຈາກການທົດລອງສອນມາດຳເນີນການວິເຄາະຂໍ້ມູນໃນເລກຄະນິດສາດ $(\overline{X})$ ໂດຍໃຊ້ສູດ.

$$\overline{X} = \frac{\sum x}{N}$$

$\overline{X}$ ແທນຄະແນນສະເລ່ຍ

$\sum x$ ແທນຜົນລວມຂອງຄະແນນ

N ແທນ ຈຳນວນນັກຮຽນທີ່ເປັນກຸ່ມຕົວຢ່າງ

ຜູ້ວິໄຈໄດ້ນຳເອົາຂໍ້ມູນ ຫາຄ່າຜັນປ່ຽນມາດຕະຖານ (S.D) ໂດຍໃຊ້ສູດ ໄພລັດ ວົງນາມ ( 2551:47)

$$S.D = \sqrt{\frac{\sum (x_i - \overline{X})^2}{N-1}}$$

$S.D$ ແທນຄ່າຜັນປ່ຽນມາດຕະຖານຂອງກຸ່ມຕົວຢ່າງ

$\sum x_i^2$ ແທນ ຜົນລວມຄະແນນທີ່ຍົກກຳລັງສອງ

$\overline{X}$ ແທນຄ່າສະເລ່ຍຂອງກຸ່ມຕົວຢ່າງ

$\sum x$ ແທນຜົນລວມຂອງຄະແນນ

N ແທນ ຈຳນວນນັກຮຽນທີ່ເປັນກຸ່ມຕົວຢ່າງ

ຫາຄ່າປະສິດທິພາບຂອງແຜນການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ສຳລັບນັກຮຽນສາຍພາສາລາວ ປີທີ 3 ຕາມເກນມາດຕະຖານ 80/80 ທີ່ໄດ້ກ□ານົດໄວ້ດັ່ງນີ້:

$E_1$ (80) ຕົວທຳອິດ ໝາຍເຖິງຈຳນວນນັກຮຽນໃນກຸ່ມຕົວຢ່າງທີ່ສາມາດຕອບແບບທົດສອບກິດຈະກຳລະຫວ່າງຮຽນ, ຫຼັງຮຽນ, ຈາກການຮຽນໃນແຜນການສອນແຕ່ລະແຜນ ຜ່ານເກນການຮຽນມາທີ່ໄດ້ກຳນົດບໍ່ນ້ອຍກວ່າ $E_1$ ຕົວທຳອິດ ໂດຍໃຊ້ສູດດັ່ງນີ້:

$$E_1 = \frac{\frac{\sum x}{N}}{A} \times 100$$

$E_1$ ແທນຄ່າປະສິດທິພາບຂະບວນຜູ້ຮຽນທຸກຄົນການຮຽນຮູ້ຈາກກິດຈະກຳລະຫວ່າງຮຽນດ້ວຍແຜນການສອນ

$\sum x$ ແທນຜົນລວມຂອງຄະແນນນັກຮຽນທີ່ໄດ້ມາຈາກການເຮັດກິດຈະກຳລະຫວ່າງຮຽນດ້ວຍການໃຊ້ແຜນການສອນ

A ແທນ ຄະແນນເຕັມຂອງບົດທົດສອບລະຫວ່າງຮຽນດ້ວຍການໃຊ້ແຜນການສອນ.

N ແທນ ຈຳນວນນັກຮຽນທັງໝົດທີ່ໃຊ້ໃນການປະເມີນປະສິດທິພາບຂອງແຜນການສອນ.

$E_2$ (80) ຄືວຫຼັງໝາຍເຖິງຄະແນນສະເລ່ຍສ່ວນຮ້ອຍຂອງນັກຮຽນ ທີ່ໄດ້ຈາກການເຮັດແບບທົດສອບສຳເລັດທາງການຮຽນ, ຫຼັງຈາກຮຽນແຜນການສອນຜ່ານການຮຽນມາທີ່ກຳນົດບໍ່ນ້ອຍກວ່າ $E_2$ ຕົວຫຼັງ ໂດຍໃຊ້ສູດ:

$$E_2 = \frac{\frac{\sum y}{N}}{B} \times 100$$

$E_2$ ແທນ ຄ່າປະສິດທິພາບຂອງຜົນລັບໄດ້ຈາກຄະແນນການເຮັດແບບທົດສອບວັດຜົນສຳເລັດທາງການຮຽນຂອງນັກຮຽນທັງໝົດ.

$\sum y$ ແທນ ຜົນລວມຂອງຄະແນນນັກຮຽນທີ່ໄດ້ຈາກການເຮັດແບບທົດສອບຜົນສຳເລັດຫຼັງການໃຊ້ແຜນການສອນຂອງຜູ້ຮຽນທຸກຄົ.

B ແທນ ຄະແນນເຕັມຂອງແບບທົດສອບຜົນສຳເລັດຫຼັງການຮຽນ.

N ແທນ ຈຳນວນນັກຮຽນທັງໝົດທີ່ໃຊ້ໃນການປະເມີນປະສິດທິພາບຂອງແຜນການສອນ

ຫາຄ່າດັດສະນີປະສິດທິຜົນ (E.I) (ເຊົາວະລັດ ຕຽມກຸນ) ນຳໃຊ້ສູດດັ່ງນີ້:

$$E_I = \frac{\text{ຄະແນນສະເລ່ຍຫຼັງຮຽນ - ຄະແນນສະເລ່ຍກ່ອນການຮຽນ}}{\text{ຄະແນນເຕັມຫຼັງຮຽນ - ຄະແນນສະເລ່ຍກ່ອນການຮຽນ}}$$

# ບົດທີ 4
# ການວິເຄາະຂໍ້ມູນ

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອສຶກສາທັກສະໃນການເວົ້າພາສາອັງກິດຂອງນັກສຶກສາສາຍພາສາລາວ ປີທີ 3 ທີ່ໄດ້ຮັບການສອນໂດຍໃຊ້ເຕັກນິກການສອນບົດສົນທະນາ ແລະ ສຶກສາທັດສະນະຄະຕິທີ່ມີຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກສຶກສາສາຍພາສາລາວ ປີທີ3 ທີ່ວິທະຍາໄລຄູສາລະວັນ ເຊິ່ງຜູ້ວິໄຈໄດ້ວິເຄາະຂໍ້ມູນຕາມຈຸດປະສົງຂອງການວິໄຈດັ່ງລາຍລະອຽດຕໍ່ໄປນີ້:

1. ຜົນການວິເຄາະປະສິດທິພາບແຜນການສອນ
2. ຜົນການວິເຄາະຄ່າດັດສະນີປະສິດທິຜົນ E.I
3. ຜົນການວິເຄາະທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນ.

## 1. ຜົນການວິເຄາະຫາປະສິດທິພາບຂອງບົດສອນ

### 1.1. ຜົນການວິເຄາະຫາຄ່າປະສິດທິພາບຂອງ $E_1$

ການຫາປະສິດທິພາບຂອງບົດສອນ ພັດທະນາທັກສະໃນການເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາສໍາລັບນັກສຶກສາສາຍພາສາລາວປີທີ 3 ທີ່ວິທະຍາໄລຄູສາລະວັນ. ມີປະສິທິພາບຕາມເກນ 80/80.

**ຕາຕະລາງທີ** 1: ສະແດງຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ ແລະ ຄ່າປະສິດທິພາບ $E_1$ ຂອງຄະແນນຈາກການເຮັດ

ແບບທົດສອບຍ່ອຍທັງ 4 ບົດສອນ.

| ລໍາດັບທີ | ສະເລ່ຍລວມບົດສອນ 4 ບົດ | | | | |
|---|---|---|---|---|---|
| | ບົດສອນທີ1 | ບົດສອນທີ2 | ບົດສອນທີ3 | ບົດສອນທີ4 | ຄະແນນລວມ 4 ແຜນ |
| | ຄ.ນ (10) | ຄ.ນ (10) | ຄ.ນ (10) | ຄ.ນ (10) | ຄ.ນ (40) |
| 1 | 7 | 9 | 7 | 8 | 31 |
| 2 | 9 | 8 | 10 | 9 | 36 |
| 3 | 9 | 7 | 10 | 8 | 34 |
| 4 | 7 | 8 | 8 | 7 | 30 |
| 5 | 8 | 9 | 9 | 8 | 34 |
| 6 | 7 | 8 | 7 | 9 | 31 |
| 7 | 10 | 10 | 9 | 8 | 37 |
| 8 | 6 | 8 | 7 | 9 | 30 |
| 9 | 8 | 7 | 9 | 8 | 32 |
| 10 | 9 | 10 | 9 | 9 | 37 |
| 11 | 6 | 8 | 8 | 9 | 31 |
| 12 | 8 | 7 | 8 | 9 | 32 |
| 13 | 8 | 8 | 7 | 8 | 31 |
| 14 | 7 | 7 | 8 | 8 | 30 |
| 15 | 8 | 7 | 8 | 9 | 32 |
| 16 | 8 | 8 | 8 | 8 | 32 |
| 17 | 6 | 7 | 8 | 10 | 31 |
| 18 | 8 | 9 | 7 | 8 | 32 |
| 19 | 9 | 8 | 9 | 10 | 36 |
| 20 | 6 | 8 | 7 | 9 | 30 |
| 21 | 8 | 8 | 7 | 8 | 31 |

| | | | | | |
|---|---|---|---|---|---|
| 22 | 7 | 8 | 7 | 10 | 32 |
| 23 | 8 | 8 | 7 | 9 | 32 |
| 24 | 8 | 8 | 8 | 8 | 32 |
| 25 | 7 | 8 | 8 | 9 | 32 |
| 26 | 7 | 9 | 8 | 7 | 31 |
| 27 | 7 | 7 | 8 | 9 | 31 |
| 28 | 9 | 9 | 9 | 9 | 36 |
| 29 | 8 | 8 | 10 | 8 | 34 |
| 30 | 6 | 9 | 8 | 8 | 31 |
| 31 | 7 | 7 | 10 | 7 | 31 |
| 32 | 6 | 10 | 8 | 8 | 32 |
| 33 | 7 | 8 | 7 | 9 | 31 |
| ລວມ | 249 | 268 | 268 | 280 | 1065 |
| ຄ່າສະເລ່ຍ | 6.91 | 7.44 | 7.44 | 7.77 | 29.58 |
| S.D | 1.06 | 0.89 | 0.99 | 0.79 | 3.74 |
| $E_1$ | 75.45 | 81.21 | 8.21 | 84.85 | 80.68 |

ຈາກຕາຕະລາງທີ 1 ພົບວ່າຜົນການຈັດການຮຽນ-ການສອນ ວິຊາພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກຮຽນສາຍພາສາລາວປີທີ 3 ໂດຍລວມມີຄື ($E_1$) ເທົ່າກັບ 80.68, ຄ່າສະເລ່ຍ ເທົ່າກັບ 29.58 ແລະ ຄ່າຜັນປ່ຽນມາດຕະຖານ 3.74 ແຕ່ເມື່ອຈຳແນກເປັນແຕ່ລະແຜນການສອນແລ້ວພົບວ່າແຜນທີ 1 ($E_1$) ເທົ່າກັບ 75.45, ແຜນທີ2 ($E_1$) = 81.21, ແຜນທີ 3($E_1$) 8.21 ແລະ ແຜນທີ4($E_1$) = 84.85 ເຊິ່ງມີຄ່າສູງກວ່າເກນທີ່ກຳນົດໄວ້.

### 1.2. ຜົນການວິເຄາະຫາຄ່າປະສິດທິພາບຂອງຜົນການຮຽນ $E_2$

**ຕາຕະລາງທີ** 2: ສະແດງຄະແນນສະເລ່ຍ, ຄ່າຜັນປ່ຽນມາດຖານ ແລະ ປະສິດທິພາບຂອງຜົນການຮຽນ $E_2$ ຂອງ

ບົດສອນ.

| **ລຳດັບທີ** | **ຄະແນນສອບເສັງຫຼັງການຮຽນຄົບ 4 ບົດ** |
|---|---|
| 1 | 17 |
| 2 | 20 |
| 3 | 16 |
| 4 | 19 |
| 5 | 18 |
| 6 | 19 |
| 7 | 20 |
| 8 | 18 |
| 9 | 16 |
| 10 | 19 |
| 11 | 19 |
| 12 | 18 |
| 13 | 17 |
| 14 | 19 |
| 15 | 16 |
| 16 | 17 |
| 17 | 18 |
| 18 | 16 |
| 19 | 18 |

| | |
|---|---|
| 20 | 17 |
| 21 | 18 |
| 22 | 16 |
| 23 | 17 |
| 24 | 16 |
| 25 | 19 |
| 26 | 18 |
| 27 | 16 |
| 28 | 18 |
| 29 | 19 |
| 30 | 18 |
| 31 | 17 |
| 32 | 18 |
| 33 | 17 |
| ລວມ | 584 |
| ຄ່າ ສະເລ່ຍ | 16.22 |
| S.D | 1.21 |
| $E_2$ | 81.11 |

ຈາກຕາຕະລາງທີ 2 ພົບວ່າການຈັດການຮຽນ - ການສອນວິຊາ ພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ສຳລັບນັກຮຽນສາຍພາສາລາວ ປີທີ3 ເຊິ່ງໄດ້ຄະແນນຂອງການຫາຄ່າປະສິດທິພາບຂອງຜົນການຮຽນ ($E_2$) ເທົ່າກັບ 81.11; ຄ່າສະເລ່ຍເທົ່າກັບ 16.22 ແລະ ຄ່າຜັນປ່ຽນມາດຕະຖານ ເທົ່າກັບ 1.21 ເຫັນວ່າສູງກວ່າເກນທີ່ກຳນົດໄວ້.

### 1.3. ຜົນການວິເຄາະຫາປະສິດທິພາບຂອງບົດສອນ $E_1 / E_2$

**ຕາຕະລາງທີ 3:** ຜົນລວມຄະແນນຂອງການຫາປະສິດທິພາບຂອງບົດສອນ $E_1 / E_2$

| ປະສິດທິພາບຂອງບົດສອນ | ຄະແນນເຕັມ | ຄ່າສະເລ່ຍ | S.D |
|---|---|---|---|
| ປະສິດທິພາບຂອງຂະບວນການ ($E_1$) | 10 | 29.58 | 3.74 |
| ປະສິດທິພາບຂອງຜົນສຳເລັດທາງການຮຽນ ($E_2$) | 20 | 16.22 | 1.21 |
| **ປະສິດທິພາບຂອງບົດສອນ 80.68/81.11** | | | |

ຈາກຕາຕະລາງທີ 3 ພົບວ່າປະສິດທິພາບຂອງບົດສອນ ວິຊາ ພາສາອັງກິດ ການພັດທະນາທັກສະການເວົ້າໂດຍໃຊ້ເຕັກນິກການສອນບົດສົນທະນາສຳລັບນັກຮຽນສາຍພາສາລາວ ປີທີ 3 ຕາມເກນ $E_1/E_2$=80.68/81.11 ເຫັນວ່າສູງກວ່າເກນທີ່ກຳນົດໄວ.

ສະຫຼຸບໄດ້ວ່າບົດສອນບົດສອນ ການພັດທະນາທັກສະການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ສຳລັບ ນັກສຶກສາປະລິນຍາຕີ ປີທີ3 ວິທະຍາໄລຄູສາລະວັນມີປະສິດທິພາບໃນລະດັບດີຫຼາຍ.

**2. ຜົນການວິເຄາະຄ່າດັດສະນີປະສິດທິຜົນ (E.I)**

**ຕາຕະລາງທີ4**. ປະສິດທິຜົນການຮຽນຂອງນັກສຶກສາປະລິນຍາຕີ ສາຍພາສາລາວ ປີທີ3, ວິທະຍາໄລຄູສາລະວັນ ພາຍຫຼັງການຮຽນ-ການສອນການພັດທະນາທັກສະການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ສຳລັບ ນັກສຶກສາປະລິນຍາຕີ ປີທີ 3

| **ຈຳນວນນັກຮຽນ** | **ຄະແນນສອບກ່ອນເຕັມ (20)** | **ຄະແນນສອບຫຼັງເຕັມ (20)** |
|---|---|---|
| 1 | 12 | 17 |
| 2 | 14 | 20 |
| 3 | 12 | 16 |
| 4 | 10 | 19 |
| 5 | 14 | 18 |
| 6 | 6 | 19 |
| 7 | 13 | 20 |
| 8 | 8 | 18 |
| 9 | 8 | 16 |
| 10 | 8 | 16 |
| 11 | 11 | 19 |
| 12 | 14 | 18 |
| 13 | 13 | 17 |
| 14 | 8 | 19 |
| 15 | 13 | 16 |
| 16 | 13 | 17 |
| 17 | 13 | 18 |
| 18 | 9 | 16 |
| 19 | 10 | 18 |
| 20 | 10 | 17 |
| 21 | 13 | 18 |
| 22 | 14 | 16 |
| 23 | 13 | 17 |
| 24 | 10 | 16 |
| 25 | 13 | 19 |
| 26 | 13 | 18 |
| 27 | 9 | 16 |
| 28 | 16 | 18 |
| 29 | 14 | 19 |
| 30 | 10 | 18 |
| 31 | 10 | 17 |
| 32 | 10 | 18 |
| 33 | 10 | 17 |
| **ລວມ** | **374** | **584** |
| **ສະເລ່ຍ** | **10.39** | **16.22** |
| **ເປີເຊັນ** | **51.94** | **81.11** |
| **E.I** | **0.69** | |

**ຈາກຕາຕະລາງ4:** ພົບວ່າປະສິດທິຜົນຂອງການຮຽນຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ

ພາຍຫຼັງການຮຽນ-ການສອນການພັດທະນາທັກສະການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ສໍາລັບ ນັກສຶກສາປະລິນຍາຕີ ປີທີ 3 ທີ່ມີຄ່າເທົ່າກັບ 0.69

## 3. ຜົນການວິເຄາະທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນ.

ຜູ້ວິໄຈໄດ້ເຮັດແບບວັດທັດສະນະຄະຕິກັບກຸ່ມຕົວຢ່າງຫຼັງຈາກໄດ້ເຮັດແບບທົດລອງສອນຕາມແຜນການຈັດການຮຽນຮູ້ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາສໍາລັບນັກສຶກສາສາຂາພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ເຊິ່ງປະກົດຜົນດັ່ງນີ້:

ຕາຕະລາງທີ 5: ຜົນຂອງການສຶກສາທັດສະນະຄະຕິທີ່ມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ

| ລໍາດັບຂໍ້ | ສະຖິຕິ | | |
|---|---|---|---|
| | $\overline{X}$ | S.D | ແປຄວາມໝາຍ |
| 1 | 4.22 | 1.37 | ເຫັນດີ |
| 2 | 4.36 | 3.90 | ເຫັນດີ |
| 3 | 4.25 | 1.38 | ເຫັນດີ |
| 4 | 4.25 | 1.38 | ເຫັນດີ |
| 5 | 4.25 | 1.38 | ເຫັນດີ |
| 6 | 4.25 | 1.38 | ເຫັນດີ |
| 7 | 4.22 | 1.37 | ເຫັນດີ |
| 8 | 4.08 | 1.38 | ເຫັນດີ |
| 9 | 4.05 | 1.35 | ເຫັນດີ |
| 10 | 4.02 | 1.38 | ເຫັນດີ |
| 11 | 4.30 | 1.39 | ເຫັນດີ |
| 12 | 4.19 | 1.36 | ເຫັນດີ |
| 13 | 4.25 | 1.38 | ເຫັນດີ |
| **ລວມ** | **4.22** | **1.53** | **ເຫັນດີ** |

ຈາກຕາຕະລາງທີ 5: ພົບວ່າທັດສະນະຄະຕິທີ່ມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ມີຄ່າສະເລ່ຍ 4.22 ແລະ ຄ່າຜັນປ່ຽນມາດຖານ 1.53 ໂດຍລວມແລ້ວທັດສະນະຄະຕິທີ່ມີຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາຢູ່ໃນລະດັບ ເຫັນດີ.

# ບົດທີ 5
# ສະຫຼຸບ, ອະພິປາຍຜົນ ແລະ ຂໍ້ສະເໜີແນະ

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອສຶກສາທັກສະໃນການເວົ້າພາສາອັງກິດໂດຍໃຊ້ເຕັກກນິກການສອນບົດສົນທະນາຂອງຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ແລະ ທັດສະນະຄະຕິຕໍ່ການສອນເວົ້າພາສາ ນັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ຊຶ່ງມີລຳດັບການຄົ້ນຄ້ວາ ແລະ ສະຫຼຸບຜົນ ດັ່ງຕໍ່ໄປນີ້:

1. ຈຸດປະສົງຂອງການຄົ້ນຄວ້າ
2. ສະຫຼຸບຜົນການສຶກສາຄົ້ນຄວ້າ
3. ອະພິປາຍຜົນ
4. ຂໍ້ສະເໜີແນະ

## 1. ຈຸດປະສົງຂອງການຄົ້ນຄວ້າ

1.1 ເພື່ອສຶກສາປະສິດທິພາບການນຳໃຊ້ເຕັກນິກການສອນບົດສົນທະນາ ເຂົ້າໃນການສອນເວົ້າພາສາ ອັງກິດສຳຫຼັບຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ຕາມເກນ 80/80

1.2 ເພື່ອສຶກສາປະສິດທິຜົນຂອງການຮຽນຂອງນັກຮຽນ ໂດຍການນຳໃຊ້ເຕັກນິກການສອນບົດ ສົນທະນາ ເຂົ້າໃນການສອນເວົ້າພາສາອັງກິດສຳຫຼັບນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ

1.3 ເພື່ອສຶກສາທັດສະນະຄະຕິຂອງທີ່ມີຕໍ່ການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດ ສົນທະນາສຳຫຼັບນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ

## 2. ສະຫຼຸບຜົນ

ຕໍ່ກັບຄຳຖາມທີ 1 : ການນຳໃຊ້ເຕັກນິກການສອນບົດສົນທະນາເຂົ້າໃນການສອນເວົ້າພາສາອັງກິດ ຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ມີປະສິດທິພາບໃນລະດັບໃດ?

ຜົນການວິໄຈໄດ້ພົບວ່າ ປະສິດທິພາບຂອງບົດສອນ ໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ມີປະສິດທິພາບເທົ່າກັບ 80.68 / 81.11 .

ຕໍ່ກັບຄຳຖາມທີ 2 : ການນຳໃຊ້ເຕັກນິກການສອນບົດສົນທະນາເຂົ້າໃນການສອນເວົ້າພາສາອັງກິດສຳຫຼັບນັກນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ມີປະສິດທິຜົນໃນລະດັບໃດ ?

ຜົນການວິໄຈໄດ້ພົບວ່າ ດັດສະນີປະສິດທິຜົນຂອງການຮຽນດ້ວຍການຈັດການຮຽນ-ການສອນພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາສຳຫຼັບນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນມີຄ່າເທົ່າກັບ 0.60 ຄິດໄລ່ເປັນເປີເຊັນເທົ່າກັບ 60% ຖືວ່າການຮຽນຂອງນັກຮຽນມີຄວາມ ກ້າວໜ້າ

ຕໍ່ກັບຄຳຖາມທີ 3 : ທັດສະນຄະຕິມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ເປັນຄືແນວໃດ?

ຜົນການວິໄຈໄດ້ພົບວ່າ ທັດສະນະຄະຕິທີ່ມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນ ບົດສົນທະນາຂອງ ນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ໂດຍລວມແລ້ວ ນັກຮຽນມີທັດທັດສະນະຄະຕິທີ່ມີຕໍ່ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ແມ່ນຢູ່ໃນລະດັບ ດີຫຼາຍ ເຊິ່ງມີຄ່າສະເລ່ຍ 4.22 ແລະ ຄ່າຜັນປ່ຽນມາດຖານ 1.53.

ສະຫຼຸບໄດ້ວ່າ ການພັດທະນາທັກສະໃນການເວົ້າພາສາອັງກິດໂດຍໃຊ້ເຕັກການິກການສອນບົດສົນທະນາຂອງນັກສຶກສາສາຍພາສາລາວ ປີທີ 3 ວິທະຍາໄລຄູສາລະວັນ ມີປະສິດທິພາບ ຕາມເກນມາດຖານ $E_1/E_2$ = 80.68 / 81.11 ເຫັນວ່າສູງກ່ວາເກນທີ່ຕັ້ງໄວ.

## 3. ອະພິປາຍຜົນ

ການວິໄຈຄັ້ງນີ້ເປັນການຄົ້ນຄວ້າໃນລັກສະນະການທົດລອງແບບ One-Group Ptest-Posttest Design ເພື່ອສຶກສາທັກສະໃນການເວົ້າພາສາອັງກິດ ແລະ ເພື່ອສຶກສາທັດສະນະຄະຕິທີ່ມີຕໍ່ການສອນເວົ້າ ພາສາອັງກິດ ໂດຍໃຊ້ເຕັກການິກການສອນບົດສົນທະນາ ຊຶ່ງໄດ້ແບ່ງການອະພິປາຍອອກເປັນ ຫົວຂໍ້ຕ່າງໆ ຕາມລຳດັບດັ່ງນີ້:

1. ການສຶກສາທັກສະໃນການເວົ້າພາສາອັງກິດຂອງນັກຮຽນ ໂດຍໃຊ້ເຕັກນິກການສອນບົດ ສົນທະນາຜົນການທົດລອງໃຊ້ຄັ້ງນີ້ພົບວ່າ ນັກຮຽນມີທັກສະໃນການເວົ້າພາສາອັງກິດກ່ອນຮຽນມີຄະແນນ ສະເລ່ຍ 51.94 ແລະ ຫຼັງຮຽນສະເລ່ຍ 81.11 ເຊິ່ງຜົນຄະແນນຫຼັງຮຽນສູງກ່ວາກ່ອນຮຽນຈຶ່ງເຫັນໄດ້ວ່າ ທັກສະໃນການເວົ້າພາສາອັງກິດຂອງນັກຮຽນກຸ່ມຕົວຢ່າງກ່ອນເຮັດການຄົ້ນຄ້ວາຕໍ່າ ເນື່ອງມາຈາກການຈັດ ກິດຈະກຳການຮຽນ-ການສອນຂອງຄູຍັງບໍ່ບັນລຸຕາມຈຸດປະສົງ ອີກທັ້ງນັກຮຽນຍັງບໍ່ມີພື້ນຖານດ້ານພາສາ ອັງກິດມາກ່ອນ ເຮັດໃຫ້ນັກຮຽນບໍ່ເຫັນຄວາມສຳຄັນ ຫຼື ປະໂຫຍດຂອງພາສາອັງກິດ ໂດຍສະເພາະນັກຮຽນ ໃນເຂດຊົນນະບົດທີ່ມີການດຳລົງຊີວິດແບບລຽບງ່າຍ ຊຶ່ງມີຄວາມຈຳເປັນໃນການໃຊ້ພາສາອັງກິດຫນ້ອຍທີ່ ສຸດ ດັ່ງທີ່ (ສຸມິດຕາ ອັງວັດທະນະກຸນ, 2540:14-15 ) ກ່າວວ່າ ມີສາເຫດຫຼາຍປະການທີ່ເຮັດໃຫ້ຜົນ. ການຮຽນພາສາອັງກິດຂອງນັກຮຽນຕໍ່າກ່ວາເປົ້າຫມາຍທີ່ກຳນົດເຊັ່ນ: ຄູໃຊ້ວິທີສອນແບບເກົ່າ ການຈັດການ ຮຽນ-ການສອນໂດຍຖືເອົາຕຳລາເປັນຫຼັກ ແລະ ຄູເປັນໃຈກາງ ນັກຮຽນບໍ່ມີໂອກາດປະຕິບັດຕົວຈິງ ທີ່ 3 ສ່ວນຮ່ວມໃນການຮຽນ-ການສອນ ບັນຍາກາດໃນການຮຽນເກີດຄວາມຕຶງຄຽດ ເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນ ແລະ ຄູບໍ່ກະຕຸ້ນໃຫ້ນັກຮຽນ ຮຽນຢ່າງສະໜຸກສະໜານຈຶ່ງເປັນການຍາກທີ່ຈະຮຽນຮູ້ ແລະ ເຮັດໃຫ້ນັກຮຽນມີທັດສະນະຄະຕິບໍ່ດີຕໍ່ການຮຽນວິຊາພາສາອັງກິດ.

ຫຼັງຈາກນັກຮຽນໄດ້ຮັບການຈັດການຮຽນຮູ້ໂດຍໃຊ້ເຕັກນິກການສອນບົດສົນທະນາ ພັດທະນາທັກສະໃນການເວົ້າພາສາອັງກິດ ເຮັດໃຫ້ນັກຮຽນມີຄວາມຫມັ້ນໃຈໃນການໃຊ້ພາສາອັງ ແລະ ນອກຫ້ອງຮຽນ ສອດຄ່ອງກັບແນວຄິດຂອງ (Lebron & Lozada, S. 1, 2012:3) ຊຶ່ງ ການຮຽນສົນທະນາພາສາອັງກິດເປັນການພັດທະນາກິດຈະກຳການຮຽນຮູ້ໃຫ້ປະສົບຜົນສຳເລັດ.

ສະນັ້ນຜູ້ຄົ້ນຄວ້າສາມາດເວົ້າໄດ້ວ່າການສອນເວົ້າພາສາອັ່ງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາໃນຄັ້ງນີ້ສາມາດພັດທະນາທັກສະ ໃນການເວົ້າພາສາອັງກິດຂອງນັກຮຽນໄດ້.

2. ການວິເຄາະຫາປະສິດທິພາບ $E_1$, ຈາກແບບທົດສອບຍ່ອຍທັງ 4 ບົດສອນ ໂດຍໃຊ້ເຕັກນິກສອນບົດສົນທະນາ ສຳຫຼັບນັກສຶກສາສາຍພາສາລາວ ປີທີ 3 ຈຳນວນ 13 ຄົນ, ເຮັດແບບທົດສອບຍ່ອຍມີປະສິດທິພາບຕາມເກນ 80 ຕົວທຳອິດຂອງບົດສອນ ບົດມີຄ່າ $\overline{X}$ = 29.58 : S.D = 3.74 ແລະ $E_1$ = 0.68 ເຫັນວ່າການຮຽນຂອງນັກຮຽນໄດ້ສູງກວ່າເກນທີ່ໄດ້ຕັ້ງໄວ້ ເພາະວ່ານັກຮຽນໄດ້ເອົາໃຈໃສ່ຕໍ່ການ

ການຮຽນ-ການສອນ ໂດຍໃຊ້ເຕັກນິກການສອນບົດສົນທະນານີ້. ການວິເຄາະຫາປະສິດທິຜົນ $E_2$ ການ ຮຽນຂອງນັກຮຽນຕໍ່ກັບການສອນພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາສໍາຫຼັບນັກສຶກສາສາຍພາສາລາວ ປີທີ 3 ເມື່ອນໍາຄະແນນທີ່ໄດ້ຈາກແບບທົດສອບຜົນສໍາເລັດທາງການຮຽນຂອງນັກຮຽນ ເຫັນວ່າ ມີຄ່າ ສະເລ່ຍ $\overline{X}$ 16.22 ; S.D = 1.2.1 ແລະ $E_2$ = 81.11 ເຊິ່ງສູງກ່ວາເກນມາດຖານທີ່ກໍານົດໄວ້ $E_2$ ( 80) ທີ່ກໍານົດໄວ້.

4. ຜົນການວິເຄາະຄ່າດັດສະນີປະສິດທິຜົນ (E.I) ໂດຍການຈັດການຮຽນ-ການສອນພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ເຊິ່ງມີດັດສະນີປະສິດທິປະສິດທິຜົນ E.I = 0.60 ຫຼື ຄິດເປັນ ເປີເຊັນ 60 ສະແດງວ່າຄວາມກ້າວໜ້າທາງການຮຽນຂອງນັກຮຽນແມ່ນສູງກ່ວງເກນທີ່ກໍານົດໄວ້

5. ຜົນການສຶກສາທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນ ໂດຍໃຊ້ເຕັກນິກການສອນບົດສົນ ພົບວ່າ ທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ການສອນ ໂດຍໃຊ້ເຕັກນິກການສອນບົດສົນຢູ່ໃນລະດັບດີ ເຫດຜົນຄື: ການສອນບົດສົນທະນາເຮັດໃຫ້ກິດຈະກໍາການຮຽນ-ການສອນພາສາອັງກິດໜ້າສົນໃຈ ນັກຮຽນມັກການຮຽນ-ການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ການຝຶກເວົ້າພາສາອັງກິດ ໂດຍການສົນທະນາເຮັດໃຫ້ການເວົ້າພາສາອັງກິດຂອງນັກຮຽນສາມາດພັດທະນາໄດ້ ນັກຮຽນມີຄວາມສະໜຸກສະໜານໃນການຮຽນພາສາອັງກິດ, ການຝຶກເວົ້າສົນທະນາທ້າທາຍຄວາມສາມາດຂອງນັກຮຽນ ແລະ ນັກຮຽນມີສ່ວນຮ່ວມໃນກິດຈະກໍາການຮຽນຮູ້ສູງ ສາມາດຄົ້ນພົບຄວາມຮູ້ດ້ວຍຕົນເອງ ເຮັດໃຫ້ເກີດຄວາມຄ່ອງແຄ່ວທາງພາສາ, ມີຄວາມໝັ້ນໃຈໃນການໃຊ້ພາສາອັງກິດໃນການເວົ້າຫຼາຍຍິ່ງຂຶ້ນນັກຮຽນໄດ້ສະແດງຄວາມຄິດເຫັນ ແລະ ມີຈິນຕະນາການ ເກີດທັກສະໃນການເວົ້າພາສາອັງກິດຫຼາຍຂຶ້ນ ເຮັດໃຫ້ນັກຮຽນເກີດຄວາມພາກພູມໃຈໃນຄວາມສາມາດຂອງຕົນເອງ ອີກທັງວິທີການສອນໂດຍໃຊ້ ເຕັກນິກການສອນບົດສົນທະນາ ຊ່ວຍສ້າງທັດສະນະຄະຕິທີ່ດີຕໍ່ການສອນພາສາອັງກິດດັ່ງທີ່ (Krashen. S,D, 1984: 21) ກ່າວວ່າ ທັດສະນະຄະຕິມີຄວາມສໍາພັນກັບການຮຽນຮູ້ພາສາທີ່ສອງ ທັດສະນະຄະຕິ ຊ່ວຍສົ່ງເສີມການຮຽນຮູ້ໃຫ້ຜູ້ຮຽນນໍາພາສາໄປໃຊ້ປະໂຫຍດໂດຍທີ່ນັກຮຽນຈໍາເປັນຕ້ອງເຂົ້າໃຈພາສາ ແລະ ສາມາດນໍາໄປໃຊ້ໄດ້ຢ່າງຖືກຕ້ອງ, ນອກຈາກນີ້ (Savignon, S. J, 1983:110) ກ່າວວ່າ ທັດສະນະ ຄະຕິເປັນຕົວແປທີ່ສໍາຄັນທີ່ສຸດ ທີ່ມີຜົນຕໍ່ການຮຽນຮູ້ພາສາທີ່ສອງຄື: ທັດສະນະຄະຕິຂອງນັກຮຽນມີຜົນຕໍ່ ການຮຽນຮູ້ພາສານັ້ນເອງຈະເຫັນໄດ້ວ່າທັດສະນະຄະຕິມີຄວາມສໍາຄັນຕໍ່ການຮຽນຮູ້ພາສາອັງກິດ ເພາະເມື່ອ ທັດສະນະຄະຕິທີ່ດີຕໍ່ການຮຽນຮູ້ ຜູ້ຮຽນຈະມີຄວາມຮູ້ສຶກທີ່ດີຕໍ່ການຮຽນ, ທັດສະນະຄະຕິຍັງຊ່ວຍກະຕຸ້ນໃຫ້ຜູ້ຮຽນຕ້ອງໃຊ້ພາສາ ແລະ ທັດສະນະຄະຕິທີ່ດີສາມາດຊ່ວຍໃຫ້ນັກຮຽນນໍາການຮຽນຮູ້ໄປສູ່ຄວາມສໍາເລັດ ແລະ ມີຄວາມພະຍາຍາມທີ່ຈະຮຽນຫຼາຍຂຶ້ນ.

ຜ່ານການວິໄຈ ແລະ ວິເຄາະຂໍ້ມູນເຫັນວ່າ ຜົນການວິໄຈເປັນໄປຕາມຄໍາຖາມວິໄຈ ແລະ ສົມມຸດຕິຖານທຸກປະການ.

## 4 ຂໍ້ສະເໜີແນະ

ຈາກການສຶກສາກ່ຽວກັບການພັດທະນາທັກສະໃນການເວົ້າພາສາອັງກິດ ໂດຍໃຊ້ເຕັກກນີ້ ສອນບົດສົນທະນາຂອງນັກສຶກສາສາຍພາສາລາວ ປີທີ 3 ຜູ້ວິໄຈມີຂໍ້ສະເໜີແນະໃນການນໍາຜົນການວິໄຈໄປໃຊ້ ແລະ ຂໍ້ສະເໜີແນະສໍາລັບການຄົ້ນຄ້ວາໃນຄັ້ງຕໍ່ໄປ ລາຍລະອຽດດັ່ງຕໍ່ໄປນີ້:

### 4.1 ຂໍ້ສະເໜີແນະໃນການນໍາຜົນການວິໄຈໄປໃຊ້

ຈາກການວິໄຈຄັ້ງນີ້ ເຫັນວ່າ ການພັດທະນາະທັກສະໃນການເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາ ເຮັດໃຫ້ນັກຮຽນມີທັກສະໃນການເວົ້າພາສາອັງກິດເພີ່ມສູງຂຶ້ນ ແລະ ມີທັດສະນະຄະຕິໃນການສອນ

ເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາຢູ່ໃນລະດັບຂ້ອນຂ້າງດີ ແລະ ເພື່ອໃຫ້ເກີດກິດຈະກຳທາງການສອນເວົ້າພາສາອັງກິດ ໂດຍໃຊ້ເຕັກນິກການສອນບົດສົນທະນາມີປະສິດ ທິພາບຫຼາຍຂຶ້ນຜູ້ຄົ້ນຄວ້າມີຂໍ້ສະເໜີແນະດັ່ງນີ້:

1) ຜົນການວິໄຈເຫັນວ່າ ທັກສະໃນການເວົ້າພາສາອັງກິດຫຼັງຮຽນສູງກວ່າ ກ່ອນຮຽນສະແດງວ່າ ຂັ້ນຕອນການສອນເວົ້າພາສາອັງກິດ ໂດຍການໃຊ້ເຕັກກນິກການສອນບົດສົນທະນາ ເຮັດໃຫ້ນັກຮຽນມີທັກສະໃນການເວົ້າພາສາອັງກິດໄດ້ດີ ດັ່ງນັ້ນຄູຜູ້ສອນຈຶ່ງຄວນນຳການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາ ໄປສອນໃນລຳດັບຊັ້ນອື່ນໆໄດ້ດ້ວຍ.

2) ຜົນການວິໄຈຄັ້ງນີ້ເຫັນວ່າ ທັດສະນະຄະຕິການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການ ສອນບົດສົນທະນາຢູ່ໃນລະດັບຂ້ອນຂ້າງດີ ສະແດງວ່າການສອນເວົ້າພາສາອັງກິດໂດຍໃຊ້ເຕັກນິກການ ສອນບົດສົນທະນາເປັນວິທີການສອນທີ່ ນັກຮຽນໄດ້ຮຽນຢ່າງສະໜຸກສະໜານ ເກີດຄວາມສົນໃຈໃນການ ຮຽນ - ການສອນພາສາອັງກິດ ແລະ ມີທັດສະນະຄະຕິທີ່ດີຕໍ່ການຮຽນ-ການສອນ. ດັ່ງນັ້ນຄູຄວນສຶກສາຂະບວນການສອນເວົ້າພາສາອັງກິດ ແລະ ນຳໄປໃຊ້ໃນການຈັດການຮຽນຮູ້ ຈະເຮັດໃຫ້ນັກຮຽນມັກຮຽນພາສາອັງກິດຫຼາຍຂຶ້ນ.

3) ການສອນໂດຍການໃຊ້ເຕັກນິກການສອນບົດສົນທະນາ ນັກຮຽນອາດຈະບໍ່ລຶ້ງເຄີຍກັບການສອນເຫຼົ່ານັ້ນ ຄູຄວນໃຫ້ໂອກາດນັກຮຽນໄດ້ປັບຕົວ ແລະ ໃຫ້ການເສີມແຮງກະຕຸ້ນໃຫ້ນັກຮຽນກ້າທີ່ຈະໃຊ້ພາສາກ້າສະແດງອອກເພື່ອໃຫ້ຂະບວນການຮຽນ-ການສອນເປັນໄປຢ່າງມີປະສິດທິພາບ ແລະ ເກີດປະສິດທິຜົນ.

4) ໃນຂັ້ນຕອນຂອງການເຮັດກິດຈະກຳການສົນທະນາ ຜູ້ສອນອາດຈະໃຊ້ເວລາກວດສອບຄວາມເຂົ້າໃຈຢ່າງຊັດເຈນເພື່ອໃຫ້ນັກຮຽນເຂົ້າໃຈ ແລະ ສາມາດປະຕິບັດກິດຈະກຳໄດ້ຢ່າງມີປະສິດທິພາບ.

5) ໃນການຈັດກິດຈະກຳການສອນເວົ້າຂອງຄູ ຄວນໃຊ້ພາສາອັງກິດໃນຫ້ອງຮຽນໃຫ້ຫຼາຍຂຶ້ນສ້າງຄວາມລຶ້ງເຄີຍໃນການຟັງ ແລະ ການເວົ້າພາສາອັງກິດ ເຮັດໃຫ້ນັກຮຽນກ້າເວົ້າພາສາອັງກິດ ມີຄວາມຄ່ອງແຄ້ວທີ່ຈະໂຕ້ຕອບສະແດງອອກຢ່າງເປັນທຳມະຊາດ.

## 4.2 ຂໍ້ສະເໜີແນະສຳລັບການເຮັດບົດວິໄຈໃນຄັ້ງຕໍ່ໄປ

ເພື່ອເປັນປະໂຫຍດກ່ຽວກັບຜູ້ວິໄຈກ່ຽວກັບການນຳໃຊ້ເຕັກນິກການສອນບົດສົນທະນາ ໃນການພັດທະນາທັກສະໃນການເວົ້າພາສາອັງກິດຕໍ່ໄປ ແລະ ຜູ້ວິໄຈຂໍສະເໜີດັ່ງຕໍ່ໄປນີ້:

1) ຄວນສຶກສາທັດສະນະໃນການເວົ້າພາສາອັງກິດໂດຍການໃຊ້ເຕັກນິກການສອນບົດສົນທະນາໃນລະດັບຊັ້ນອື່ນໆເພື່ອໃຫ້ໄດ້ຜົນການສຶກສາທີ່ກວ້າງຂຶ້ນເຊັ່ນ: ຄວນເຮັດໃນລະດັບຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ.
2) ຄວນມີການສຶກສາພັດທະນາທັກສະໃນການເວົ້າພາສາອັງກິດໂດຍໃຊ້ເຕັກນິກການສອນບົດສົນທະນາໃນໄລຍະຍາວເພື່ອສຶກສາວ່າຫາກຜູ້ຮຽນໄດ້ຝຶກໃຊ້ພາສາໃນໄລຍະທີ່ດົນພໍສົມຄວນນັກຮຽນຈະມີການພັດທະນາທັກສະໃນການເວົ້າພາສາອັງກິດໄດ້ຫຼາຍຍິ່ງຂຶ້ນ.

# ເອກະສານອ້າງອີງ

# ເອກະສານອ້າງອີງ


*ກະຊວງສຶກສາທິການ ແລະ ກິລາ* (2008). ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ 2006 - 2015. ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາ.

*ກຸນທະລີ ໄວຍະບົດ.* (2545). ຫຼັກການເວົ້າ, ກຸງເທບ: ໂອ ເອສ໌ ພິ້ນຕິ້ງເຮົາ,

*ງາມພຶ້ງ ຮຸ່ງໂລດ.* (2548). ສະບາຍໆເມື່ອຈັບໄມເວົ້າອັງກິດ. ກຸງເທບ: ສະມາຄົມສົ່ງເສີມເທັກໂນໂລຢີ (ໄທ-ຍີ່ປຸ່ນ).

*ສຸພັດທາ ອັກສະລານຸເຄາະ.* (2532). ການສອນທັກສະພາສາແລະວັດທະນະທຳ, ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

*ສຸມິດຕາ ອັງວັດທະນະກຸນ.* (2540). ວິທີການສອນພາສາອັງກິດ ໃນພາສາຕ່າງປະເທດ. ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

*ສຸວິມົນ ຕິການັ້ນ.* (2548). ລະບຽບວິທີການວິໄຈທາງສັງຄົມສາດ:ແນວທາງສູ່ການປະຕິບັດ. ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

*ເສົາວະລັກ ແຊ່ລີ້.* (2546). ການສຶກສາລັກສະນະພາສາໃນການສົນທະນາກຸ່ມຍ່ອຍ. ກຸງເທບ: ບໍ່ລະບຸສະຖານທີ່ພິມ

*ຊຸິນທິຊາ ບຳລຸງລັກ.* (2539). ການວິເຄາະພາສາລະດັບຂໍ້ຄວາມປະເພດຕ່າງໆໃນພາສາໄທ. ກຸງເທບ: ບໍ່ລະບຸສະຖານທີ່ພິມ

*ຊັດວະດີ ສອນລໍາ.* (2544). ການໃຊ້ພາສາໃນຫ້ອງສົນທະນາ ເພື່ອສຶກສາລັກສະນະການໃຊ້ພາສາໃນຫ້ອງສົນທະນາທາງອິນເທີແນັດຕາມແນວທາງຂອງການວິເຄາະພາສາ ລະດັບຂໍ້ຄວາມ. ວາລະສານສິລະ

*ປະສາດ. ປິຍາພອນ* ວົງອະນຸຕະໂລດ. (2545). ຈິດຕະວິທະຍາການສຶກສາ, ກຸງເທບ: ສູນສື່ສະເລີມກຸງເທບ.

*ປັດຊະນາ ອາພາກຸນ* , ກຸນັ້ນ ລັດຕະນະແສນວົງ. (2540). ສິລະປະການໃຊ້ພາສາການເວົ້າການຂຽນ. ກຸງເທບ: ບໍ່ລະບຸສະຖານທີ່ພິມ

*ພວງລັດ ທະວີລັດ.* (2543). ວິທີການວິໄຈທາງພຶດຕິກຳສາດແລະສັງຄົມສາດ. ກຸງເທບ: ສຳນັກທົດສອບທາງການສຶກສາແລະຈິດຕະວິທະຍາ ມະຫາໄລສີນະຄະລິນວິໂລດ.

*ໄພລັດ ວົງນາມ.* (2551). ການວິເຄາະຂໍ້ມູນດ້ວຍໂປຣແກຣມລີເລດ. ກຸງເທບ: ບໍ່ລະບຸສະຖານທີ່ພິມ

*ມະຍູລີ ສະວັດດີເມືອງ.* (2540). ການສຶກສາພາສາສົນທະນາທາງໂທລະສັບ ທາງສະຖານີວິທະຍຸຂ່າວສານ ແລະການຈະລາຈອນ. ກຸງເທບ: ບໍ່ລະບຸສະຖານທີ່ພິມ

*ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ.* (2543). ການວັດດ້ານຈິດພິໄສ. ກຸງເທບ: ສຸວີລິຍະສາດ.

*ລັດດາ ແພພັດພິສຸດ.* (2548). ການເວົ້າ, ພະນະຄອນສີອາຍຸດທະຍາ: ມະຫາໄລເທັກໂນໂລຍີ ລາດສະມຸງຄຸນ

*ສຸວັນນະພູມ. ວິຊິດ ສຸລັດເຮືອງໄຊ* (2551). ຊຸດວິຊາ 400602 ການວິໄຈແບບປະຕິບັດໃນຄູສຶກສາ 1 ສ່ວນທີ 1 ພື້ນຖານການວິໄຈທາງການສຶກສາ, ນິວລະພາ: ຄະນະສຶກສາສາດ ມະຫາວິທະຍາໄລນິວລະພາ.

*ອັດສະລາ ວົງໂສທອນ.* (2538). ແນວທາງການສ້າງຂໍ້ສອບພາສາ. ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

*Brown, G. & Yule, G.* (1983). Teaching the spoken language. Cambridge: Cambridge University press

*Brown, J.* (1994). Professional reading circle: toward a collaborative for lifelong learning, Retrieved august 15, 2014, from rmit: www.rmit.edu.au

*Brown, J.* (2008). Communicative Competence. Englewood cliffs. New Jersey: Prentice Hall

*Burns, A. & Joyce, H*. (1997). Focus on speaking. Sydney

*Bygate, M.* (1987). Speaking. Oxford: Oxford University Press.

*Bygate, M.* (1993). Oral second language abilities as expertise. In K. Johnson (Ed). Expertise in second language learning and teaching. Amsterdam: John Benjamins.

*Byrne, D.* (1987). Teaching oral english. London: Longman group.

*Cameson, D.* (2001). Working with spoken discourse. London: Sage.

*Celce-Murcia. M., Dornyei, Z. & Thurrell, S.* (1997). Direct appoaches in L2 instruction:A turning point in communicative language teaching. TESOL Quarterly.

*Cohen. A. D.* (1994). Assessing languagr ability in the classroom. Boston: Heinle & Heinle.

*Domyei, Z., & Thurrell, S.* (1992). Conversation and dialogues in action. Sydney: Prentice Hall.

*Edwards, A.* (1957). Techniques of attitude scale construction. New york: Appleton-Century Crofts.

*Feyten, C. M.* (1991). The power of listening ability. An overlooked dimension in language acquisition. The Modern Langauge Journal, 75, (173-180).

*Finocchiaro, M. & Bonomo, C. J.* (1973). The functional-national approach: from theory to practice. New york: Oxford University Press.

*Good, C. V.* (1959). Dictionary of education. New York: McGraw-Hill.

*Graddol, C., Cheshire, J. & Swan, J.* (1994). Describing language. Buckingham: Open University Press.

*Harris, D. P.* (1988). Hesting english as a second language. Bombay: McGraw-Hill.

*Hatch, F. & Long. M.* (1980). Discourse analysis, What's that.? Rowley. Mass: New Bury

House.

*Heaton, J. B.* (1990). Classroom testing. London: Longman group UK.

*Hilgard, F.* (1967). Introduction to Psychology. New york: Harcourt. Brace and World Inc.

*Hinds, J.* (1986). Talking: an analysis of discourse. Tokyo.

*Hinds, J.* (1988). The in ternational symposium on language and linguistics.

*Hodgdon, L.* (2007). Six tips for teaching conversation skill with visual strategies. Retrieved August 22, 2014, from http://www.Use visual strategies.com.

*Jangarun, K.* (2004). Conversational analysis of language used in E-mail chats and face to face conversation

*Kagan, J. & Haveman, A.* (1968). Psychology. New York: Harcourt. Brance Javavonich,

*Krashen, S. D.* (1984). Principle and practice in second language acquisition Oxford: Pergamum Press

*Kuzma, D.* (2008). Teaching idea for conversation skills. Minneapolis: Minesota.

*Lebron & Lozada, S. I* (2012). Learning conversational english with student-generated podcasts.

*Levinson, S. C.* (1983). Pragmatic. Cambridge: Cambridge University Press.

*Lightbown. P.* (1998) The important of timing in focus on form. In focus on form in classroom second language acquisition by C.Doughty & J. Williams. New york: Cambridge University.

*Littlewood, W.* (1995). Communicative language teaching. Britain: Cambridge University Press.

*Newcomb, M.* (1954). Social Psychogy. Newyork: The Dryden Press.

*Oller, L. W.* (1979). Language test at school. London: Longman

*O'Loughlin, K.* (2001). The equivalence of direct and semi-direct speaking tests. Great Britain:Cambridge University Press.

*Richards, J. C.* (1983). The language teaching matrix. Cambridge: Cambridge University.

*Sacks, H., Schegloff, E. A. & Jefferson, G.* (1978). A Simplest Systematies for the Organization of Turn-taking for Conversation.

*Sandbox, L.* (2006). Teaching Conversation Skills. Retrieved January 25, 2014, from Sandbox : www.Sandbox-Learning.com

*Savignon, S. J.(*1983). Communicative competence: An experiment of foreign language

Teaching Philadaphia: The center for curriculum Development.

*Ur, P*. (1996). Course in language teaching: Practice and Theory. Cambridge: Cambridge University.

*Widdowson, H. G.* (1990). Teaching Language as Communication. Oxford: Oxford University Press.

# ເຄື່ອງມືໃນການວິໄຈ

# Lesson Plan 1

Subject: English — Topic: Greeting and Introducing People

Level: ……………… — Time: 2 Hours

1. **Concept: Greeting and Introducing People are essential skill in engaging in conversation.**

**2. Objectives**

**2.1. Terminal Objective**

- Student will be able to greet people and introduce themselves to one another

**2.2. Behavioral Objectives**

- Student will be able to:

2.2.1. Greet people in various situations correctly and appropriately.

2.2.2. Introduce themselves to their teacher and friends.

2.2.3. Introduce someone to each other.

2.2.4. Ask and answer questions about someone.

**3. Content**

3.1. Function: Greeting and introducing people.

3.2. Skill: Speaking

3.3. Vocabulary: Greeting, introducing, good morning, good afternoon, good evening, good night. Hello, Hi, name, age, countries and nationality.

3.4. Structures: Present Simple Tense (S+V1)

**4. Teaching and Learning Procedures**

4.1.Opening

4.1.1. The teacher leads in the lesson by asking 20 questions about daily routines ( activities in the morning, etc.) For example:

1. Do you get up early in the morning?
2. What time do you get up in the morning?
3. Do you get up late on Sunday morning?
4. What time do you usually get up on Sunday morning?

5. What do you do in the morning?

6. What do you have for breakfast?

7. What time do you go to school?

8. How do you go to school?

9. How long does it take?

10. How far is it?

4.1.2. The students response to the questions

4.1.3. The teacher distributes the example of conversation to students as follows:

A: Good morning. I'm Maria. What's your name?

B: I'm Somkid. It's nice to meet you.

A: it's nice to meet you too. How are you today?

B: I'm fine. Thank you and you?

A: I'm well, thanks.

B: Excuse me, how old are you?

A: I'm 15 years old. And you?

B: I'm 14 years old. Where are you from?

A: I'm from Nonsrithong and you?

B: I'm from Ban Pho.

A: By the way, I've got to go. See you later. Bye.

B: See you! Good bye.

4.1.4. The teacher present the element of the conversation which is openings, turn- taking, interrupting, adjacency pairs, conversational routines, topic shift and closings and evaluation in conversation.

4.1.5. The teacher greets students, e.g., good morning, good afternoon, good evening, Hello, Hi.

4.1.6. The teacher tells students to greet each other in pair.

4.1.7. The teacher introduces and shows how to open the conversation. For example: Good

morning, good afternoon, good evening, Hello, Hi, excuse me, forgive for asking, I hope you don't mind asking.

4.1.8. The teacher asks the student to practice opening the conversation.

4.2.Turn - taking

4.2.1. The teacher tells to the students hoe they participate in conversation

4.2.2. The teacher presents new vocabulary and expressions to be used in the conversation card I and show facial expressions.

**Conversation Card 1**

| **Conversation Card A** | **Conversation Card B** |
|---|---|
| Good morning. I'm Maria. What's your name? | ..........I'm...... It's nice to meet you too |
| It's nice to meet you too…………………. How are you today? | I'm .......... Thank you and you? |
| I'm ................ thanks | |

4.2.3. The teacher shows how to use body language in the conversation.

4.2.4. The teacher demonstrates how to participate in the conversation. And also how to take turn in the conversation card 2.

| **Conversation Card A** | **Conversation Card B** |
|---|---|
| How old are you? | I'm……….. years old. And how old are you? |
| I'm................. years old. | |

4.2.5. The teacher starts the conversation using the conversation card 3A and one student responds by conversation card 3B.

**Conversation Card 3**

| Conversation Card A | Conversation Card B |
|---|---|
| Where are you from? | I'm from..... and where are you from? |
| I'm from ... | |

4.2.6. The teacher explains more while they respond to the answer, they have to make eye contact to other interlocutors.

4.2.7. The teacher distributes word cards 1, 2 and 3 to student in pairs.

4.2.8. The students practice speaking the conversation with the interlocutor

**4.3.Interrupting**

4.3.1. The teacher teaches how to "interrupt" while performing the conversation. For example: Excuse me, pardon me, I am sorry to trouble you, May I interrupt you? etc.

4.3.2. The students practice pronouncing words or expressions when interrupting in conversation card 4.

**Conversation Card 4**

| Conversation Card A | Conversation Card B | Conversation Card c |
|---|---|---|
| Excuse me, let's me introduce my friend to you. This is Jack. Jack, this is Jane. | It's nice to meet you, Jane. | It's………………..... too. |

4.3.3. The students practice interrupting words and exp errupting words and expressions in group.

**4.4.Adjacency pairs**

4.4.1. The teacher distributes the new conversation card Conversation Card 5 to all students

| Conversation Card A | Conversation Card B |
|---|---|
| Well, where are you from? | I'm from............... and where are you from? |
| I'm from .......................... | |

4.4.2. The students practice speaking conversation from the conversation card 5.

4.4.3. The teacher teaches using the fillers uh-huh, Well, Umm, oh, etc.

4.4.4. The students practice speaking the complete conversation card 5 in pair.

**4.5.Conversation routines**

4.5.1. The teacher teaches how to write the complete conversation from the conversation cards 1, 2, 3 and 5.

**Conversation Card 6**

| Conversation Card A | Conversation Card B |
|---|---|
| Good morning, I'm Maria. What's your name? | …………I'm ........ It's nice to meet you too |
| It's nice to meet you too<br>………………………<br>How are you today? | I'm ............ Thank you and you? |
| I'm ................ thanks | |
| How old are you? | I'm ........... years old. And how old are you? |
| I'm ………... years old. | |
| Where are you from? | I'm from............. and where are you from? |
| I'm from ....... | |
| Well, where are you from? | I'm from ……………… and where are you from? |
| I'm from………………………. | |

4.5.2. The whole class practice to speak all expressions in the conversation card 6. Then the teacher lets them practice speaking in pair and take turn.

**4.6.Topic Shift**

4.6.1. The teacher teaches the “topic shift" in conversation, *e.g., by the way, that reminds me of ... I just thought of something ...., oh while I remember..etc.*

4.6.2. The whole class practice speaking all those words and expressions in conversation card 7

**Conversation Card 7**

| Conversation Card A | Conversation Card B | Conversation Card c |
|---|---|---|
| Excuse me, let's me It's nice to meet you.<br>This is Jack. Jack, this is Jane. | It’s nice to meet you, Jane | ..................................too. |
| - | Well, where are you from? | ........where are you from? |
| - | I'm from ............ | By the way, I've got to go too you |
| - | .................. Good bye | You too<br>………………………… |

**4.7.Closing and Evaluation**

4.7.1. The teacher teaches the words and expression in closing conversation card 8, e.g., *well, that's all, see you again, good bye, have a nice day, I'll see you soon*

**Conversation Card 8**

| Conversation Card A | Conversation Card B | Conversation Card C |
|---|---|---|
| Excuse me, let's me<br>introduce my friend to you.<br>This is Jack. Jack, this is Jame | It's nice to meet you, Jane. | ………………………….too. |
| - | Well, where are you from? | ......... where are you from? |
| - | ..................... Good bye | Thank you. You too..... |

47.2. The student practice writing the complete conversation from conversation cards 1-8.

4.7.3. The teacher asks student to perform the conversation to perform the conversation that they've written in pair in front of the class as illustrated as in conversation card 9.

**Conversation Card 9**

| **Conversation Card A** | **Conversation Card B** | **Conversation Card C** |
|---|---|---|
